CHAMPA 占芭 ຈຳປາ
04/2015 ສະບັບທີ 115




# ພູອູອີຂອງແຂວງຟູຈ້ຽນ

# ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງ

# ສ້າງຕຶກອາຄານດຶງດູດລູກຄ້າມາ ຊຸກດັນນະຄອນຫຼວງເວງແຈັນຫັນເປັນສາກົນ

ISSN 1673-3266

Value Related To History
Creation Leading To Future

# 心以致遠
# 行于維新




ເກີດມາຈາກປີ 1912

## ນໍ້າໃຈກວ້າງຂວາງສູງສົ່ງ
## ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871—96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

ບໍລິສັດເຮືອນແປ່ນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕົວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ: ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບ ສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈິວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ວນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

万杰彩钢

# 老挝万杰彩钢活动板房有限公司



















Tel：021 720509 ；020 54606278 （chinese ） 020 55557178 （Lao ）

Mob：0086 13758972039 （China

ໂຮງແຮມເມືອງທອງ

Muangthong Hotel



孟通酒店

孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。

房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适

自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普：巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上 3.免费早餐 4.可以在酒店办登机手续和出机票 5.可用车接送琅勃拉邦机场到酒店。






www.muangthonglpb.com

ການບິນລາວ
Lao Airlines

ຈຳປາໂຮລິເດ
Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຂັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານໍ້າຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ,ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌,ໂມຣິດ,ກີເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ.“ຍີ່ຫໍ້ດັງວິສະວະກຳກໍ່ສ້າງຢຸນນານ”ໄດ້ກາຍເປັນ“ຍີ່ຫໍ້ດັງທີ່ມີຊື່ສຽງ”ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.




ວັນທີ 15 ເດືອນ 3 ,ກອງປະຊຸມສະພາຜູ້ແທນປະຊາຊົນທົ່ວປະເທດຈີນຄັ້ງທີ 3 ສະໄໝທີ 12 ໄດ້ອັດລົງຢູ່ຫໍສະພາປະຊາຊົນທີ່ປັກກິ່ງ

3月15日，第十二届全国人民代表大会第三次会议在北京人民大会堂举行闭幕会　新华社 图

# ສາລະບານ

04/2015 ສະບັບທີ 115





## ສາລະຄະດີພິເສດ 本刊特稿

08 .ສ້າງຕຶກອາຄານດຶງດູດລູກຄ້າມາ ຊຸກດັນນະຄອນຫຼວງວຽງຈັນຫັນເປັນສາກົນ

## ຄວາມໄຝ່ຝັນຂອງຈີນ 中国梦

14 .ທ່າຊູ່ໂຈ່ວ

## ປະຕູເມືອງຈີນ 中国之窗

16 .ເປີຍຣາຍະ ກະແສຟອງຂື້ນພວມເປັນເວລາແລ່ນຄື່ນ

## ການໄປມາຫາສູ່ກັນສັນຖະວະໄມຕີຈິດ 友好往来

18 .ສູນວັດທະນະທຳຈີນປະຈຳລາວຈັດງານສະແດງສິລະປະ "ສຸກສັນວັນປີໃໝ່ຈີນ"

20 .ງານທ່ອງທ່ຽວວັດທະນະທຳຊາຍແດນບໍ່ເຕ່ນລາວ-ບໍ່ຫານຈີນຄັ້ງທຳອິດຈັດຂື້ນຢ່າງໃຫຍ່ໂຕມະໂຫລານ

24 .ການລົງທຶນໂດຍກົງຂອງຕ່າງປະເທດໃນຂະແໜງການໂທລະຄົມມະນາຄົມ ສປປ ລາວ 2013

28 .ອົງກອນກວດກາຊາຍແດນຈີນ-ລາວດຳເນີນການພົບປະທາງດ້ານກິດຈະກຳປ້ອງກັນຊາຍແດນ

30 .ບໍລິສັດກາເຟຊາງເຊີນດາແຂວງຜົ້ງສາລີກຳລັງພັດທະນາຢ່າງວ່ອງໄວ

## ລວມຈຸດຢຸນນານ 聚焦云南

34 .ຮ່ວມກັນລົມກັນກ່ຽວກັບການພັດທະນາຢຸນນານໃຕ້ສະພາວະປົກກະຕິແບບໃໝ່











## ວິສະວະກຳກໍ່ສ້າງຢຸນນານ 云南建工

38 .ເພີ່ມທະວີການລົງທຶນ ລົງເລິກຊຸກຍູ້ການທຸລະກິດ ແລະ ການລະດົມທຶນພ້ອມກັນ

## ການທ່ອງທ່ຽວທົ່ວສະນາຈອນ 旅游纵横

44 .ພູອູອີຂອງແຂວງຝູຈ້ຽນ

## ລຽບຊົມວັດທະນະທຳ 文化博览

48 .ບູຮານສະຖານລາຊະທານີຊ້າງຕູ່ຂອງລາຊະວົງຢວນ

## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校

50 .ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງ

## ປະຊາຊາດຈີນ 中华民族

52 .ເພງຕ້າເກີ່ຂອງເຜົ່າຕົ່ງ

## ຮຽນພາສາຈີນ 学汉语

54 .ຮຽນພາສາຈີນ





发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86−871−64112975
办公室电话：86−871−64101644
传真：86−871−64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856−21−254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673−3266
ລະຫັດວາລະສານປະເທດຈີນ: CN53−1200/D
ສະຖານທີ່: ຖະໜົນທວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86−871−64112975　64101644
ແຟກ: 86−871−64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີ ໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ￥10

主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　张红平　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　吴静波　田虎青　海　江

总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦
编辑部副主任　苏雯雯
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳　杨　滢
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　施艳琼
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ　ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ　ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ　ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ　ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່　ຈາວຈີນ　ເມົາເວີນກົວ
ທີ່ປຶກສາ　ຈ່າງຫົງພີງ　ຊຽນຢູຍໄຊ　ໄຊຊຸນແຊງ
　　　　　ຈ່າງຢູ້ຍໄຊ　ລີລຽນປິ່ນ　ລິວຢົງ
ຜູ້ອຳນວຍການໃຫຍ່　ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່　ອູຈິນໂປ　ທຽນຫູຊິນ　ໄຮຈຽງ
ຫົວໜ້າບັນນາທິການໃຫຍ່　ຢາງຢູນ
ຫົວໜ້າພິມຈຳໜ່າຍ　ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ　ຫວ່າງເວີຍຢູນ
ຫົວໜ້າບັນນາທິການ　ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ　ຊູ່ເວີນເວີນ
ຜູ້ແປພາສາລາວ　ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
　　　　　ຫຼີຊຽວຢວນ　ອຸດົມສິນ　ລິວເຢີນເຫີ
ຜູ້ກວດແກ້ພາສາລາວ　ລິວເຢີນເຫີ
ບັນນາທິການພາສາລາວ　ປາຍຍຽນ　ຢາງຢິງ
ຜູ້ຄຸມງານຝ່າຍສິລະປະ　ຈູ້ສິນ
ຜູ້ຄຸມງານຝ່າຍອິນເຕີເນັດ　ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸມງານ　ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ　ລີທາວ　ບັນນາທິການ　ລີເວີນຈູນ　ຊື່ຢຽນສົງ
ຫົວໜ້າພະແນກແຈກຈ່າຍ　ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ　ແຊງລົງ
ພະນັກງານຝ່າຍປົກຄອງ　ລູຢຸຍ　ເຫຼຢູລານ

文 / 刘仁和 王志谦 汪伟云 图 / 云南建工集团有限公司

# ສ້າງຕຶກອາຄານດຶງດູດລູກຄ້າມາ ຊຸກດັນນະຄອນຫຼວງວຽງຈັນຫັນເປັນສາກົນ

## ---ສູນການຄ້າສາກົນນະຄອນຫຼວງວຽງຈັນລາວເປີດບໍລິການຢ່າງໃຫຍ່ໂຕມະໂຫລານ



ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີລາວຂຶ້ນກ່າວຄຳປາໄສ
老挝国家副总理宋沙瓦·凌沙瓦致辞

## 筑巢引得凤凰来 助推万象国际化

### ——老挝万象国际商业中心隆重开业

2015 年 3 月 28 日，由云南建工集团有限公司、云南海外投资有限公司与老挝吉达蓬集团公司共同投资建设的老挝万象国际商业中心（以下简称“万象中心”）开业。迄今为止，这也是老挝建成的首个现代化大型商业中心。

老挝党中央政治局委员、老挝国家副总理宋沙瓦 · 凌沙瓦，万象市市长辛拉冯 • 库派吞，中老合作委员会副主席维吉，中国驻老挝大使关华兵，云南建工集团有限公司党委书记、董事长陈文山，云南省海外投资有限公司董事长臧庆虎，老挝吉达蓬集团公司总经理姚宾等出席了当日下午举行的开业庆典。

“万象中心”的投资建成，将为老挝人民提供最好的购物体验和服务，为老挝接待世界各国贵宾提供有力的硬件和软件支持，尤其是为老挝旅游业发展插上了腾飞的翅膀，同时也为首都万象日益国际化增添了一张靓丽的新名片。

老挝党中央政治局委员、老挝国家副总理宋沙瓦 · 凌沙瓦在致辞时表示，“万象中心”商场大大提升了万象市民的生活品质，使首都万象城市化和国际化水平进一步提高，也有力助推老挝旅游市场发展。他还对包括云南建工在内的众多中资公司在老挝投资兴建的各类项目表示感谢，赞赏这些项目对促进老挝经济社会发展做出的重要贡献。他用中文鼓励更多中资企业到老挝投资，“我知道中国正在大力推动企业‘走出去’战略，老挝将会创造更多有利条件吸引更多中国企业前来投资兴业。”

云南建工集团有限公司党委书记、董事长陈文山在致辞中说，云南建工集团有限公司在老挝辛勤耕耘十八载，承建了第 25 届东南亚运动场馆、北部饲料加工厂、万象东昌酒店、亚欧峰会大酒店、塞色塔综合开发区等十余个代表性项目，多次获得老挝国家劳动勋章和老挝发展勋章等国家级荣誉。“万象中心”于 2012 年 3 月开工奠基，历经 3 年建设，于 2015 年泼水节前夕献礼老挝，再次印证了云南建工对“筑精品工程，建幸福生活”的不懈追求。

“万象中心”成功引进大量国际知名品牌，奠定了商场在万象独一无二的品牌地位。目前签约入驻的品牌有：中国银行万象分行；印尼铂金影院；浪琴、古驰、天梭、美度、雷达、欧米茄等手表；兰蔻、迪奥、雅诗兰黛、香奈儿、资生堂、CK、伊芙 • 黎雪、思亲肤等国际知名化妆品；ZARA、蔻驰、皮尔卡丹、佐丹奴、百丽等国际著名服装鞋包品牌；以及耐克、阿迪达斯、李宁等众多国际知名运动品牌。我们与来自瑞士、意大利、新加坡、韩国、香港、泰国、老挝、印度尼西亚、越南、中国等 10 余个国家和地区、120 余名商家共同打造老挝首屈一指的城市综合体。

陈文山表示，“万象中心”一期将为老挝直接提供 300 余个就业岗位，带动各相关行业的发展与提升，助力“一带一路”战略实施，促进大湄公河次区域的经济发展，是中老两国人民友好往来、精诚合作结出的丰硕果实。



ທ່ານ ເຊິນເວີນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດຂຶ້ນກ່າວຄຳປາໄສ
云南建工集团有限公司党委书记、董事长陈文山致辞



ທ່ານນາງ ອໍລະໄທ ສັນຕິຄົງຄາ ຜູ້ອຳນວຍການໃຫຍ່ກຸ່ມບໍລິສັດກຣິດຕະພົງລາວຂຶ້ນກ່າວຄຳປາໄສ
老挝吉达蓬集团公司总经理娥拉泰 · 珊迪空卡致辞

ວັນທີ 28 ມີນາ 2015 ສູນການຄ້າສາກົນນະຄອນຫຼວງວຽງຈັນລາວ(ຕໍ່ໄປເອີ້ນຫຍໍ້ວ່າ,ວຽງຈັນເຊັນເຕີ) ສ້າງຂຶ້ນໂດຍກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ,ບໍລິສັດລົງທຶນຢູ່ຕ່າງປະເທດຢຸນນານຈຳກັດ ແລະ ກຸ່ມບໍລິສັດກຣິດຕະພົງຮ່ວມກັນກໍ່ສ້າງນັ້ນໄດ້ເປີດບໍລິການຢ່າງຄຶກຄື້ນ.ອັນນີ້ແມ່ນສູນການຄ້າຂະໜາດໃຫຍ່ທັນສະໄໝແຫ່ງໜຶ່ງຢູ່ລາວທີ່ໄດ້ສ້າງຂຶ້ນ.

ທ່ານສົມສະຫວາດ ເລັ່ງສະຫວັດ,ກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ,ຮອງນາຍົກລັດຖະມົນຕີແຫ່ງລັດຖະບານລາວ,ທ່ານສິນລະວົງ ຄຸດໄພທູນ,ເຈົ້າຄອງນະຄອນຫຼວງວຽງຈັນ,ທ່ານວິຈິດ ຊິນດາວົງ,ຮອງປະທານຄະນະກຳມະການຮ່ວມມືລາວຈີນ,ທ່ານ ກວນຮວາປີງ,ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນ ປະຈຳ ສປປ ລາວ,ທ່ານ ເຊິນເວີນຊານ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ,ທ່ານ ຈາງຊິນຫູ ປະທານບໍລິສັດລົງທຶນຢູ່ຕ່າງປະເທດຢຸນນານຈຳກັດ,ທ່ານ ຢາວປີງ ປະທານກຸ່ມບໍລິສັດກຣິດຕະພົງລາວ ແລະ ທ່ານອື່ນໆ ໄດ້ເຂົ້າຮ່ວມພິທີເປີດບໍລິການໃນຕອນບ່າຍມື້ນັ້ນ.




ວັນທີ 28 ມີນາ,ແຂກຜູ້ມີກຽດທັງຫຼາຍຖ່າຍຮູບລວມເປັນທີ່ລະນຶກໃນພິທີເປີດງານສູນການຄ້າວຽງຈັນເຊັນເຕີຂອງນະຄອນຫຼວງວຽງຈັນ
3 月 28 日，在老挝首都万象，嘉宾们在“万象中心”商场开业庆典仪式上合影　新华社 图

ການລົງທຶນສ້າງສຳເລັດວຽງຈັນເຊັນເຕີຈະສະໜອງຄວາມສຳຜັດແຫ່ງການບໍລິການດີທີ່ສຸດສຳລັບການຊື້ເຄື່ອງຊື້ຂອງໃຫ້ແກ່ປະຊາຊົນລາວ ແລະ ສະໜອງການສະໜັບສະໜູນທາງຣາດແວ ແລະ ຊອບແວຢ່າງແຂງແຮງເພື່ອປະເທດລາວໃນການຕ້ອນຮັບແຂກຜູ້ມີກຽດຈາກບັນດາປະເທດໃນໂລກ, ໂດຍສະເພາະແມ່ນໃຫ້ແກ່ການພັດທະນາທ່ອງທ່ຽວລາວປັກປີກບິນເຈີດໃນທ້ອງຟ້າ.ພ້ອມກັນນັ້ນ,ທັງເພີ່ມຕື່ມນາມບັດໃໝ່ທີ່ສວຍງາມໃບໜຶ່ງໃຫ້ແກ່ນະຄອນຫຼວງວຽງຈັນນັບມື້ນັບທັນເປັນແບບສາກົນ.

ທ່ານ ສົມສະຫວາດ ເລັ່ງສະຫວັດ ໄດ້ຂຶ້ນກ່າວຄຳປາໄສວ່າ,ຮ້ານຄ້າວຽງຈັນເຊັນເຕີໄດ້ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງຊາວເມືອງວຽງຈັນໃຫ້ສູງຂຶ້ນ,ເຮັດໃຫ້ລະດັບຄວາມເປັນແບບຕົວເມືອງ ແລະ ເປັນແບບສາກົນຂອງນະຄອນຫຼວງວຽງຈັນຍົກສູງຂຶ້ນຕື່ມອີກກ້າວໜຶ່ງ. ທັງເປັນການຊຸກດັນການພັດທະນາຕະຫລາດທ່ອງທ່ຽວຂອງລາວ.ທ່ານສະແດງຄວາມຂອບອົກຂອບໃຈມາຍັງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດລວມທັງບໍລິສັດລົງທຶນຂອງຈີນຢູ່ລາວທີ່ສ້າງສາໂຄງການປະເພດຕ່າງໆ ແລະ ຍ້ອງຍໍສັນລະເສີນໂຄງການດັ່ງກ່າວນີ້ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ ແລະ ສັງຄົມລາວ.ທ່ານປຸກລະດົມວິສາຫະກິດຈີນໃຫ້ມາລົງທຶນຢູ່ລາວຫລາຍກ່ວາເກົ່າ,ເພີ່ມກ່າວວ່າ:ຂ້າພະເຈົ້າໄດ້ຮູ້ວ່າ,ຈີນກຳລັງນຳໃຊ້ຍຸດທະສາດຊຸກດັນວິສາຫະກິດອອກໄປຕ່າງປະເທດຢ່າງແຂງແຮງ,ລາວຈະສ້າງເງື່ອນໄຂທີ່ມີຜົນດີໃຫ້ຫຼາຍກວ່າເກົ່າເພື່ອດູດດຶງວິສາຫະກິດຈີນມາລົງທຶນສ້າງກິດຈະການໃນລາວຕື່ມ.

ທ່ານ ເຊີນເວີນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດຂຶ້ນປາໄສໂດຍກ່າວວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດໄດ້ເຮັດວຽກຢ່າງດຸໝັ່ນຢູ່ລາວເປັນເວລາ 18 ປີແລ້ວ,ໄດ້ຮັບເໝົາກໍ່ສ້າງໂຄງການມີຄືດັ່ງນີ້:ຕຶກອາຄານສະໜາມກິລາຊີເກມຄັ້ງທີ 25, ໂຮງງານປຸງແຕ່ງຫົວອາຫານສັດພາກເໜືອ, ໂຮງແຮມດອນຈັນພາເລດວຽງຈັນ, ໂຮງແຮມກອງປະຊຸມສຸດຍອດອາຊຽນ,ເຂດພັດທະນາສັງລວມໄຊເສດຖາ ແລະ ອື່ນໆລວມມີ 10 ກວ່າໂຄງການໄດ້ຮັບນາມມະຍົດລະດັບຊາດເຊັ່ນ: ຫຼຽນໄຊແຮງງານແຫ່ງຊາດຂອງລາວ ແລະ ຫຼຽນໄຊພັດທະນາຂອງລາວຕັ້ງຫຼາຍເທື່ອ.ສູນການຄ້າວຽງຈັນເຊັນເຕີໄດ້ລິເລີ່ມກໍ່ສ້າງວາງສີລາລຶກແຕ່ເດືອນ 3 ປີ 2012, ໂດຍຜ່ານການກໍ່ສ້າງເປັນເວລາ 3 ປີເພື່ອມອບເປັນຂອງຂວັນແດ່ລາວກ່ອນບຸນປີໃໝ່ລາວ ປີ 2015,ໄດ້ຢັ້ງຢືນເຖິງການສະແດງຫາຢ່າງບໍ່ລົດລະຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດທີ່ມີຕໍ່ການສ້າງສາໂຄງການວິສະວະກຳກໍ່ສ້າງທີ່ຍອດຢ້ຽມ,ສ້າງຊີວິດຄວາມຜາສຸກອີກຄັ້ງໜຶ່ງ.

ສູນການຄ້າວຽງຈັນເຊັນເຕີໄດ້ນຳເຂົ້າຜະລິດຕະພັນຍີ່ຫໍ້ດັງຂອງສາກົນເປັນຈຳນວນຫຼວງຫຼາຍຢ່າງສຳເລັດຜົນ,ໄດ້ສ້າງຖານະຍີ່ຫໍ້ດັງໃນຕະຫລາດການຄ້າມີແຕ່ແຫ່ງດຽວບໍ່ມີ 2.ປັດຈຸບັນນີ້,ຫ້າງຮ້ານທີ່ເຊັນສັນຍາເຂົ້າປະຈຳສູນການຄ້າວຽງຈັນເຊັນເຕີມີ:ທະນາຄານຈີນສາຂາວຽງຈັນ, ໂຮງຮູບເງົາອິນໂດເນເຊຍແພັດຕິນຳ, ລວມທັງຍີ່ຫໍ້ລອງຈີນ,ກຸດຊີ,ທິດຊອດ,ມີໂດ,ຣາໂດ, ໂອເມກາທີ່ເປັນຍີ່ຫໍ້ທີ່ມີຊື່ສຽງໂດ່ງດັງສາກົນຂອງຫຼາຍປະເທດ. ພວກເຮົາຮ່ວມກັບ 10 ກ່ວາປະເທດ ແລະ ເຂດແຄ້ວນເປັນຕົ້ນແມ່ນສະວິດ,ອີຕາລີ,ສິງກະໂປ,ສ.ເກົາຫລີ,ຮົງກົງ,ໄທ, ລາວ,ອິນໂດເນເຊຍ,ຫວຽດນາມ ແລະ ຈີນ;ລວມທັງນັກທຸລະກິດ 120 ກວ່າຄົນສ້າງຕັ້ງຕົວເມືອງສັງລວມທີ່ຍືນຢູ່ໃນແຖວໜ້າຂອງລາວ.

ທ່ານ ເຊີນເວີນຊານ ກ່າວວ່າ, ໂຄງການໄລຍະທີ 1




ທ່ານ ສິນລະວົງ ຄຸດໄພທູນ ເຈົ້າຄອງນະຄອນຫຼວງວຽງຈັນ, ທ່ານ ກວນຮວາປີງ(ກາງ) ເອກອັກຄະລັດຖະທູດຜູ້ມີອຳນາດເຕັມແຫ່ງ ສປ ຈີນປະຈຳ ສປປ ລາວ ແລະ ທ່ານອື່ນໆຢ້ຽມຢາມສູນການຄ້າວຽງຈັນເຊັນເຕີ
万象市市长辛拉冯・库派吞（左三）、中国驻老挝特命全权大使关华兵（中）等领导视察万象中心　新华社 图

ຂອງສູນການຄ້າວຽງຈັນເຊັນເຕີຈະສ້າງອາຊີບ 300 ກວ່າຕຳແໜ່ງແກ່ຄົນລາວ,ຊຸກນຳຂະແໜງການທີ່ກ່ຽວຂ້ອງພັດທະນາ ແລະ ຍົກລະດັບໃຫ້ສູງຂຶ້ນ,ເປັນການຍູ້ແຮງການປະຕິບັດຍຸດທະສາດ" 1 ແລວ 1 ເສັ້ນທາງ", ຊຸກຍູ້ການພັດທະນາເສດຖະກິດອະນຸພາກພື້ນແມ່ນ້ຳຂອງ, ແມ່ນໝາກຜົນອຸດົມສົມບູນແຫ່ງການໄປມາຫາສູ່ກັນຢ່າງໄມຕີຈິດ ແລະ ການຮ່ວມມືຢ່າງຈິງຈັງລະຫວ່າງປະຊາຊົນຈີນລາວ.

ອີງຕາມການສຳພາດຂອງນັກຂ່າວຊິນຮວາຕໍ່ທ່ານຫູດໃຫຍ່ ກວນຮວາປີງ ກ່າວວ່າ,ຕະຫລາດການຄ້າວຽງຈັນເຊັນເຕີ,ໄດ້ຄວາມເອົາໃຈໃສ່ ແລະ ສະໜັບສະໜູນຈາກລັດຖະບານທັງສອງປະເທດຈີນລາວ,ສ້າງຂຶ້ນໂດຍວິສາຫະກິດທັງສອງປະເທດຮ່ວມກັນລົງທຶນ,ການທີ່ສ້າງສຳເລັດສິ່ງດັ່ງກ່າວຈະເປັນການຊ່ວຍຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ອຸດົມສົມບູນຂຶ້ນ.ຫວັງຢ່າງຍິ່ງວ່າ,ການຮ່ວມມືເສດຖະກິດການຄ້າທັງສອງປະເທດສາມາດໄດ້ຮັບຜົນສຳເລັດອຸດົມສົມບູນຍິ່ງຂຶ້ນ.ຝ່າຍຈີນຈະຊຸກດັນວິສາຫະກິດຈີນຕື່ມອີກແຮ່ງຫຼາຍກວ່າເກົ່າມາລົງທຶນຢູ່ຂົງເຂດຊີວິດການເປັນຢູ່ຂອງລາວ.

ຕາມການແນະນຳ,ຕະຫລາດວຽງຈັນເຊັນເຕີແມ່ນໂຄງການໄລຍະທີ່ 1 ຂອງໂຄງການສູນການທ່ອງທ່ຽວການຄ້າພານິດສາກົນວຽງຈັນ,ເນື້ອທີ່ລວມການກໍ່ສ້າງ 70.000 ຕາແມັດແມ່ນສູນການຄ້າສັງລວມລວມທັງຕະຫລາດການຄ້າ,ຊຸບເປີມາເກັດ,ການກິນດື່ມ ແລະ ບັນເທີງ,ອົງການການເງິນລວມເປັນອັນໜຶ່ງອັນດຽວ.ໂຄງການໄລຍະທີ 2 ວາງແຜນກໍ່ສ້າງເປັນຕຶກອາພາດເມັນທີ່ຍອດຢ້ຽມ,ໂຄງການໄລຍະທີ 3 ວາງແຜນກໍ່ສ້າງເປັນໂຮງແຮມທຸລະກິດ.


ພາບພາຍໃນສູນການຄ້າວຽງຈັນເຊັນເຕີ
"万象中心" 商场内景 新华社 图

ສູນການຄ້າວຽງຈັນເຊັນເຕີຕັ້ງຢູ່ເຂດການຄ້າໃຈກາງວຽງຈັນ,ທິດເໜືອໃກ້ກັບຖະໜົນມະໂຫສົດ,ທິດຕາເວັນຕົກໃກ້ກັບຖະໜົນຄູວຽງທິດຕາເວັນອອກຕິດກັບຖະໜົນດົງປ່າລານ,ທິດໃຕ້ໃກ້ກັບແມ່ນ້ຳຂອງ ແລະ ໃກ້ກັບຕະຫລາດເຊົ້າ ແລະ ຕະຫຼາດຂົວດິນທີ່ມີຊື່ສຽງເຊິ່ງເປັນໃຈກາງຄົມມະນາຄົມລົດເມນະຄອນຫຼວງວຽງຈັນ.ໂຄງການນີ້ໄດ້ວາງສີລະລຶກ ແລະ ເລີ່ມຕົ້ນກໍ່ສ້າງຈາກເດືອນ 3 ປີ 2012,ໂດຍຜ່ານການກໍ່ສ້າງເປັນເວລາ 3 ປີທີ່ຜ່ານມາ,ໄດ້ເປີດບໍລິການຢ່າງຄຶກຄື້ນມະໂຫລານໃນມື້ນີ້.


ຮູບຖ່າຍພາບວິວຕົວຈິງສູນການຄ້າວຽງຈັນເຊັນເຕີ
万象中心实景

文/陈灿霞 图/中新社

# ທ່າຊູໂຈວ



## 苏州港

苏州港地理位置优越，是中国沿海主要港口、国家对外开放一类口岸。苏州组合港地处长江入海口的咽喉地带，背靠经济发达的苏州、无锡、常州地区，东南紧邻上海，是由原国家一类开放口岸张家港港、常熟港和太仓港三港合一组建成的新兴港口。

ທ່າຊູ່ໂຈ່ວມີທ່າແຮງອັນພົ້ນເດັ່ນໃນດ້ານທີ່ຕັ້ງພູມສາດ,ແມ່ນທ່າກໍາປັ່ນສໍາຄັນຢູ່ເຂດແຄມທະເລຂອງຈີນ,ກໍ່ເປັນດ່ານລະດັບໜຶ່ງທີ່ເປີດປະຕູສູ່ພາຍນອກຂອງລັດ.ທ່າຊູ່ໂຈ່ວຕັ້ງຢູ່ບ່ອນສໍາຄັນທີ່ແມ່ນໍ້າຢາງເຊກຽງໄຫລເຂົ້າສູ່ທະເລ,ຢູ່ໃກ້ກັບນະຄອນຊູ່ໂຈ່ວ,ອູຊີ່,ຊາງໂຈ່ວທີ່ເສດຖະກິດຈະເລີນຮຸ່ງເຮືອງ,ທິດຕາເວັນອອກສຽງໃຕ້ຕິດກັບນະຄອນຊຽງໄຮ,ແມ່ນທ່າກໍາປັ່ນທີ່ສ້າງຂຶ້ນໃໝ່ໂດຍປະກອບດ້ວຍທ່າກໍາປັ່ນທີ່ເປັນດ່ານລະດັບໜຶ່ງແຫ່ງລັດ 3 ແຫ່ງໃນເມື່ອກ່ອນ,ຄື:ທ່າຈ່າງເຈ່ຍກາງ,ທ່າຊາງຊູ ແລະ ທ່າໄທ້ຊ່າງ,ຫຼັງຈາກທ່າ 3 ແຫ່ງໄດ້ຮັບການປັບປຸງເຂົ້າເປັນເອກະພາບດຽວແລ້ວ,ໄດ້ເລັ່ງລັດບາດກ້າວແຫ່ງການພັດທະນາ,ໂດຍປ່ຽນແປງສະພາບການທີ່ທ່າກໍາປັ່ນ 3 ແຫ່ງໃນເມື່ອກ່ອນຕ່າງກໍ່ພັດທະນາຕົວເອງ,ໄດ້ເປີດປະຕູຕໍ່ພາຍນອກດ້ວຍ"ທ່າຊູ່ໂຈ່ວ"ຢ່າງເປັນເອກະພາບກັນ,ອອກແຮງໂຄສະນາ,ເພື່ອເພີ່ມທະວີຊື່ສຽງ ແລະ ແຮງດຶງດູດໃຫ້ຫຼາຍຂຶ້ນ.ເຂດທ່າກໍາປັ່ນຕ່າງໆຕ່າງໄດ້ເສີມຂະຫຍາຍທ່າແຮງຂອງຕົນ,ແລະໄດ້ຮັບປະສິດທິຜົນອັນພົ້ນເດັ່ນ.

ທ່າຊູ່ໂຈ່ວເປັນສ່ວນປະກອບອັນສໍາຄັນຂອງທ່າຂຸມທາງຕູ້ຄອນເທັນເນີຂອງສູນຂົນສົ່ງທາງນໍ້າສາກົນຊຽງໄຮ,ກໍ່ແມ່ນໜຶ່ງໃນທ່າກໍາປັ່ນສາຍຫຼັກຂົນຖ່າຍຕູ້ຄອນເທັນເນີສໍາຄັນທີ່ສຸດຂອງແຂວງຈ່ຽງຊູແມ່ນພື້ນຖານສໍາຄັນທີ່ປາກແມ່ນໍ້າຢາງເຊກຽງເປີດປະຕູສູ່ພາຍນອກ,ແມ່ນເວທີສໍາຄັນຢູ່ເຂດຍ່ານເໜືອ ແລະ ຍ່ານກາງຂອງແມ່ນໍ້າຢາງເຊກຽງ,ແລະ ການພັດທະນາພາກຕາເວັນຕົກຂອງຈີນ,ກໍ່ແມ່ນທ່າກໍາປັ່ນລັກສະນະສັງລວມທີ່ມີສະມັດຖະພາບຫຼາຍຢ່າງ,ເຊັ່ນ,ການຂົນສົ່ງລະຫວ່າງແມ່ນໍ້າກັບທະເລ,ການຂົນສົ່ງສິນຄ້າໄປເຂດໃນ ແລະ ຕ່າງປະເທດ,ການຂົນຖ່າຍສິນຄ້າ ແລະ ສາງສະສົມສິນຄ້າເປັນຕົ້ນ.

ທ່າຊູ່ໂຈ່ວຕັ້ງຢູ່ຝັ່ງໃຕ້ຂອງຍ່ານໃຕ້ແມ່ນໍ້າຢາງເຊກຽງ,ທິດຕາເວັນຕົກເລີ່ມຈາກຊາງຊ່ານ(ບ່ອນເຊື່ອມຈອດກັນລະຫວ່າງຈ່າງເຈ່ຍກາງ ແລະ ຈ່ຽງຢິ່ນ),ທິດຕາເວັນອອກໄປຮອດລິວເຫີໂຂວນານ(ບ່ອນເຊື່ອມຈອດລະຫວ່າງໄທ້ຊ່າງກັບຊຽງໄຮ),ເສັ້ນແຄມຝັ່ງຂອງທ່າຊູ່ໂຈ່ວເປັນເສັ້ນຊື່,ພື້ນແມ່ນໍ້າໝັ້ນທ່ຽງ,ເຂດນໍ້າກວ້າງຂວາງ,ນໍ້າເລິກ ແລະ ໄຫຼໄວ,ຂີ້ຕົມບໍ່ຫຼາຍ ແລະ ຈະບໍ່ເກີດນໍ້າກ້າມ.ທ່າຊູ່ໂຈ່ວຢູ່ໃກ້ກັບເສັ້ນທາງເດີນເຮືອສາກົນ,ແມ່ນທ່າທໍາມະຊາດທີ່ດີຢູ່ປາກແມ່ນໍ້າເຂົ້າສູ່ທະເລຂອງແມ່ນໍ້າຢາງເຊກຽງ,ມີທ່າແຮງພູມສາດອັນພົ້ນເດັ່ນ ແລະ ສະພາບແວດລ້ອມທີ່ດີສໍາລັບການພັດທະນາການຂົນສົ່ງທາງທະເລ.ທ່າຊູ່ໂຈ່ວມີເສັ້ນທາງຂົນສົ່ງທາງນໍ້າ ແລະ ທາງບົກທີ່ສະດວກວ່ອງໄວ.

ທ່າຊູ່ໂຈ່ວແບ່ງອອກເປັນ 3 ເຂດ,ຄື:ເຂດທ່າຈ່າງເຈ່ຍກາງ,ເຂດທ່າຊາງຊູ ແລະ ເຂດທ່າໄທ້ຊ່າງ.ເຂດທ່າຈ່າງເຈ່ຍກາງສ້າງຂຶ້ນໃນປີ 1968,ປີ 1982 ໄດ້ຮັບການອະນຸມັດເປັນດ່ານລະດັບໜຶ່ງທີ່ເປີດປະຕູຕໍ່ກໍາປັ່ນສັນຊາດຕ່າງປະເທດ.ຢູ່ໃນເຂດທ່າຈ່າງເຈ່ຍກາງມີເສັ້ນທາງເດີນເຮືອທີ່ຂົນສົ່ງຕູ້ຄອນເທັນເນີລະຫວ່າງຊາດຫຼາຍສາຍ,ໂດຍສົ່ງຕໍ່ໄປຊຽງໄຮ ຫຼື ຮົງກົງ,ມີການໄປມາຫາສູ່ກັນດ້ານການຂົນສົ່ງສິນຄ້າກັບທ່າກໍາປັ່ນ 100 ກວ່າແຫ່ງໃນໂລກ.ເຂດທ່າຊາງຊູສ້າງຕັ້ງຂຶ້ນໃນເດືອນ ສິງຫາ ປີ 1992,ປີ 1996,ຄະນະລັດຖະບານໄດ້ອະນຸມັດໃຫ້ເປີດປະຕູຕໍ່ກໍາປັ່ນສັນຊາດຕ່າງປະເທດຢ່າງເປັນທາງການ,ເປັນດ່ານລະດັບໜຶ່ງແບບເປີດປະຕູຕໍ່ພາຍນອກຂອງລັດ.ປະຈຸບັນໄດ້ເປີດເສັ້ນທາງເດີນເຮືອດ້ານການຄ້າພາຍໃນ ແລະ ຕ່າງປະເທດ,ມີການພົວພັນດ້ານການຄ້າ ແລະ ການເດີນເຮືອກັບຫຼາຍປະເທດ ແລະ ເຂດແຄວ້ນ.ເຂດທ່າໄທ້ຊ່າງສ້າງຕັ້ງຂຶ້ນໃນປີ 1992,ປີ 1996 ໄດ້ຮັບການອະນຸມັດເປັນດ່ານລະດັບໜຶ່ງ,ແລະ ເປີດປະຕູຕໍ່ກໍາປັ່ນສັນຊາດຕ່າງປະເທດ.ປະຈຸບັນໄດ້ເປີດເສັ້ນທາງເດີນເຮືອດ້ານການຄ້າທັງພາຍໃນ ແລະ ຕ່າງປະເທດ,ສາມາດໄປສູ່ທ່າກໍາປັ່ນຕ່າງໆຂອງແຫ່ງຕ່າງໆຂອງໂລກ,ແລະ ທ່າກໍາປັ່ນຕ່າງໆແຄມທະເລ,ແຄມແມ່ນໍ້າຢາງເຊກຽງ ແລະ ຄອງນໍ້າຈິ່ງຮາງພາຍໃນປະເທດຈີນ.

# ເປີຍຣາຍ: ກະແສຟອງຂຶ້ນ ພວມເປັນເວລາແລ່ນຍິ່ນ



ແສງສຸລິຍອຍຄ່ຳຫາດເງິນເປີຍຣາຍ
北海银滩落霞 半 清 图

## 北海：潮起正是踏浪时

**北海，地处广西南端，北部湾东北岸，是古代“海上丝绸之路”的重要始发港，中国首批沿海开放城市，中国西南、中南地区对外开放的重要出海通道和广西对外开放的先行市。**

ເປີຍຣາຍຕັ້ງຢູ່ພາກໃຕ້ກວາງຊີ,ຝັ່ງຕາເວັນອອກສຽງເໜືອອ່າວພາກເໜືອແມ່ນທ່າກຳປັ່ນຈາກຕົ້ນຈີນສຸດທີ່ສຳຄັນຂອງ“ເສັ້ນທາງສາຍໄໝທາງທະເລ”ໃນບູຮານ.ເປັນຕົວເມືອງແຄມທະເລເປີດປະຕູສູ່ພາຍນອກຊຸດທຳອິດ,ເປັນຊ່ອງທາງອອກສູ່ທະເລທີ່ສຳຄັນຂອງເຂດຕາເວັນຕົກສຽງໃຕ້ ແລະ ເຂດກາງໃຕ້ທີ່ເປີດປະຕູສູ່ພາຍນອກ ແລະ ເປັນນະຄອນກ້າວໄປໜ້າກ່ອນກວ່າໝູ່ຂອງກວາງຊີເປີດປະຕູສູ່ພາຍນອກ.ເປັນຕົວເມືອງຊື່ດັງວັດທະນະທຳປະຫວັດສາດແຫ່ງຊາດ,ເປັນເມືອງບູຮານນານຈູທີ່ໄດ້ມີຊື່ສຽງຫາດສີເງິນ“ຫາດທີ່ໜຶ່ງໃຕ້ຟ້າ” ແລະ ແມ່ນເກາະພູໄຟໃຫຍ່ກວ່າໝູ່ອາຍຸທໍລະນີສາດໜຸ່ມກວ່າໝູ່ຂອງຈີນ,ແມ່ນໜຶ່ງໃນເກາະທະເລທີ່ສວຍງາມທີ່ສຸດຂອງຈີນ--ເກາະວູຍໂຈວ.

ໂຄງການອັດເຫຼັກເຢັນທີ່ບຳບັດນ້ຳເສຍ,ອາຊິດເສຍຂອງອຸດສາຫະກຳຢ່າງສິ້ນເຊີ່ງ ແລະ ເກັບຄືນນຳໃຊ້ບັນລຸເຖິງການຫລຸດການປ່ອຍອາຍພິດເປັນສູນທີ່ລົງທຶນ 2,4 ຕື້ຢວນ,ປະລິມານການຜະລິດ 1,2 ລ້ານໂຕນໃນວັນທີ 26 ເດືອນ 12 ປີ 2014 ໄດ້ເຂົ້າສູ່ການຜະລິດຢູ່ທ່າກຳປັ່ນເທຊານນະຄອນເປີຍຣາຍ.ຕາມຂໍ້ມູນລ້າສຸດ,ອີງຕາມການບຸກທະລຸທີ່ສຳຄັນໃນການພັດທະນາກິດຈະກຳຫຼາຍປີທີ່ຜ່ານມານີ້,ເປີຍຣາຍໄດ້ກາຍເປັນຕົວເມືອງບັນລຸ GDP ເພີ່ມຂຶ້ນ 2 ເທົ່າຕົວຂອງກວາງຊີແຕ່ແຫ່ງດຽວໃນປີ 2014.

ເປີດແຜ່ນທີ່ອາຊີປາຊີຟິກອອກ,ທ່າແຮງພູມີພາກເປີຍຣາຍເປັນອັນດັບໜຶ່ງບໍ່ມີສອງ,ມີທີ່ຕັ້ງຢູ່ສົ້ນໃຕ້ແຜ່ນດິນໃຫຍ່ຂອງຈີນ,ທາງຫລັງອາໄສພາກຕາເວັນຕົກສຽງໃຕ້,ອວ່າຍໜ້າໃສ່ອາຊີຕາເວັນອອກສຽງໃຕ້,ແມ່ນຕົວເມືອງທີ່ໂລ່ງຫາທາງລົດໄຟດ່ວນ,ທາງດ່ວນ,ທັງມີສະໜາມບິນ ແລະ ທ່າກຳປັ່ນທີ່ມີນ້ຳເລິກໃນພາກຕາເວັນຕົກສຽງໃຕ້ແຕ່ບ່ອນດຽວຂອງຈີນ.

ຕົ້ນປີ 2010,ເປີຍຣາຍໄດ້ລິເລີ່ມ“ໂຄງການພັດທະນາແບບກະໂດດ 3 ປີ”ເພື່ອຍົກສູງກຳລັງຜະລິດພາຍໃນແຫ່ງການພັດທະນາຕົວເມືອງ,ເອົາອຸດສາຫະກຳທີ່ເປັນທ່າແຮງເຊັ່ນ:ນ້ຳມັນເຊື້ອໄຟເຄມີ,ຂໍ້ມູນຂ່າວສານເອເລັກໂຕຼນິກ,ວັດສະດຸແບບໃໝ່ໃກ້ຄຽງກັບທ່າກຳປັ່ນ ແລະ ອື່ນໆກາຍເປັນບ່ອນທະລຸໃນການພັດທະນາ,ປີ່ນອ້ອມກິດຈະກຳການກໍ່ສ້າງໂຄງການຢ່າງແຂງແຮງ.“ປີທີ 1 ສືບຕໍ່ສ້າງພື້ນຖານ,ປີທີ 2 ເຫັນປະສິດທິຜົນ,ປີທີ 3 ບັນລຸການກະໂດດຢ່າງໃຫຍ່”.ພ້ອມກັນນັ້ນ,ເຮັດໃຫ້ເວທີພັດທະນາກິດຈະກຳເຂດສວນອຸດສາຫະກຳເປີຍຣາຍ,ເຂດສົ່ງອອກ ແລະ ປຸງແຕ່ງ,ເຂດອຸດສາຫະກຳທ່າກຳປັ່ນເທຊານ(ໃກ້ທະເລ)ໃຫ້ດີເລີດຢ່າງບໍ່ຂາດສາຍ,ຊຸກດັນເຂດສວນວິສາຫະກິດເຕົ້າໂຮມກັບເຂດສວນ,ຊຸກຍູ້ອຸດສາຫະກຳພັດທະນາເປັນແບບກະເສດສຸມ ແລະ ແບບຂະໜາດ.

ເປັນ 1 ໃນຕົວເມືອງທຳອິດໃນການແລກປ່ຽນ ແລະ ການຮ່ວມມືກັບອາຊຽນ,ເປີຍຣາຍໄດ້ເປີດສາຍເດີນເຮືອທາງທະເລກັບປະເທດອາຊຽນກ່ອນກວ່າໝູ່,ແມ່ນຕົວເມືອງດຳເນີນການສ້າງສາຜັງເມືອງມິດຕະພາບໄມຕີຈິດຂອງກວາງຊີກັບປະເທດອາຊຽນຫຼາຍທີ່ສຸດ.ຈາກແຫຼ່ງທີ່ມາປະຫວັດສາດ,ເນື້ອໃນວັດທະນະທຳ,ເງື່ອນໄຂພາກພື້ນ,ພື້ນຖານການພັດທະນາ ແລະ ດ້ານອື່ນໆ,ເປີຍຣາຍໄດ້ແບກຫາບພາລະກິດອັນມີກຽດທີ່ເຂດສ້າງສາ“ເສັ້ນທາງສາຍໄໝທາງທະເລ”ໃນສະຕະວັດທີ 21 ກ່ອນເພີ່ນຫຼາຍກ່ວາໝູ່.

ເປີຍຣາຍຈະຍາດເອົາກາລະໂອກາດສ້າງສາກວາງຊີກາຍເປັນຈຸດຄ້ຳຊູຍຸດທະສາດແບບໃໝ່ໃນການພັດທະນາ ແລະ ເປີດກວ້າງໃນຂົງເຂດຕາເວັນຕົກສຽງໃຕ້ ແລະ ພາກກາງໃຕ້,ຄຳຮ້ອງຂໍທິດເໜືອເປີຍຣາຍອາໄສພາກກາງ,ບຸກເບີກສູ່ພາກໃຕ້,ຖືເອົາ“ປ້າຍອາຊຽນ”,“ປ້າຍກວາງຕຸງຮົງກົງມາເກົາ”ເປັນຈຸດສຸມ,ປະຕິບັດຍຸດທະສາດເປີດກວ້າງຊັກນຳຢ່າງຕັ້ງໜ້າເປັນເຈົ້າກີເຈົ້າການຍິ່ງຂຶ້ນກາຍເປັນສະຖານະພາບແບບໃໝ່ທີ່ເປີດກວ້າງສາລະທິດ,ປະກອບສ່ວນກຳລັງຍິ່ງຫຼາຍກວ່າເກົ່າເຂົ້າໃນການສ້າງສາ“ເສັ້ນທາງສາຍໄໝທາງທະເລ”ໃນສະຕະວັດທີ 21.



ພາບຖະໜົນນະຄອນເປີຍຣາຍ
北海市城市街景 新华社 图

文、图 / 刘仁和

# ສູນວັດທະນະທຳຈີນປະຈຳລາວຈັດງານສະແດງສິລະປະ "ສຸກສັນວັນປີໃໝ່ຈີນ"

## 老挝中国文化中心举办春节文艺晚会

**2015年2月13日晚，由老挝中国文化中心主办、中国驻老挝大使馆和老挝新闻文化旅游部协办，在老挝万象市文化宫举行“欢乐春节”文艺演出晚会，特邀中国青海省演艺集团有限公司赴老挝演出。**

ວັນທີ 13 ກຸມພາ 2015 ຕອນຄ່ຳ,ສູນວັດທະນະທຳຈີນປະຈຳລາວເປັນເຈົ້າພາບ,ສະຖານເອກອັກຄະລັດຖະທູດ ສປ ຈີນປະຈຳລາວຮ່ວມມືກັບກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຫ່ງ ສປປ ລາວ ໄດ້ຈັດງານສະແດງສິລະປະ“ສຸກສັນວັນປີໃໝ່ຈີນ”ທີ່ຫໍວັດທະນະທຳແຫ່ງຊາດນະຄອນຫຼວງວຽງຈັນ ໂດຍເຊື້ອເຊີນຄະນະສິລະປະກອນຊິງໄຮ ສປ ຈີນມາສະແດງຢູ່ວຽງຈັນລາວ.

ຜູ້ທີ່ເຂົ້າຮ່ວມງານສະແດງສິລະປະຄ່ຳຄືນນີ້ມີ: ທ່ານ ອາຊາງ ລາວລີ,ກຳມະການກົມການເມືອງສູນກາງພັກ,ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ທ່ານ ສິນລະວົງ ຄຸດໄພທູນເຈົ້າຄອງນະຄອນຫຼວງວຽງຈັນ(ປະທານສະມາຄົມມິດຕະພາບລາວ-ຈີນ), ທ່ານ ບໍ່ແສງຄຳ ວົງດາລາ,ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຫ່ງ ສປປ ລາວ,ທ່ານ ກວນຮວາປິນ,ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປ ຈີນປະຈຳ ສປປ ລາວ,ບັນດາລັດຖະມົນຕີວ່າການ,ຊ່ວຍວ່າການບັນດາແຂກຜູ້ມີກຽດ ແລະ ເພື່ອນມິດສະຫາຍທັງຫຼາຍ,ຍັງມີບັນດາການນຳສະມາຄົມຈີນນະຄອນວຽງຈັນ,ພະນັກງານອົງການພັກລັດນະຄອນຫຼວງວຽງຈັນພ້ອມດ້ວຍປະຊາຊົນ ແລະ ພະນັກງານພະລາກອນຈີນທີ່ເຮັດວຽກຢູ່ລາວປະມານ 1000 ກວ່າຄົນມາຮັບຊົມການສະແດງສິລະປະໃນຄ່ຳຄືນນີ້ນີ້.

ທ່ານ ເຊສຽວຮວາ(Quexiaohua)ຫົວໜ້າສູນວັດທະນະທຳຈີນປະຈຳລາວຂຶ້ນກ່າວຄຳປາໄສ,ທ່ານເວົ້າວ່າ:ຂ້າພະເຈົ້າຂໍຕາງໜ້າສູນວັດທະນະທຳ ສປ ຈີນປະຈຳ ສປປ ລາວສະແດງຄວາມຍິນດີຕ້ອນຮັບບັນດາທ່ານທີ່ໄດ້ມາເຂົ້າຮ່ວມງານ.ກິດຈະກຳຈັດງານສະແດງສິນລະປະ“ສຸກສັນວັນປີໃໝ່ຈີນ”ໄດ້ຮັບການສະໜັບສະໜູນຢ່າງໃຫຍ່ຫຼວງຈາກສະຖານທູດ ສປ ຈີນປະຈຳ ສປປ ລາວ ແລະ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຫ່ງ ສປປ ລາວ,ຂໍຖືໂອກາດນີ້ຂ້າພະເຈົ້າຕາງໜ້າສູນວັດທະນະທຳ ສປ ຈີນປະຈຳ ສປປ ລາວຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດໃຈ.

ສູນວັດທະນະທຳ ສປ ຈີນປະຈຳ ສປປ ລາວໄດ້ສ້າງຕັ້ງຂຶ້ນໃນເດືອນ ພະຈິກ ປີ 2014 ທີ່ຜ່ານມານີ້,ພວກຂ້າພະເຈົ້າຈະຕັ້ງໜ້າຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືທາງດ້ານວັດທະນະທຳລະຫວ່າງສອງປະເທດຈີນ-ລາວ ໂດຍຜ່ານການຈັດກິດຈະກຳວັດທະນະທຳຕ່າງໆ.ໃນຄ່ຳຄືນນີ້ຄະນະສິນລະປະແຂວງຊິງໄຮທີ່ມາຈາກພູພຽງຊິງໄຮ-ຕິເບດຈະໄດ້ນຳເອົາສິນລະປະ




ສູນວັດທະນະທຳຈີນປະຈຳລາວໄດ້ຈັດງານລາຕີສະແດງສິລະປະວັນນະຄະດີສະຫລອງບຸນກຸດຈີນ
老挝中国文化中心举办“欢乐春节”文艺演出晚会

ວັດທະນະທຳທີ່ມີລັກສະນະທ້ອງຖິ່ນອັນເຂັ້ມຂຸ້ນມາສູ່ພວກເຮົາ,ຂ້າພະເຈົ້າເຊື່ອແນ່ວ່າການສະແດງຂອງພວກເພິ່ນຈະຊ່ວຍເຮັດໃຫ້ປະຊາຊົນລາວເຂົ້າໃຈເຖິງວັດທະນະທຳ ແລະ ສິນລະປະຈີນໄດ້ດີຂຶ້ນກວ່າເກົ່າ,ແລະ ເພີ່ມທະວີຄວາມເຂົ້າໃຈກັນ ແລະ ມິດຕະພາບລະຫວ່າງປະຊາຊົນສອງຊາດຈີນ-ລາວ.ອີກບໍ່ເທົ່າໃດນີ້,ພວກເຮົາກໍ່ຈະກ້າວເຂົ້າສູ່ປີໃໝ່ຈີນຄືປີມະແມ.ມະແມຢູ່ປະເທດຈີນແມ່ນໝາຍເຖິງຄວາມເປັນສິລິມຸງຄຸນ ແລະ ຄວາມສະຫງົບຜາສຸກ.ນະທີ່ນີ້,ຂ້າພະເຈົ້າຂໍອວຍພອນໃຫ້ບັນດາແຂກຜູ້ມີກຽດ ແລະ ເພື່ອນມິດທັງຫຼາຍຈົ່ງສະບາຍດີປີໃໝ່,ມີພາລານາໄມທີ່ສົມບູນ,ດັ່ງຄຳກອນທີ່ວ່າມະແມສາມໂຕແຈກໂຊກໃຫ້ທຸກທ່ານຈົ່ງໂຊກດີຕະຫຼອດທັງປີ!

ງານສະແດງສິລະປະເປີດສາກໃນທ່າມກາງສຽງຕົບມືຢ່າງຟົດຟື້ນ,ມີລາຍການສະແດງຟ້ອນລຳທຳເພງ,ກາຍຍະສິນ,ຫຼິ້ນກົນ,ຮ້ອງເພງດ່ຽວ ແລະ ລາຍການອື່ນໆທີ່ຍອດຢ້ຽມ.ນັກຮ້ອງຈີນກັບນາງພິທີກອນລາວຮ້ອງເພງ“ດອກຈຳປາ”ດ້ວຍພາສາລາວໄດ້ຮັບສຽງຕົບມືຊົມເຊີຍຢ່າງຟົດຟື້ນ,ຂະນະນີ້,ບັນຍາກາດໃນງານລາຕີຂຶ້ນສູ່ກະແສສູງ,ການສະແດງຂອງນັກສິລະປິນໄດ້ຮັບຄວາມຊົມເຊີຍຢ່າງຟົດຟື້ນຈາກບັນດາຜູ້ຊົມ.

ຫລັງຈາກງານລາຕີສະແດງສິລະປະສິ້ນສຸດລົງແລ້ວ,ທ່ານ ອາຊາງ ລາວລີ ກຳມະການກົມການເມືອງສູນກາງພັກ,ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ທ່ານ ສິນລະວົງ ຄຸດໄພທູນ ເຈົ້າຄອງນະຄອນຫຼວງວຽງຈັນ(ປະທານສະມາຄົມມິດຕະພາບລາວ-ຈີນ),ທ່ານ ບໍ່ແສງຄຳ ວົງດາລາ ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຫ່ງ ສປປ ລາວ ທ່ານ ກວນຮວາປິນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປ ຈີນປະຈຳ ສປປ ລາວໄດ້ຂຶ້ນສູ່ເວທີສະແດງມອບກະຕ່າດອກໄມ້ ແລະ ຖ່າຍຮູບຮ່ວມກັນກັບບັນດາສິລະປິນເປັນທີ່ລະນຶກ.

文、图/杨 滢

# ງານທ່ອງທ່ຽວວັດທະນະທຳຊາຍແດນບໍ່ເຕັນລາວ-ບໍ່ຫານຈີນ ຄັ້ງທຳອິດຈັດຂຶ້ນຢ່າງໃຫຍ່ໂຕມະໂຫລານ




ພິທີຕັດແຖບຜ້າຕະຫລາດການຄ້າປອດພາສີ
免税商场开业剪彩仪式

## 首届磨丁·磨憨老中边境文化旅游节盛大开幕

**2015年2月14日，由老挝南塔省政府、老挝磨丁经济特区及中国磨憨经济开发区共同主办的“首届磨丁·磨憨老中边境文化旅游节”在老挝磨丁盛大开幕。**

ວັນທີ 14 ກຸມພາ ປີ 2015,ອົງການປົກຄອງແຂວງຫຼວງນ້ຳທາ,ເຂດເສດຖະກິດພິເສດບໍ່ເຕັນຂອງລາວ ແລະ ເຂດພັດທະນາເສດຖະກິດບໍ່ຫານຂອງຈີນໄດ້ຮ່ວມກັນຈັດ“ງານທ່ອງທ່ຽວວັດທະນະທຳຊາຍແດນບໍ່ເຕັນລາວ-ບໍ່ຫານຈີນ”ຄັ້ງທຳອິດຢູ່ບໍ່ເຕັນຂອງລາວຢ່າງໃຫຍ່ໂຕມະໂຫລານ.ທ່ານ ສົມສະຫວາດ ເລັ່ງສະຫວັດ,ຮອງນາຍົກລັດຖະມົນຕີລາວ,ທ່ານ ພິມມະສອນ ເລືອງຄຳມາ,ເຈົ້າແຂວງແຂວງຫຼວງນ້ຳທາ,ທ່ານນາງ ບຸນເພັງ ມູນໂພໄຊ,ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ,ທ່ານ ວອນຄຳ ເພັດທະວົງ,ປະທານຄະນະສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 3,ກຳມະການປະຈຳຄະນະພັກແຂວງຫຼວງນ້ຳທາ,ທັງເປັນຮອງປະທານຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດບໍ່ເຕັນ,ເຈົ້າໜ້າທີ່ຝ່າຍລາວອື່ນໆ,ທ່ານ ໂຈ່ວຄຸນ,ປະທານເຂດເສດຖະກິດພິເສດບໍ່ເຕັນ,ທ່ານ ຕູ້ຈຸ້ນຈຸ່ນ,ຮອງຫົວໜ້າພະແນກການຄ້າແຂວງຢຸນນານ,ທ່ານ ເສີນຊີຈົ່ງ,ຮອງເຈົ້າກົງແຂວງສິບສອງພັນນາ,ທ່ານ ຢຽນລາ,ເຈົ້າເມືອງເມືອງຫຼ້າ,ທ່ານ ຕາວເວີນ,ເລຂາຄະນະພັກເຂດພັດທະນາເສດຖະກິດບໍ່ຫານ,ແລະ ທ່ານ ມາເຈົ້ງຢຸນ,ຫົວໜ້າຄະນະກຳມະການຄຸ້ມຄອງເຂດພັດທະນາເສດຖະກິດບໍ່ຫານໄດ້ເຂົ້າຮ່ວມພິທີເປີດງານ.

ໃນພິທີເປີດງານ,ທ່ານ ຕູ້ຈຸ້ນຈຸ່ນ ໄດ້ກ່າວຄຳເຫັນວ່າ,ປະເທດຈີນກັບປະເທດລາວມີພູຜາແມ່ນ້ຳເຊື່ອມຕໍ່ກັນ,ມີມິດຕະພາບອັນເປັນມູນເຊື້ອມາແຕ່ບູຮານນະການ,ສອງປະເທດໄດ້ຮັກສາການຢ້ຽມຢາມກັນລະຫວ່າງຜູ້ນຳຂັ້ນສູງ,ເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືດ້ານຍຸດທະສາດ.ປະຈຸບັນ,ສອງປະເທດຈີນ-ລາວພວມຕັ້ງໜ້າຊຸກຍູ້ການສ້າງສາເຂດຮ່ວມມືເສດຖະກິດບໍ່ຫານຈີນ-ບໍ່ເຕັນລາວ,ລັດຖະບານສອງປະເທດ ແລະ ອົງການປົກຄອງທ້ອງຖິ່ນກໍ່ກຳລັງເລັ່ງລັດພັດທະນາພື້ນຖານໂຄງລ່າງຢູ່ດ່ານບໍ່ຫານ-ບໍ່ເຕັນ;ຊຸກຍູ້ເປີດທາງຜ່ານສະເພາະແກ່ການຂົນສົ່ງສິນຄ້າໂດຍຜ່ານດ່ານບໍ່ຫານ;ຮ່ວມມືປຶກສາຫາລື“ແຜນລວມກ່ຽວກັບຮ່ວມກັນສ້າງສາເຂດຮ່ວມມືເສດຖະກິດບໍ່ຫານຈີນ-ບໍ່ເຕັນລາວ”ແລະ ໄດ້ຕົກລົງຄວາມເຫັນເປັນເອກະພາບກັນ.ພວກຂ້າພະເຈົ້າເຊື່ອໝັ້ນວ່າ,ໂດຍຜ່ານການຈັດງານທ່ອງທ່ຽວວັດທະນະທຳຄັ້ງນີ້,ບໍ່ພຽງແຕ່ຈະເພີ່ມທະວີມິດຕະພາບອັນເປັນມູນເຊື້ອລະຫວ່າງຈີນກັບລາວ ແລະ ໄທ,ຊຸກຍູ້ການແລກປ່ຽນວັດທະນະທຳດ້ານການທ່ອງທ່ຽວເທົ່ານັ້ນ,ຍັງຈະເຮັດໃຫ້ແຂວງຢຸນນານຈີນ,ພາກເໜືອຂອງປະເທດລາວ,ພາກເໜືອຂອງປະເທດໄທຮັບຮູ້ເຖິງການພັດທະນາຂອງເຂດເສດຖະກິດບໍ່ເຕັນ-ບໍ່ຫານ,ຊອກຮູ້ ແລະ ສຳຜັດກັບບໍ່ເຕັນທີ່ກຳລັງເກີດການປ່ຽນແປງອັນໃຫຍ່ຫຼວງ,ຊຸກຍູ້ໃຫ້ເຂດຮ່ວມມືເສດຖະກິດບໍ່ຫານ-ບໍ່ເຕັນພັດທະນາຢ່າງປອດໃສ.

ທ່ານ ວອນຄຳ ເພັດທະວົງ,ປະທານຄະນະສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 3,ກຳມະການປະຈຳຄະນະພັກແຂວງຫຼວງນ້ຳທາ,ທັງເປັນຮອງປະທານຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດບໍ່ເຕັນໃຫ້ສຳພາດຕໍ່ນັກຂ່າວວ່າ,ເຂດເສດຖະກິດພິເສດບໍ່ເຕັນລາວຈະດຳເນີນການຮ່ວມມືກັບເຂດພັດທະນາເສດຖະ




ແຂກຜູ້ມີກຽດຮ່ວມກັນກົດປຸ່ມໜ່ວຍແກ້ວໃສ
嘉宾共同启动水晶球




ພິທີວາງສິລະລຶກໂຄງການ
项目奠基仪式

ກິດບໍ່ຫານຈີນ,ເຊິ່ງຖືໂຄງການໂຮງແຮມ,ການທ່ອງທ່ຽວ,ການຄ້າ,ຈໍລະຈອນສິນຄ້າ ແລະ ການຄ້າຂ້າມຊາຍແດນເປັນຕົ້ນຕໍ,ຈະພັດທະນາໂຄງການອີງຕາມສິ່ງກໍ່ສ້າງບໍລິການດ້ານຕ່າງໆ.ເຂດເສດຖະກິດພິເສດບໍ່ເຕັ່ນບໍ່ພຽງແຕ່ມີທິວທັດທຳມະຊາດອັນສວຍງາມເທົ່ານັ້ນ,ຍັງມີທ່າແຮງດ້ານທີ່ຕັ້ງພູມສາດ,ຍິນດີຕ້ອນຮັບນັກລົງທຶນປະເທດຕ່າງໆມາລົງທຶນຢູ່ເຂດເສດຖະກິດພິເສດບໍ່ເຕັ່ນ,ລັດຖະບານລາວຈະໃຊ້ນະໂຍບາຍພິເສດຕໍ່ນັກລົງທຶນ.

ເຂດເສດຖະກິດພິເສດບໍ່ເຕັ່ນຈະສ້າງສູນການຄ້າສາກົນບໍ່ເຕັ່ນ,ເຂດຈໍລະຈອນ ແລະ ປຸງແຕ່ງສິນຄ້າທີ່ປອດພາສີສາກົນ,ສວນອຸທິຍານແຫ່ງຊາດບໍ່ເຕັ່ນລາວ,ສວນອຸທິຍານສາກົນ,ເຂດທ່ອງທ່ຽວແບບພັກຜ່ອນສາກົນບໍ່ເຕັ່ນ ແລະ ອື່ນໆ,ເຊິ່ງຈະສ້າງເປັນເຂດເສດຖະກິດພິເສດທີ່ມີການທ່ອງທ່ຽວ ແລະ ການຄ້າສາກົນ.

ມື້ດຽວກັນ,ໄດ້ມີການເຊັນສັນຍາລົງທຶນ ແລະ ການຮ່ວມມືຫຼາຍສະບັບດ້ານການຄ້າ,ການຈໍລະຈອນສິນຄ້າ ແລະ ການທ່ອງທ່ຽວຢູ່ເຂດເສດຖະກິດພິເສດບໍ່ເຕັ່ນ,ສູນຈັດຊື້ສິນຄ້າປອດພາສີເປີດບໍລິການ,ສູນການຄ້າສາກົນບໍ່ເຕັ່ນເລີ່ມລົງມືກໍ່ສ້າງ,ສອງຝ່າຍຍັງໄດ້ຈັດງານສຳມະນາການທ່ອງທ່ຽວວັດທະນະທຳ ແລະ ການຮ່ວມມືດ້ານເສດຖະກິດການຄ້າກັບການຈໍລະຈອນສິນຄ້າ,ແລະ ຈັດໃຫ້ມີກິດຈະກຳຕ່າງໆ,ເຊັ່ນ,ການສະແດງຮ້ອງເພງ ແລະ ບົດຟ້ອນຊົນເຜົ່າ,ເດີນປ່າ,ຫຼິ້ນສະຫລິງລະຫວ່າງພູຜາປ່າໄມ້,ຂີ່ເຮືອຊົມທິວທັດໜອງບໍ່ເຕັ່ນ,ໄປທ່ຽວຮ່ອມພູຊ້າງຜະຈົນໄພ,ຊີມອາຫານພື້ນເມືອງລາວ,ແລະ ຈັດຊື້ສິນຄ້າຢູ່ຮ້ານຄ້າປອດພາສີ ແລະ ອື່ນ,ເຊິ່ງເຮັດໃຫ້ປະຊາຊົນຕາມຊາຍແດນ ແລະ ນັກທ່ອງທ່ຽວໄດ້ສຳຜັດກັບທິວທັດປ່າຝົນທຳມະຊາດແບບດັ້ງເດີມ ແລະ ຮີດຄອງປະເພນີແບບພິເສດຂອງບໍ່ເຕັ່ນ.

ງານທ່ອງທ່ຽວວັດທະນະທຳຊາຍແດນລາວຈີນຄັ້ງນີ້ມີຫົວຂໍ້ວ່າ“ມິດຕະພາບແບບບ້ານໃກ້ເຮືອນຄຽງ,ຮ່ວມມື ແລະ ພັດທະນາພ້ອມກັນ”,ໃນຂະນະທີ່ວາງສະແດງຮີດຄອງປະເພນີ,ວັດທະນະທຳອາຫານການກິນ,ແລະ ຜະລິດຕະພັນອັນອຸດົມສົມບູນຂອງ 5 ແຂວງພາກເໜືອຂອງລາວ ແລະ ສິບສອງພັນນາຂອງຈີນ,ພ້ອມທັງສົ່ງເສີມການແລກປ່ຽນລະຫວ່າງປະຊາຊົນສອງຊາດ,ເພີ່ມທະວີຄວາມເຂົ້າໃຈ ແລະ ມິດຕະພາບເຊິ່ງກັນ ແລະ ກັນ,ກໍ່ໄດ້ສ້າງເວທີໃຫ້ແກ່ການແລກປ່ຽນດ້ານວັດທະນະທຳ ແລະ ເສດຖະກິດລະຫວ່າງສອງປະເທດ,ມີຜົນດີຕໍ່ການຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືດ້ານເສດຖະກິດ,ວັດທະນະທຳ ແລະ ການທ່ອງທ່ຽວລະຫວ່າງເຂດຊາຍແດນຂອງສອງປະເທດ,ຊຸກຍູ້ໃຫ້ການຄ້າຕາມຊາຍແດນ,ແລະ ການທ່ອງທ່ຽວພັດທະນາທັງໄວທັງດີ.

ຄຽງຄູ່ກັບເສັ້ນທາງຄຸນໝິງ-ບາງກອກທີ່ເຊື່ອມຈອດຈີນ,ລາວ ແລະ ໄທເປີດບໍລິການເປັນຕົ້ນມາ,ບໍ່ຫານຈີນ ແລະ ບໍ່ເຕັ່ນຂອງລາວໄດ້ກາຍເປັນສູນເຕົ້າໂຮມ ແລະ ແຈກຢາຍ ແລະ ເວທີທາງດ້ານການໄປມາຫາສູ່ກັນຂອງປະຊາຊົນ,ການຈໍລະຈອນສິນຄ້າ,ການແລກປ່ຽນຂໍ້ມູນຂ່າວສານ ແລະ ທຶນຮອນລະຫວ່າງຈີນກັບລາວ,ໄທກໍ່ຄືປະເທດຕ່າງໆຂອງອາຊຽນ.ເຂດເສດຖະກິດພິເສດບໍ່ເຕັ່ນທີ່ເປັນຕົວເມືອງທຳອິດເຂົ້າສູ່ປະເທດລາວຫຼັງຈາກອອກຈາກດິນແດນປະເທດຈີນໂດຍຜ່ານເສັ້ນທາງຄຸນໝິງ-ບາງກອກ,ຈະຖືການທ່ອງທ່ຽວເປັນພື້ນຖານ,ດຶງດູດຄົນນັບມື້ນັບຫຼາຍຂຶ້ນ,ແລະ ຊຸກຍູ້ໃຫ້ເຂດຮ່ວມມືເສດຖະກິດພັດທະນາຢ່າງວ່ອງໄວ.



ແຂກຜູ້ມີກຽດເຂົ້າຮ່ວມພິທີຕັກບາດ
嘉宾参加布施仪式

文 / 老挝邮电通讯电信研究院院长博士研究生宋娄・坡提拉

# ການລົງທຶນໂດຍກົງຂອງຕ່າງປະເທດໃນຂະແໜງການ ໂທລະຄົມມະນາຄົມ ສປປ ລາວ 2013

ໂດຍ: ທ່ານ ສົມນຶກ ໂພທິລາ

## 2013 年外国在老挝通讯部门的投资情况

老挝第七个经济社会发展规划（2011-2015）是老党九大制定的在2020年前使老挝摆脱不发达国家的行列，继续稳步前进，进入社会主义的目标。

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII (2011-2015) ເປັນແຜນຍຸດທະສາດຂອງກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກເພາະມັນເປັນແຜນສືບຕໍ່ບຸກທະລຸເພື່ອສ້າງພື້ນຖານ ແລະ ເງື່ອນໄຂອັນຈຳເປັນສຳລັບການນຳເອົາປະເທດເຮົາຫລຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 ແລະ ສືບຕໍ່ກ້າວຂຶ້ນຢ່າງໝັກແໜ້ນສູ່ຈຸດໝາຍສັງຄົມນິຍົມ.

ເພື່ອຮັບປະກັນໃຫ້ອັດຕາການເຕີບໂຕຂອງ GDP ເພີ່ມຂຶ້ນນັບແຕ່ 8% ຂຶ້ນໄປຕໍ່ປີ.ໃນນັ້ນຊຶ່ງປະກອບດ້ວຍ 3 ຂະແໜງການໃຫຍ່ຂະແໜງກະສິກຳ-ປ່າໄມ້ເພີ່ມຂຶ້ນປະມານ 3,5% ກວມປະມານ 23% ຂອງ GDP,ຂະແໜງອຸດສາຫະກຳເພີ່ມຂຶ້ນປະມານ 15% ກວມປະມານ 39% ຂອງ GDP ແລະ ຂະແໜງບໍລິການເພີ່ມຂຶ້ນປະມານ 6,5% ກວມປະມານ 23% ຂອງ GDP (ໃນນີ້ລວມຂະແໜງການໂທລະຄົມມະນາຄົມ).




ດ້ານການລົງທຶນ,ລະດົມການລົງທຶນທົ່ວສັງຄົມກວມປະມານ 32% ຫລື ປະມານ 127 ພັນຕື້ກີບ(15.9 ຕື້ໂດລາສະຫະລັດ).ໃນນັ້ນຈາກງົບປະມານລັດ 10-12%, ODA 24-26%,FDI (foreign Portfolio Direct Investment) 50-56% ແລະ ສິນເຊື່ອທະນາຄານ 10-12%. ໃນຈຳນວນການລົງທຶນດັ່ງກ່າວນັ້ນແມ່ນການລົງທຶນໂດຍກົງຂອງຕ່າງປະເທດ (FDI) ກວມເອົາຫລາຍກວ່າໝູ່ 50-56%.ໃນນັ້ນວຽກງານຂອງຂະແໜງໄປສະນີ ແລະ ໂທລະຄົມມະນາຄົມກໍມີບົດບາດສຳຄັນເຂົ້າໃນການສ້າງໃຫ້ເປັນຂະແໜງອຸດສາຫະກຳທີ່ສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດ ແລະ ສັງຄົມໃຫ້ເຂັ້ມແຂງ,ຍືນຍົງ ແລະ ເປັນຈຸດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.ຄາດໝາຍຕົ້ນຕໍກໍສຸມໃສ່ການຂະຫຽາຍຕາໜ່າງ ແລະ ການບໍລິການໂທລະຄົມມະນາຄົມອອກສູ່ຊົນນະບົດໃຫ້ໄດ້ 90% ຂອງຈຳນວນບ້ານໃນທົ່ວປະເທດ ແລະ ກໍ່ສ້າງລະບົບສາຍໄຍແກ້ວໃຫ້ໄດ້ປະມານ 17,200 ກມ.ຂະຫຽາຍການນຳໃຊ້ໂທລະສັບທັງໝົດໃຫ້ໄດ້ປະມານ 80% (ປັດຈຸບັນໄດ້ 79.39%) ຂອງຈຳນວນປະຊາກອນທັງໝົດ,ສ້າງສະຖານີກວດກາ ແລະ ຄຸ້ມຄອງຄື້ນຄວາມຖີ່ວິທະຍຸໃຫ້ໄດ້ 3 ແຫ່ງໃນທົ່ວປະເທດ.

ການລົງທຶນໂດຍກົງຂອງຕ່າງປະເທດ (FDI) ມັນມີບົດບາດຊ່ວຍໃຫ້ການຂະຫຍາຍຕົວຂອງທຸລະກິດຕ່າງໆໃນໂລກກໍຄືໃນ ສປປ ລາວ.ມັນສາມາດຮອງຮັບໃຫ້ຊ່ອງທາງການຕະຫຼາດ,ການຄວບຄຸມລາຄາ,ການເຂົ້າເຖິງເຕັກໂນໂລຊີແບບໃໝ່,ມີຜະລິດຕະພັນແບບໃໝ່,ບັນດາກິດຈະການ ແລະ ການລົງທຶນກໍສະດວກຕໍ່ປະເທດເຈົ້າພາບ.ສຳລັບຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດສາມາດສະໜອງບັນດາແຫຼ່ງເຕັກໂນໂລຊີແບບໃໝ່ໆໄດ້ດີ.ສປປ ລາວພວກເຮົາການລົງທຶນແບບນີ້ກໍມີບົດບາດສຳຄັນຫຼາຍໃນການພັດທະນາຂະແໜງການໂທລະຄົມມະນາຄົມ,ຊຶ່ງເປັນການຊ່ວຍຫລຸດຜ່ອນໃຫ້ການລົງທຶນຂອງລັດມີຈຳນວນໜ້ອຍລົງ ແລະ ລັດກໍຍັງໄດ້ຮັບຜົນປະໂຫຽດດີເໝືອນກັນ.

ນັບແຕ່ປີ 1995 ຫາປີ 2013,ການລົງທຶນໃນຂະແໜງການໂທລະຄົມມະນາຄົມແມ່ນໄດ້ຮັບການພັດທະນາເປັນຢ່າງດີ.ໃນນັ້ນ,ຮູບແບບຂອງ "FDI" ແມ່ນມີບົດບາດທີ່ສຳຄັນກວ່າໝູ່.ໂດຍສະເພາະແມ່ນການນຳໃຊ້ໃນ 3 ປະເພດແຕກຕ່າງກັນ ຄື:(1)ໃຫ້ທຶນ ແລະ ຕອບສະໜອງເຕັກໂນໂລຊີ:ຊຶ່ງເປັນການໃຫ້ທຶນຊ່ວຍເຫລືອລ້າ ແລະ ຕອບສະໜອງເຕັກໂນໂລຊີຢ່າງຄົບຊຸດ.




半 清 图

(2)ການລົງທຶນຮ່ວມ:ຊຶ່ງແມ່ນການລົງທຶນຮ່ວມກັນໂດຍປະຕິບັດຕາມກົດໝາຍວິສາຫະກິດຂອງ ສປປ ລາວ ແລະ (3)ຮູບແບບການລົງທຶນໂດຍກົງ:ຊຶ່ງແມ່ນຜູ້ລົງທຶນຮັບຜິດຊອບຊັບສິນ,ເຕັກໂນໂລຊີ,ບໍລິຫານ,ປະຕິບັດງານ ແລະ ບໍລິການດ້ວຍຕົນເອງທັງໝົດ.

FDI ໄດ້ຮັບການຫັນປ່ຽນໃຫ້ການພັດທະນາປະເທດມີຄວາມກ້າວຫນ້າໄດ້ເປັນຢ່າງດີຂື້ນເລື້ອຍໆ.ຕັ້ງແຕ່ນັ້ນມາລັດຖະບານໄດ້ຊຸກຍູ້ໃຫ້ການລົງທຶນມີການຂະຫຍາຍຕົວຫຼາຍຂື້ນ.ຄືໃນປີ 1994 ໄດ້ມີການປ່ຽນແປງບັນດາມາດຕະການການເປີດເສລີທາງດ້ານການລົງທຶນຂອງຕ່າງປະເທດ.ໃນປັດຈຸບັນການລົງທຶນໄດ້ສືບຕໍ່ອະນຸຍາດ ແລະ ຍັງຊຸກຍູ້ພ້ອມທັງເອົາໃຈໃສ່ຢ່າງຈິງຈັງ.ໃນເບື້ອງຕົ້ນການລົງທຶນໄດ້ນໍາສະເຫນີພຽງແຕ່ຢູ່ໃນຂະແຫນງການຈໍານວນຫນ້ອຍແຕ່ຫຼັງຈາກນັ້ນມັນໄດ້ຖືກນໍາສະເຫນີໃນຫຼາຍຂະແໜງການລວມທັງຂະແໜງການໂທລະຄົມມະນາຄົມເຊັ່ນ:ການປ່ຽນຖ່າຍເຕັກໂນໂລຊີໃຫ້ທັນສະໃໝ,ການເຈາະຕະຫຼາດ,ການພັດທະນາໃນຫລາຍໆຮູບແບບການບໍລິການຂອງໂທລະຄົມມະນາຄົມ ແລະ ການຈັດຕັ້ງບໍລິຫານກໍໄດ້ຖືກນໍາໃຊ້ເຊັ່ນດຽວກັນ.

ໃນໄລຍະປີ 1995 ຫາປີ 2013 ຂະແໜງການໂທລະຄົມມະນາຄົມໄດ້ລົງທຶນທັງໝົດເຖິງ 2,400 ລ້ານໂດລາສະຫະລັດ;ໃນນັ້ນມີ FDI 1,015 ລ້ານໂດລາສະຫະລັດ;ສົມທຽບການລົງທຶນຂອງລັດ 57.7%,ODA ແລະ FDI ເຫັນວ່າມີອັດຕາສ່ວນ 42.3%.ການລົງທຶນໂດຍກົງຂອງຕ່າງປະເທດໃນຂະແໜງການໂທລະຄົມນີ້ຖ້າທຽບໃສ່ແຜນການລວມຂອງລັດຖະບານສາມາດປະຕິບັດໄດ້ 7.8%.

ການລົງທຶນໃນຂະແໜງການໂທລະຄົມມະນາຄົມ 2013

ການລົງທຶນລວມມີ 2.4 ຕື້ໂດລາສະຫະລັດ,ການລົງທຶນຂອງລັດມີ 1.4 ຕື້ໂດລາສະຫະລັດ,ODA&FDI ມີ 1.1 ຕື້ໂດລາສະຫະລັດ.

ສັງເກດເຫັນໄດ້ວ່າລັດໄດ້ລົງທຶນຫລາຍກວ່າ FDI. ແຕ່ການລົງທຶນຂອງລັດຈະເນັ້ນໜັກໃສ່ພື້ນຖານໂຄງລ່າງ,ເປັນຕົ້ນຕໍ ແລະ ເປັນການຄຸ້ມຄອງທີ່ສໍາຄັນຂອງລະບົບ,FDI ຈະເປັນການລົງທຶນໃສ່ໃນລະບົບການໃຫ້ບໍລິການຂອງພາກສ່ວນວິສາຫະກິດເປັນຕົ້ນຕໍ.

ສະຫຼຸບລວມແລ້ວ,ການລົງທຶນໂດຍກົງຂອງຕ່າງປະເທດນີ້ໄດ້ມີບົດບາດສໍາຄັນຫຼາຍໃນການພັດທະນາໃນຂະແຫນງການໂທລະຄົມມະນາຄົມຢູ່ ສປປ ລາວ ພວກເຮົາ.ໃນໄລຍະເວລາຕັ້ງແຕ່ປີ 1995 ຫາປີ 2013, ລັດຖະບານໄດ້ສ້າງນະໂຍບາຍຈໍານວນຫລວງຫຼາຍໃນການດຶງດູດການລົງທຶນໃນຂະແຫນງນີ້.ແຕ່ການລົງທຶນກໍຍັງເຫັນວ່າຍັງບໍ່ທັນພຽງພໍກັບຄາດໝາຍທີ່ວາງໄວ້ ແລະ ບັນຫານີ້ກໍໄດ້ຮັບຜົນກະທົບຕໍ່ການພັດທະນາຂອງຂະແຫນງການເຊັ່ນດຽວກັນກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດເໝືອນກັນ.

ປີ 2002 ເຖິງປີ 2013 ສປປ ລາວລັດໄດ້ສ້າງພື້ນຖານໂຄງລ່າງໂທລະຄົມມະນາຄົມຊຶ່ງຖືວ່າການຮ່ວມມືດ້ານວິຊາການ ແລະ ການສໍາມະນາໂດຍມີການຮ່ວມມືຢ່າງໃກ້ຊິດກັບບັນດາປະເທດທີ່ມີຊາຍແດນຕິດກັນ,ບັນດາປະເທດຄູ່ຮ່ວມງານ ແລະ ປະເທດອາຊຽນ.





文、图／陈 川

# ອົງກອນກວດກາຊາຍແດນຈີນ-ລາວດຳເນີນການພົບປະທາງດ້ານກິດຈະກຳປ້ອງກັນຊາຍແດນ



**中老边检机关开展边防业务会晤**

**2015 年 1 月 23 日，以老挝磨丁公安检查站站长宋塞・巴纳西为团长的老方代表团一行 8 人到中国磨憨边防检查站与该站举行 2014 年第四季度边防业务会晤。**

ອີງຕາມ《ບົດບັນທຶກພົບປະເຈລະຈາ》ລະຫວ່າງກອງໃຫຍ່ສັນຕິບານປ້ອງກັນຊາຍແດນແຂວງຢຸນນານ ແລະ ກອງບັນຊາການ ປກສ ພາກເໜືອ 4 ແຂວງ ແລະ ປະເພນີມິດຕະພາບໄຕມາດໜຶ່ງພົບປະກັນຄັ້ງໜຶ່ງລະຫວ່າງສະຖານີກວດກາຊາຍແດນບໍ່ຫານຈີນ ແລະ ສະຖານີກວດກາຊາຍແດນ ກປສ ບໍ່ເຕັນລາວ,ຕາມຄຳເຊື້ອເຊີນຈາກສະຖານີກວດກາຊາຍແດນບໍ່ຫານຈີນ, ວັນທີ 23 ເດືອນ 1 ປີ 2015,ຄະນະຜູ້ແທນລາວນຳໂດຍ ສົມໄຊ ປະລາສິດ ຫົວໜ້າສະຖານີກວດກາຊາຍແດນບໍ່ເຕັນລາວເປັນຫົວໜ້າຄະນະລວມຈຳນວນ 8 ທ່ານມາເຖິງສະຖານີກວດກາຊາຍແດນບໍ່ຫານຈີນດຳເນີນການພົບປະກ່ຽວກັບກິດຈະກຳປ້ອງການຊາຍແດນໄຕມາດທີ 4 ສົກປີ 2014.

ການພົບປະດຳເນີນໄປໃນທ່າມກາງບັນຍາກາດກົງໄປກົງມາ,ມິດຕະພາບໄມຕີຈິດ ແລະ ເຮັດແທ້ທຳຈິງ.ກ່ອນອື່ນໝົດ,ທັງສອງຝ່າຍແຈ້ງສະພາບການກວດກາປ້ອງກັນຊາຍແດນໄຕມາດທີ 4 ປີ 2014 ໃຫ້ຊາບ ແລະ ຕ່າງກໍທຳການຕອບບັນຫາທີ່ກ່ຽວຂ້ອງ ແລະ ຕອບຄືນເຊິ່ງຝ່າຍກົງກັນຂ້າມສະເໜີອອກມາ.ຕໍ່ມາ,ທັງສອງຝ່າຍຈະຕ້ອງເພີ່ມທະວີຄວາມຖີ່ໃນການສາລະເວຄວບຄຸມດ່ານຊາຍແດນຕື່ມອີກ,ຍົກລະດັບປະສິດທິພາບຜ່ານດ່ານໄລຍະວັນບຸນທີ່ສຳຄັນໃຫ້ສູງຂຶ້ນ,ເຮັດໃຫ້ການຄົ້ນຄວ້າຂໍ້ມູນຂ່າວສານຂອງໜັງສືຜ່ານແດນເຂົ້າອອກເມືອງໃຫ້ຊາບກັນ ແລະ ຮ່ວມກັນນຳໃຊ້ໃຫ້ສົມບູນແບບ,ປະຕິບັດມາດຕະການຜ່ານດ່ານສະດວກສະບາຍ ແລະ ດຳເນີນການຄົ້ນຄວ້າເພື່ອຊຸກດັນການສ້າງສາເຂດຮ່ວມມືເສດຖະກິດຂ້າມແດນບໍ່ຫານ-ບໍ່ເຕັນໃຫ້ດີຍິ່ງຂຶ້ນກວ່າເກົ່າ.ໄດ້ບັນລຸເຖິງຄວາມເຂົ້າໃຈຮ່ວມກັນ. ທັງສອງຝ່າຍສະແດງຄວາມເປັນເອກະສັນກັນວ່າ,ຈະຕ້ອງຍຶດໝັ້ນຫຼັກການຮ່ວມມືແລກປ່ຽນກັນທີ່ວ່າ“ສະພາວະເປັນປົກກະຕິ,ນຳໃຊ້ຮ່ວມກັນ,ທົດແທນເຊິ່ງກັນ ແລະ ກັນ,ປະສານສົມທົບກັນ ແລະ ໄດ້ຮັບຜົນປະໂຫຍດຮ່ວມກັນ”ແຕ່ກົກສຸດປ້າຍ,ເຊື່ອມຊຶມປະຕິບັດລະບອບພົບປະເຈລະຈາກັນກ່ຽວກັບກິດຈະກຳປ້ອງກັນຊາຍແດນຢ່າງເດັດຂາດ,ເຮັດໃຫ້ກົນໄກຮ່ວມມືກັນດ້ານກິດຈະກຳຕຳຫລວດຈີນລາວໃຫ້ສົມບູນແບບ,ເພື່ອປົກປັກຮັກສາເຂດຊາຍແດນຈີນລາວມີຄວາມສະຖຽນນະພາບ ແລະ ມີຄວາມປອດໄພ,ປະກອບສ່ວນເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດເຂດຊາຍແດນ.






文、图 / 老挝丰沙里昌胜达咖啡公司

# ບໍລິສັດກາເຟຊາງເຊີນດາແຂວງຜົ້ງສາລີກຳລັງພັດທະນາຢ່າງວ່ອງໄວ

## --ຮູບການຮ່ວມມື"ການປູກພືດທົດແທນ"ແນວທາງທີ່ມີແນວໂນ້ມຈະເລີນຮຸ່ງເຮືອງ

## 迅速发展中的老挝丰沙里昌胜达咖啡公司

### ——前景灿烂的“替代种植”合作模式

2009年在昆明成立的云南昌胜达投资有限公司，是云南省批准的对外贸易投资企业。2011年公司在老挝丰沙里省成立子公司——昌胜达咖啡公司，主要经营咖啡、橡胶等农产品的种植及加工。2014年公司在昆明成立销售公司——云南昌胜达咖啡有限公司，负责咖啡产品的销售及推广。



ທ່ານ ອິນຊິນຮວາ ປະທານບໍລິສັດ
公司董事长尹新华

ບໍລິສັດການລົງທຶນຊາງເຊີນດາຢຸນນານຈຳກັດທີ່ໄດ້ສ້າງຕັ້ງຂຶ້ນຢູ່ຄຸນໝິງໃນປີ 2009 ແມ່ນວິສາຫະກິດການລົງທຶນຕໍ່ການຄ້າກັບຕ່າງປະເທດທີ່ແຂວງປຸນນານອະນຸມັດໃຫ້ນັ້ນ.ໃນປີ 2011,ບໍລິສັດດັ່ງກ່າວນີ້ໄດ້ສ້າງຕັ້ງບໍລິສັດສາຂາ—ບໍລິສັດກາເຟຊາງເຊີນດາຢູ່ແຂວງຜົ້ງສາລີລາວ,ທຸລະກິດຕົ້ນຕໍແມ່ນປູກ ແລະ ປຸງແຕ່ງຜະລິດຕະພັນກະສິກຳເຊັ່ນ:ກາເຟ,ຢາງພາລາ ແລະ ອື່ນໆ.ໃນປີ 2014,ບໍລິສັດໄດ້ສ້າງຕັ້ງບໍລິສັດຈຳໜ່າຍທີ່ຄຸນໝິງ—ບໍລິສັດກາເຟຊາງເຊີນດາຢຸນນານຈຳກັດເປັນຜູ້ຮັບຜິດຊອບການຈຳໜ່າຍ ແລະ ຊຸກຍູ້ຂະຫຍາຍຜະລິດຕະພັນກາເຟ.

ນັບແຕ່ບໍລິສັດສ້າງຕັ້ງຂຶ້ນເປັນຕົ້ນມາ,ປະຕິບັດຍຸດທະສາດພັດທະນາການຮ່ວມມືປຸນນານລາວຢ່າງຕັ້ງໜ້າ.ເພື່ອການຊຸກດັນຂະຫຍາຍຖານທີ່ປູກກາເຟໃຫ້ກວ້າງຂວາງຢູ່ແຂວງຜົ້ງສາລີທີ່ມີຊັບພະຍາກອນທີ່ດິນອຸດົມສົມບູນ ແລະ ທຸກຍາກດ້ວຍ"ການປູກຝັງກາເຟທົດແທນປູກຢາຝິ່ນ",ເພື່ອການອອກເຫື່ອເຫແຮງຈົນສຸດຂີດໃຫ້ແກ່ການເລື່ອນຊັ້ນກິດຈະກຳກະສິກຳໃນການຮ່ວມມືປຸນນານລາວ ແລະ ກິດຈະການປາບປາມຢາເສບຕິດໃນສັງຄົມ.

ຈົນເຖິງປີ 2013,ບໍລິສັດໄດ້ສ້າງຕັ້ງບໍລິສັດລູກຢູ່ເມືອງຜົ້ງສາລີ,ເມືອງໃໝ່,ບຸນໃຕ້,ເມືອງສຳພັນ,ບຸນເໜືອຂອງແຂວງຜົ້ງສາລີ.ສຳນັກງານໃຫຍ່ຂອງບໍລິສັດກາເຟຊາງເຊີນດາລາວກໍຕັ້ງຢູ່ເມືອງບຸນເໜືອ,ໄດ້ເຊັນສັນຍາໂຄງການປູກກາເຟເນື້ອທີ່ແສນແປດສິບພັນມູໃນ 6 ເມືອງດັ່ງກ່າວນີ້ຂອງແຂວງຜົ້ງສາລີ.

ນັບແຕ່ປະຕິບັດໂຄງການຮ່ວມມືກາເຟລາວໃນການປູກຝັງທົດແທນເປັນຕົ້ນມາ,ໄດ້ເຊື້ອເຊີນນັກວິຊາການສະເພາະແຂວງປຸນນານລົງສູ່ໝູ່ບ້ານ ແລະ ຄອບຄົວຊາວໄຮ່ນາດຳເນີນການຊີ້ນຳດ້ານເຕັກນິກການປູກຝັງກາເຟ.ປັດຈຸບັນນີ້,ໄດ້ສຳເລັດການປູກຝັງກາເຟ 38.000 ມູ(1ເຮັກຕາເທົ່າກັບ 1 ມູ).ຕົ້ນກາເຟທີ່ປູກຝັງທຳອິດໄດ້ເປັນໝາກປຸງແຕ່ງເປັນຜະລິດຕະພັນກາເຟຈຳໜ່າຍແລ້ວ.ໄດ້ແກ້ໄຂບັນຫາການຫາວຽກເຮັດງານທຳ ແລະ ຊີວິດການຄອງຊີບຂອງປະຊາຊົນເປັນຈຳນວນ 126 ບ້ານ 7.000 ກວ່າຄົວເຮືອນ 30.000 ກວ່າຄົນ,ໃນນັ້ນ,ໄດ້ຮັບເອົາຊາວກະສິກອນມາປູກຢາສູບເກືອບ 10.000 ກວ່າຄົນ.



ກອງນຳໜ້າຕ້ານຢາເສບຕິດຊີ້ນຳຊາວນາທີ່ປູກກາເຟ
禁毒先锋指导咖农

ປັດຈຸບັນນີ້,ຜະລິດຕະພັນຕົ້ນຕໍຂອງບໍລິສັດແມ່ນ:ຫົ່ກວາເອີກາເຟ,ໝາກກາເຟດິບ,ໝາກກາເຟອົບແຫ້ງ,ແປ້ງໝາກກາເຟອົບຂົ້ວ,ກາເຟເປືອຍໄວ ແລະ ອື່ນໆ.ທັງມີຍີ່ຫໍ້ຂອງຕົນຄື:"ກາເຟເກົ່າ","ສະບາຍດີ".

ການປູກກາເຟຂອງບໍລິສັດມີຄວາມຄືບໜ້າຢ່າງວ່ອງໄວ,ກ່ອນທ້າຍເດືອນ 5 ປີ 2015 ຈະສ້າງຕັ້ງໂຮງ



ຍ້າຍເບ້ຍໄມ້ໄປປູກ
移苗栽培



ວຽກງານປຸງແຕ່ງກາເຟ 2-3 ຫລັງອື່ນ.

ບໍລິສັດໄດ້ສ້າງທາງ 100 ກວ່າກິໂລແມັດໂດຍບໍ່ເກັບຄ່າຢູ່ເຂດປູກຝັງທົດແທນ ແລະ ບໍລິຈາກລົດຈັກໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ;ອອກເງິນຊ່ວຍເຫຼືອພາກສ່ວນແຂວງຜົ້ງສາລີ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດການເຄື່ອນໄຫວວັດທະນະທຳຫຼາຍຊະນິດ;ອູ້ມຊູກິດຈະກຳການສຶກສາທ້ອງຖິ່ນ,ຊ່ວຍເຫຼືອເຄື່ອງໃຊ້ການຮຽນແກ່ນັກຮຽນ,ຈັດຊຸດອົບຮົມຮຽນພາສາຈີນ ແລະ ຝຶກອົບຮົມຮຽນຄອມພິວເຕີໂດຍບໍ່ເສຍຄ່າ;ຈັດຕັ້ງການນຳຂັ້ນບ້ານໄປທັດສະນະສຶກສາພື້ນຖານປູກຝັງກາເຟຈີນ,ທຸກໆເດືອນໄດ້ດຳເນີນການຝຶກອົບຮົມເຕັກນິກປູກຝັງກາເຟແກ່ນັກວິຊາການຂັ້ນບ້ານທີ່ເປັນບ້ານຈຸດສຸມ,ລວມທັງເຊື້ອເຊີນການນຳທີ່ກ່ຽວຂ້ອງຂອງຄະນະປາບປາມຢາເສບຕິດແຂວງຜົ້ງສາລີຈັດປາຖະກະຖາກ່ຽວກັບການປູກຝັງທົດແທນ ແລະ ປາບປາມຢາເສບຕິດ. ການນຳເລຂາໜ່ວຍພັກຂອງບໍລິສັດຊາງເຊີນດາໄດ້ດຳເນີນການໂຄສະນາເຜີຍແຜ່ນະໂຍບາຍການຮ່ວມມືຢູນນານ ແລະ ລາວໄດ້ຮັບຜົນປະໂຫຍດຮ່ວມກັນ,ການປູກຝັງທົດແທນ ແລະ ອື່ນໆ.

ນັບແຕ່ເດືອນ 10 ປີ 2014 ເປັນຕົ້ນມາ,ບໍລິສັດກາເຟຊາງເຊີນດາ,ພະແນກກະສິກຳປ່າໄມ້ແຂວງຜົ້ງສາລີ,ຄະນະກຳມະການປາບປາມຢາເສບຕິດສາມຝ່າຍກຳລັງກະກຽມຮ່ວມກັນສ້າງຕັ້ງພື້ນຖານຝຶກອົບຮົມເຕັກນິກການປູກຝັງກາເຟທົດແທນປູກຢາຝິ່ນແຂວງຜົ້ງສາລີ. ບໍລິສັດເປັນເຈົ້າພາບເປັນຜູ້ຮັບຜິດຊອບວຽກງານການສ້າງສາພື້ນຖານ ແລະ ບໍລິຫານຄຸ້ມຄອງປະຈຳວັນ,ຮັບຜິດຊອບທຶນຮອນຈັດທຳການຮຽນ.ເພື່ອບຳລຸງກໍ່ສ້າງບຸກຄະລາກອນດ້ານວິຊາສະເພາະທີ່ເປັນຕ່ອງໂສ້ໝົດເຊັ່ນ:ການປູກຝັງ,ການປຸງແຕ່ງ,ການຊົງຕົ້ມ ແລະ ອື່ນໆ,ຊຸກດັນໂຄງການການປູກຝັງກາເຟທົດແທນການປູກຢາຝິ່ນຂອງຜົ້ງສາລີສືບຕໍ່ພັດທະນາແບບຍືນຍົງຢ່າງແຂງແຮງ.

ບໍລິສັດໄດ້ວາງແຜນຮອດປີ 2019 ສຳເລັດການປູກຝັງກາເຟທີ່ມີເນື້ອທີ່ລວມ 180.000 ມູ,ຫວັງຢ່າງຍິ່ງວ່າ,ຈະສ້າງສາແຂວງຜົ້ງສາລີກາຍເປັນແລວກິດຈະກຳກາເຟພາກເໜືອລາວ ແລະ ແຂວງທີ່ມີເສດຖະກິດຈະເລີນ.

ການປະກອບສ່ວນຂອງບໍລິສັດເຂົ້າໃນການປາບປາມຢາເສບຕິດ,ຫລຸດຜ່ອນຄວາມທຸກຍາກ ແລະ ສາທາລະນະປະໂຫຍດ ແລະ ອື່ນໆໃຫ້ແກ່ແຂວງຜົ້ງສາລີໄດ້ຮັບຄວາມຍືນຢັນຈາກລັດຖະບານລາວ ແລະ ໄດ້ຮັບຄວາມຍ້ອງຍໍສັນລະເສີນຫຼາຍເທື່ອ,ໂດຍສະເພາະໄດ້ຮັບຄວາມຍິນດີຕ້ອນຮັບຢ່າງສຸດໃຈ ແລະ ການສະໜັບສະໜູນຢ່າງແຂງແຮງຈາກປະຊາຊົນທ້ອງຖິ່ນ.

ໂຄງການປູກກາເຟ 180.000 ມູຂອງບໍລິສັດໄດ້ປະຕິບັດຢ່າງສຳເລັດໝົດຢູ່ຜົ້ງສາລີ,ການຜະລິດກາ



ຜູ້ຊ່ຽວຊານຝຶກອົບຮົມຊາວນາທີ່ປູກກາເຟ
专家培训咖农



ພື້ນຖານເມືອງໃໝ່
勐迈基地

ເຟຈະກາຍເປັນເສົາຄ້ຳດ້ານເສດຖະກິດທີ່ສຳຄັນໃນເຂດໂຄງການ,ແລະ ຈະສະໜອງກາເຟດັ້ງເດີມປະຖົມປະຖານສຸດໃຫ້ແກ່ໂລກ,ຈະເຮັດໃຫ້ພົນລະເມືອງເກືອບ 80% ຂອງຜົ້ງສາລີ ແລະ 130.000 ຄົນຂຶ້ນໄປໃນ 6 ເມືອງຈະພົ້ນທຸກໄປສູ່ຄວາມຮັ່ງມີຂຶ້ນ.



# ຮ່ວມກັນລົມກັນກ່ຽວກັບການພັດທະນາຢູນນານໃຕ້ສະພາວະປົກກະຕິແບບໃໝ່

## 新常态下　共话云南发展

**2015年是云南省全面深化改革的关键之年，是全面推进依法治省的开局之年，也是全面完成“十二五”规划的收官之年。**

ປີ 2015 ເປັນປີຂໍກຸນແຈລົງເລິກການປະຕິຮູບຢ່າງຮອບດ້ານຂອງຢູນນານ,ເປັນປີແຫ່ງການເປີດບັ້ນຮົບເພື່ອຊຸກຍູ້ການປົກຄອງແຂວງດ້ວຍກົດໝາຍ,ທັງເປັນປີທີ່ແຜນການ 5 ປີຄັ້ງທີ 12 ໄດ້ຮັບຜົນສຳເລັດຢ່າງຮອບດ້ານ.

ໃຈຕິດພັນກັບປະຊາຊົນຢູນນານ,ຈິດໃຈສົນໃຈນຳການພັດທະນາພູພຽງ.ຫາກໍ່ມາເຖິງປີໃໝ່ທີ່ທ່ານ ສີຈິນຜີງ ເລຂາທິການໃຫຍ່ໄດ້ອອກຄຳຊີ້ແຈ້ງອັນໃໝ່ຕໍ່ການພັດທະນາຢູນນານ,ສະເໜີຄຳຮອງຂໍອັນໃໝ່.ປິ່ນອ້ອມຄຳຊີ້ແຈ້ງຂອງເລຂາທິການໃຫຍ່,ກອງປະຊຸມສອງສະພາຂອງຢູນນານໄດ້ເປີດດ້ວຍການປະດິດສ້າງໃໝ່ ແລະ ເຮັດແທ້ທຳຈິງ,ໄດ້ສ້າງພື້ນຖານແກ່ການເຮັດສຳເລັດວຽກງານປີ 2015 ເປັນຢ່າງດີ.

ໄດ້ຂຽນບົດໃໝ່ຢູນນານທີ່ມີຄວາມຝັນຈີນເປັນຢ່າງດີ.

ທ່ານ ລີຈີເຫີງ ເລຂາຄະນະພັກແຂວງຢູນນານໄດ້ຊີ້ອອກໃຫ້ເຫັນໃນກອງປະຊຸມຄະນະກຳມະການຜູ້ແທນສະມາຊິກພັກໃນກອງປະຊຸມທັງສອງປີນີ້ວ່າ,ຍຶດໝັ້ນການສ້າງສາເສດຖະກິດເປັນໃຈກາງ,ຍຶດໝັ້ນພັດທະນາກິດຈະກຳສຳຄັນທີ 1,ຍຶດໝັ້ນພື້ນຖານລວມທີ່ສະແຫວງຫາຄວາມກ້າວໜ້າຢູ່ໃນສະຖຽນລະພາບ,ນຳໜ້າວຽກງານທຸກປະການດ້ວຍການສ້າງສາສັງຄົມຢູ່ດີກິນດີ,ລົງເລິກການປະຕິຮູບຢ່າງຮອບດ້ານ,ປົກຄອງປະເທດດ້ວຍກົດໝາຍຢ່າງຮອບດ້ານ,ປົກຄອງພັກຢ່າງເຂັ້ມງວດຢ່າງຮອບດ້ານ.ອອກແຮງຮັກສາການພັດທະນາເສດຖະກິດຢ່າງແຂງແຮງ ແລະ ໝັ້ນທ່ຽງ,ອອກແຮງຊຸກຍູ້ການສ້າງສາກະສິກຳທັນສະໄໝ,ອອກແຮງຊຸກຍູ້ການອານຸຮັກສະພາບແວດລ້ອມຊີວະວິທະຍາ,ອອກແຮງຊຸກຍູ້ກິດຈະກຳທີ່ມີຄວາມກ້າວໜ້າທາງດ້ານຄວາມສາມັກຄີຊົນຊາດຊົນເຜົ່າ,ອອກແຮງສົ່ງເສີມບົດບາດຂອງການຈັດຕັ້ງພັກ,ປະຕິບັດຄວາມຮ້ອງຂໍປົກຄອງພັກດ້ວຍກົດໝາຍຢ່າງເຂັ້ມງວດໃຫ້ປະກົດເປັນຈິງ.ເພີ່ມທະວີການສ້າງສາດ້ານການເມືອງປະຊາທິປະໄຕ,ສຳເລັດໜ້າທີ່ເປົ້າໝາຍແຜນການ 5 ປີຄັ້ງທີ 12 ຢ່າງຈົບງາມ,ຊຸກດັນການພັດທະນະແບບກ້າວກະໂດດຂອງຢູນນານປະກົດຜົນເປັນຈິງ,ຂຽນບົດໃໝ່ຢູນນານແຫ່ງຄວາມຝັນຈີນເປັນຢ່າງດີ.ທ່ານໄດ້ແໜ້ນໜັກຈະຕ້ອງຈື່ຈຳການມອບໝາຍຂອງທ່ານ ສີຈິນຜີງ ເລຂາທິການໃຫຍ່,ໃຫ້ເຂດທີ່ທຸກຍາກກັນດັນພ້ອມກັນສ້າງສາສັງຄົມຢູ່ດີກິນດີຢ່າງຮອບດ້ານໃນເວລາເຂົ້າຮ່ວມຄະນະຜູ້ແທນຈາວທອງກວດສອບມະຕິນັ້ນ.ທ່ານເວົ້າວ່າ,ຈາວທອງແມ່ນປະຕູທີ່ສຳຄັນຂອງຢູນນານເຂົ້າຮ່ວມການພັດທະນາແລວເສດຖະກິດຢາງຊີກຽງ ແລະ ສະໜາມຮົບຫຼັກໃນການໂຈມຕີປ້ອມແຂງແກ່ນແຫ່ງການພັດທະນາ ແລະ ລຶບລ້າງຄວາມທຸກຍາກອົງເຂດຢູນນານທີ່ພູອູມົ່ງ,ທັງເປັນຖານທີ່ສ້າງສາຄືນໃໝ່ເພື່ອຟື້ນຟູຫລັງໄພພິບັດແຜ່ນດິນໄຫວລູຕຽນຂັ້ນ 6.5 ຣິກເຕີ.ຫວັງວ່າ,ທາງນະຄອນຈາວທອງເສີມຂະຫຍາຍປະຕິບັດນ້ຳໃຈຄຳຊີ້ແຈ້ງທີ່ສຳຄັນຂອງທ່ານ ສີຈິນຜີງ ເລຂາທິການໃຫຍ່ສຳຫລວດຢູນນານຢ່າງຮອບດ້ານ,ປົດປ່ອຍແນວຄິດ,ກຳແໜ້ນກາລະໂອກາດ,ບຸກເບີກປະດິດສ້າງໃໝ່,ທຳງານເອົາຈິງເອົາຈັງເຊື່ອມໂຍງເຂົ້າສູ່ການພັດທະນາແລວເສດຖະກິດແມ່ນ້ຳຢາງຊີກຽງ,ການສ້າງສາລະບົບອຸດສາຫະກຳທັນສະໄໝທີ່ມີສີສັນພິເສດ,ການສ້າງຜັງເມືອງແບບໃໝ່,ຕີເອົາຊະນະການສູ້ຮົບລຶບລ້າງຄວາມທຸກຍາກ ແລະ ບຸກເບີກພັດທະນາ,ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງສາຟື້ນຟູຫລັງໄພພິບັດແຜ່ນດິນໄຫວລູຕຽນ,ອອກແຮງປະດິດສ້າງສະຖານະພາບໃໝ່ໃນການພັດທະນາເສດຖະກິດສັງຄົມຂອງຈາວທອງ.

ຊຸກຍູ້ການພັດທະນາດ້ວຍການພັດທະນາສີຂຽວເປັນໃຈກາງ

ທ່ານ ເຊີນຫາວ ຫາກໍ່ຖືກເລືອກຕັ້ງເປັນເຈົ້າແຂວງນັ້ນໃນເວລາເຂົ້າຮ່ວມຄະນະຜູ້ແທນສິບສອງພັນນາກວດສອບມະຕິໄດ້ຊີ້ອອກວ່າ:ຊຸກຍູ້ການພັດທະນາແບບກ້າວກະໂດດດ້ວຍການພັດທະນາສີຂຽວເປັນໃຈກາງ.ທ່ານຫວັງວ່າ,ກົງແຂວງເຜົ່າລື້ປົກຄອງຕົນເອງສິບສອງພັນນາຈະຕ້ອງລົງເລິກການຮ່ຳຮຽນ ແລະ ປະຕິບັດຕາມຈິດໃຈຄຳປາໄສທີ່ສຳຄັນຂອງ ສີຈິນຜີງ ເລຂາທິການໃຫຍ່ຢ່າງຕັ້ງໜ້າ,ນຳພາວຽກງານທຸກປະການເປັນຢ່າງດີ.ໜຶ່ງ:ຈະຕ້ອງຖືເອົາການພັດທະນາສີຂຽວເປັນໃຈກາງ,ຊຸກດັນເສດຖະກິດສັງຄົມພັດທະນາແບບກ້າວກະໂດດ.ປິ່ນອ້ອມປັດໃຈສີຂຽວຢ່າງແໜ້ນ,ເຮັດໃຫ້ການນຳພາວາງແຜນ,ອອກແຮງອະນຸຮັກສະພາບແວດລ້ອມທຳມະຊາດເປັນຢ່າງດີ,ການພັດທະນາອຸດສາຫະກຳແບບສີຂຽວ,ການບໍລິໂພກແບບສີຂຽວ,ພັດທະນາຕົວເມືອງ ແລະ ຊົນນະບົດເປັນອັນໜຶ່ງອັນດຽວກັນ ແລະ ອື່ນໆ.ສອງ:ຈະຕ້ອງເຮັດໃຫ້ກິດຈະກຳການທ່ອງທ່ຽວເປັນຢ່າງດີ,ສືບຕໍ່ຖືເອົາການທ່ອງທ່ຽວເປັນອຸດສາຫະກຳທີ່ໜຶ່ງ ແລະ ຍີ່ຫໍ້ດັ່ງທີ 1 ມາວາງແຜນ,ເພື່ອຊຸກຍູ້ວັດທະນະທຳຊົນເຜົ່າ ແລະ ກິດຈະກຳການທ່ອງທ່ຽວເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ,ອອກແຮງຊຸກດັນກິດຈະກຳການທ່ອງທ່ຽວເຮັດໃຫຍ່,ເຮັດເຂັ້ມແຂງ,ເຮັດເປັນຍອດຢ້ຽມ,ເຮັດເປັນດີເລີດ,ພະຍາຍາມເຮັດເປັນຕົວຢ່າງເຮັດເປັນສາທິດ.ສາມ:ຈະຕ້ອງສົ່ງເສີມທ່າແຮງພູມີພາກເຂດຊາຍແດນ,ເຮັດວຽກໃຫຍ່ເປີດປະຕູສູ່ພາຍນອກເປັນຢ່າງດີດ້ວຍຈິນຕະນາການທີ່ເປີດກວ້າງ,ມາດຕາການປະດິດສ້າງໃໝ່,ພະຍາຍາມເປັນກອງໜ້າບຸກທີ່ເປີດປະຕູສູ່ພາຍນອກໃນທົ່ວແຂວງ.ສີ່:ຈະຕ້ອງເພີ່ມທະວີໂຄງການເຮັດໃຫ້ປະຊາຊົນຮັ່ງມີຂຶ້ນ,ອອກແຮງປະຕິບັດລຶບລ້າງຄວາມທຸກຍາກ ແລະ ບຸກເບີກ,ກຳແໜ້ນການພັດທະນາອຸດສາຫະກຳທີ່ມີສີສັນພິເສດ,ຊັກນຳປະຊາຊົນທຸກຍາກຫລຸດພົ້ນອອກຈາກຄວາມທຸກຍາກກ້າວເຂົ້າສູ່ຄວາມຮັ່ງມີຂຶ້ນ.



ເຂດຜານຫລອງນະຄອນຄຸນໝິງ
昆明市盘龙区　刘扬武 图

## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍີວູ, ເມືອງນານນີງ, ເມືອງພິງຊຽງ, ເມືອງຄຸນໝີງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່ວາຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢູ່ນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຄຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້
-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກ ກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ
-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965
ໂທລະສັບລາວ: 020 98000013
ພາສາລາວ: 020 98209598
EMAIL: ocean@transgz.com
ເວບໄຊ:www.transgz.com



广州共成运输代理有限公司
## 中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门门高度赞扬。

我司提供的服务项目：
——中国广州到老挝万象4天汽车快运
——中国广州经曼谷到万象的海陆联运服务
——老挝出口到中国等国家的物流服务

中国热线：86 20 36517965
老挝热线：020-98000013
老挝文： 020-28140016
EMAIL:ocean@transgz.com
网址：www.transgz.com




## 《占芭》老挝全国广告招商总代理
## ——LAO FUTURE 传媒公司

扫一扫，掌握老挝最新资讯

ຍິນດີຕ້ອນຮັບຂໍເຊີນທຸກໆທ່ານມາລົງໂຄສະນານຳພວກເຮົາ

ພວກເຮົາເນັ້ນໃສ່ສ່ວນຫລາຍແມ່ນດ້ານການເສດຖະກິດ,
ການເມືອງ,ການສຶກສາ,ວັດທະນາທຳ,ການທ່ອງທ່ຽວ ແລະ ອື່ນໆ

**老挝资讯网**

www.360laos.com 搜索一下

商务服务 | 二手买卖 | 吃喝玩乐 | 人才招聘

**www.360laos.com**

新闻资讯 | 政策法规 | 招标投资 | 风土民情

文、图／云南建工集团有限公司

# ເພີ່ມທະວີການລົງທຶນ ລົງເລິກຊຸກຍູ້ການທຸລະກິດ ແລະ ການລະດົມທຶນພ້ອມກັນ

## --ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານສຸມກຳລັງສຸດຂີດເພື່ອພັດທະນາກຸ່ມບໍລິສັດ

### 强化投资引领　深化产融双驱

——云南建工一路高歌猛进全力打造建设集团

2014年，是云南建工集团有限公司全力打造建设集团卓有成效、继往开来、取得突破性和决定性进展的一年。始终坚持以市场为导向，以稳中求进为总基调，不断巩固集团化、实体化成果，强化投资引领、深化产融双驱的发展格局，坚定不移实施“两个转移”，顺利推进企业深化改革和转型升级，全面完成了集团各项目标任务。

ປີ 2014 ແມ່ນປີໜຶ່ງທີ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໄດ້ມີຄວາມຄືບໜ້າອັນຍິ່ງໃຫຍ່ ແລະ ມີປະສິດທິຜົນສູງໃນການພັດທະນາກຸ່ມບໍລິສັດ.ຍຶດໝັ້ນຖືຕະຫຼາດເປັນທິດຊີ້ນຳ,ຖືຄວາມກ້າວໜ້າຢ່າງໝັ້ນທ່ຽງເປັນຈັງຫວະພື້ນຖານ,ປັບປຸງຜົນງານທີ່ຫັນເປັນກຸ່ມບໍລິສັດ ແລະ ທຸລະກິດຮູບປະທຳ,ເພີ່ມທະວີການລົງທຶນ,ລົງເລິກສະພາບການທີ່ການພັດທະນາທຸລະກິດ ແລະ ການລະດົມທຶນພ້ອມກັນ,ປະຕິບັດແຜນການ“ 2 ຍົກຍ້າຍ”ຢ່າງເດັດດ່ຽວໜຽວແໜ້ນ,ຊຸກຍູ້ລົງເລິກການປະຕິຮູບວິສາຫະກິດ,ຫັນປ່ຽນຮູບການພັດທະນາໃຫ້ຂຶ້ນສູ່ລະດັບສູງກວ່າ



ໂຄງການປັບປຸງເຂດເຮືອນຕູບອົງເຂດໂຮງງານການພິມ ແລະ ຍ້ອມສີນະຄອນສີຊິງ(ພາບສະແດງຜົນ)
曲靖市印染厂片区棚户区改造项目（效果图）






ປີ 2013 ,ບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ ແລະ ທະນາຄານຄົມມະນາຄົມສາຂາຢູນນານລົງນາມໃນເຊັນສັນຍາການຮ່ວມມືຍຸດທະສາດ. ທ່ານ ເຊີນເວີນຊານ(ຂວາມືທາງໜ້າ) ເລຂາຄະນະພັກ, ປະທານບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ ແລະ ທ່ານ ລີຕ້າຈິ່ນ ຫົວໜ້າທະນາຄານຄົມມະນາຄົມສາຂາຢູນນານເຊັນສັນຍາ
2013 年，云南建工集团有限公司与交通银行云南省分行签订战略合作协议。集团公司党委书记、董事长陈文山（前右）和交通银行云南省分行行长李大军分别代表双方签字

ເກົ່າ,ໄດ້ສຳເລັດໜ້າທີ່ວຽກງານຕ່າງໆຕາມຄາດໝາຍທີ່ກຳນົດໄວ້.

ປີ 2014, ໂຄງການເຮືອນຢູ່ນະໂຍບາຍໄດ້ມີຄວາມຄືບໜ້າຢ່າງສະດວກ, ໂດຍຖືເຫດການທີ່ສຳຄັນຕ່າງໆເປັນຂີດໝາຍ,ເຊັ່ນ, ໂຄງການປັບປຸງເຂດເຮືອນຕູບເກົ່າທີ່ມີມູນຄ່າ 56 ຕື້ຢວນຂອງທະນາຄານພັດທະນາແຫ່ງຊາດໄດ້ລະດົມທຶນຢ່າງສຳເລັດຜົນ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານເຂົ້າສູ່ຖັນແຖວວິສາຫະກິດທີ່ມີຄຸນວຸດທິລະດັບ A ພິເສດ,ຍ້າຍເຂົ້າປະຈຳຢູ່ອາຄານພັດທະນາກຸ່ມບໍລິສັດຢ່າງສະດວກ,ແລະ ເຫດການອື່ນໆ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໄດ້ປາກົດມີສະພາບການພັດທະນາທີ່ດີ,ຄື,ເຕີບໂຕຢ່າງຕໍ່ເນື່ອງ, ໂຄງປະກອບໄດ້ຮັບການປັບປຸງໃຫ້ດີຂຶ້ນ,ກົນໄກມີຄວາມຄ່ອງແຄ້ວ,ການບໍລິຫານກ້າວຂຶ້ນສູ່ລະດັບສູງກວ່າເກົ່າ,ເຕັກນິກມີຄວາມກ້າວໜ້າ,ປະສິດທິພາບຍົກສູງຂຶ້ນ,ຍີ່ຫໍ້ມີອິດທິພົນເຂັ້ມແຂງກວ່າເກົ່າ.

ປີ 2014,ຕົວເລກດັດຊະນີດ້ານເຕັກນິກເສດຖະກິດຕົ້ນຕໍຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານໄດ້ສ້າງສະຖິຕິໃໝ່,ຕົວເລກສະຖິຕິຈຳນວນໜຶ່ງໄດ້ສະແດງໃຫ້ເຫັນກຸ່ມບໍລິສັດໄດ້ກ້າວເຂົ້າສູ່ໄລຍະໃໝ່ແຫ່ງການພັດທະນາ:ມູນຄ່າທຸລະກິດທົ່ວປີມີ 86 ຕື້ 438 ລ້ານຢວນ, ເພີ່ມຂຶ້ນ 15,47% ເມື່ອທຽບກັບປີ 2013;ມູນຄ່າສັນຍາທີ່ເຊັນໃໝ່ມີ 53 ຕື້ 949 ລ້ານຢວນ,ເພີ່ມຂຶ້ນ 5,7%.

ລາຍຮັບຈາກທຸລະກິດມີ 42 ຕື້ 51 ລ້ານຢວນ,ເພີ່ມຂຶ້ນ 4,67%;ຍອດມູນຄ່າຜົນກຳໄລມີ 1 ຕື້ 152 ລ້ານຢວນ,ເພີ່ມຂຶ້ນ 11,09%;ມູນຄ່າລວມຜົນກຳໄລກັບອາກອນມີ 2 ຕື້ 712 ລ້ານຢວນ;ອັດຕາກຳໄລຂອງລາຍຮັບຈາກທຸລະກິດແມ່ນ 2,74%.

ໄດ້ສຳເລັດການລົງທຶນເປັນມູນຄ່າ 20 ຕື້ຢວນ, ລາຍໄດ້ສະເລ່ຍຕໍ່ປີຂອງພະນັກງານບໍລິສັດເພີ່ມຂຶ້ນຢ່າງໝັ້ນທ່ຽງ.

ໄດ້ເຂົ້າເປັນ 500 ບໍລິສັດເຂັ້ມແຂງຂອງຈີນ 23



ບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ ແລະ ບໍລິສັດຫຸ້ນສ່ວນທະນາຄານຟູດຽນລົງນາມເຊັນສັນຍາການຮ່ວມມືຍຸດທະສາດ
云南建工集团有限公司与富滇银行股份有限公司签署战略合作协议

ເທື່ອລຽນຕິດ,ຢູ່ໃນອັນດັບທີ 295,ດີຂຶ້ນ 23 ອັນດັບເມື່ອທຽບກັບປີ 2013;ເຂົ້າສູ່ 250 ບໍລິສັດເຂັ້ມແຂງດ້ານບໍລິສັດຮັບເໝົາໂຄງການສາກົນ(ENR) 5 ເທື່ອລຽນຕິດ, ຢູ່ໃນອັນດັບທີ 166,ດີຂຶ້ນ 3 ອັນດັບເມື່ອທຽບກັບປີ 2013; ເຂົ້າເປັນ 80 ບໍລິສັດເຂັ້ມແຂງດ້ານການຮັບເໝົາໂຄງການຂອງຈີນ,ຢູ່ໃນອັນດັບທີ 13;ຢູ່ໃນອັນດັບທີ 72 ໃນການລຽງລຳດັບໃນ 100 ບໍລິສັດຂ້າມຊາດທີ່ເຂັ້ມແຂງຂອງຈີນ ແລະ ຕົວເລກດັດສະນີຂ້າມຊາດ;ຢູ່ໃນອັນດັບທີ 9 ໃນ 100 ບໍລິສັດເຂັ້ມແຂງຂອງແຂວງຢຸນນານ.

ໄດ້ຮັບລາງວັນລູປ່ານ 2 ລາຍການ(ລວມທັງ 1 ລາຍການຂອງໂຄງການຕ່າງປະເທດ),ໄດ້ຮັບລາງວັນໂຄງການຄຸນນະພາບດີລະດັບຊາດ ແລະ ລາງວັນຈ່ານທ່ຽນຢິ້ວດ້ານໂຄງການໂຍທາຢ່າງລະໜຶ່ງລາງວັນ.

ປະຈຸບັນນີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ຮັບຜົນງານອັນດີເດັ່ນເຫຼົ່ານີ້,ແມ່ນຍ້ອນວ່າກຸ່ມບໍລິສັດດັ່ງກ່າວມີວິໄສທັດ,ສາມາດກຳແໜ້ນໂອກາດພັດທະນາໃນການຊອກຄົ້ນເສັ້ນທາງປະຕິຮູບ ແລະ ການພັດທະນາ, ໂດຍຢູ່ໃນກະແສລວມແຫ່ງເສດຖະກິດຕະຫຼາດ. ໂດຍຜ່ານການຫັນປ່ຽນຈາກທຸລະກິດດ້ານໂຄງການກາຍເປັນທຸລະກິດດ້ານຊັບພະຍາກອນ,ພັດທະນາທຸລະກິດ ແລະ ການລະດົມທຶນທີ່ເປັນແຮງຊຸກຍູ້ທີ່ສຳຄັນສອງດ້ານ,ເຊິ່ງຢູ່ໃນແຮງຊຸກຍູ້ສອງດ້ານນີ້,ຈຶ່ງເຮັດໃຫ້ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທີ່ເປັນລັດວິສາຫະກິດຂະໜາດໃຫຍ່ຂອງແຂວງຢຸນນານນີ້ຢູ່ໃນຖັນແຖວນຳໜ້າ.

ການລົງທຶນຊຸກຍູ້ໃຫ້ກຸ່ມບໍລິສັດພັດທະນາກ້າວໄປໜ້າຢ່າງວ່ອງໄວ

ເມື່ອ 2 ປີກ່ອນ,ຄະນະການນຳຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານກໍ່ໄດ້ສະເໜີເປົ້າໝາຍຍຸດທະສາດທີ່"ຫັນປ່ຽນຮູບການພັດທະນາຂຶ້ນສູ່ລະດັບສູງກວ່າເກົ່າ,ພັດທະນາແບບກ້າວກະໂດດ"ຢ່າງມີວິໄສທັດຢ່າງຖືກຕ້ອງ.

ກຸ່ມບໍລິສັດໄດ້ສ້າງສະຕິທີ່ເປັນຜູ້ພັດທະນາໂຄງການ ແລະ ຜູ້ລົງທຶນຢ່າງໜັກແໜ້ນ, ໂດຍຜ່ານການລົງທຶນ,ໄດ້ບັນລຸການພັດທະນາຮ່ວມກັນຂອງທຸລະກິດ ແລະ ການລະດົມທຶນ,ຊຸກຍູ້ໃຫ້ວິສາຫະກິດຫັນປ່ຽນກ້າວໄປສູ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຂະໜາດໃຫຍ່ຢ່າງບໍ່ຢຸດຢັ້ງ.ນັບມາຮອດທ້າຍປີ 2014,ໄດ້ລົງທຶນເປັນຍອດມູນຄ່າຫຼາຍກວ່າ 150 ຕື້ຢວນ,ການລົງທຶນໄດ້ກາຍເປັນຫົວຈັກອັນເຂັ້ມແຂງທີ່ຊຸກຍູ້ໃຫ້ກຸ່ມບໍລິສັດພັດທະນາຢ່າງຕໍ່ເນື່ອງ.

ດຳເນີນທຸລະກິດດ້ານຊັບພະຍາກອນ,ຊຸກຍູ້ການຫັນປ່ຽນຮູບການທຸລະກິດ

ວັນທີ 29 ຕຸລາ ປີ 2014,ພິທີເຊັນສັນຍາຄັ້ງໜຶ່ງໄດ້ຕົກລົງເຈດຈຳນົງການລົງທຶນທີ່ມີມູນຄ່າປະມານ 15 ຕື້ຢວນ,ເປີດສາກແຫ່ງການລົງເລິກການຮ່ວມມື ແລະ ພັດທະນາພ້ອມກັນລະຫວ່າງກົ່ງແຂວງປົກຄອງຕົນເອງເຜົ່າຮານີເຜົ່າອີຫົງເຫີແຂວງຢຸນນານກັບກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ.ການຮ່ວມມືດ້ານຍຸດທະສາດຮອບດ້ານຄັ້ງນີ້ກໍ່ຈະເປີດເສັ້ນທາງໃໝ່ໃນການປະດິດສ້າງຮູບການພັດທະນາການຫັນເປັນຕົວເມືອງຂອງແຂວງຢຸນນານ.

ທຸລະກິດຢູ່ຕະຫຼາດຕ່າງປະເທດໄດ້ຮັບການປັບປຸງໃຫ້ເຂັ້ມແຂງກວ່າເກົ່າ. ໂຄງການພັດທະນາສັງລວມຢູ່ນະຄອນຫຼວງວຽງຈັນຂອງປະເທດລາວ, ໂຄງການຊ່ວຍເຫຼືອຂອງກະຊວງການຄ້າຈີນຢູ່ສີລັງກາ,ຫວຽດນາມ ແລະ ໂມຣິຕານີໄດ້ຮັບປະສິດທິຜົນ,ໃນເວລາປັບປຸງຕະຫຼາດທີ່ມີທຸລະກິດຢູ່ແລ້ວເປັນຕົ້ນແມ່ນລາວ,ມຽນມາ,ທັງໄດ້ເຂົ້າສູ່ຕະຫຼາດໃໝ່ຂອງປະເທດອື່ນໆ,ເຊັ່ນ, ຫວຽດນາມ,ສີລັງກາ ແລະ ໂມຣິຕານີ.

ດຳເນີນທຸລະກິດເປັນກຸ່ມຄະນະ,ກຳລັງແຂ່ງຂັນສັງລວມເພີ່ມຂຶ້ນເລື້ອຍໆ

ທ່ານ ເສີນເວີນສ່ານ,ເລຂາຄະນະພັກທັງເປັນປະທານຄະນະບໍລິຫານງານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຊີ້ອອກວ່າ,ໃນຊຸມປີຜ່ານມາ,ກຸ່ມບໍລິສັດພວມປັບປຸງໂຄງປະກອບ,ຫັນປ່ຽນຮູບການພັດທະນາ,ເພື່ອເຮັດໃຫ້ກຸ່ມບໍລິສັດຍົກລະດັບການພັດທະນາ.ໃນຕໍ່ໜ້ານີ້, ກຸ່ມບໍລິສັດຈະຕິດແທດຄວາມເປັນຈິງ,ຊອກຄົ້ນເສັ້ນທາງໃໝ່ໃນການປະດິດສ້າງຮູບການພັດທະນາການຫັນເປັນຕົວເມືອງຂອງແຂວງຢຸນນານ,ຮ່ວມກັນຊຸກຍູ້ໃຫ້ເສດຖະກິດສັງຄົມຂອງແຂວງຢຸນນານພັດທະນາຢ່າງວ່ອງໄວ.

ທ່ານ ເສີນເວີນສ່ານ ໃຫ້ຮູ້ວ່າ,ທັດສະນະທີ່ດຳເນີນທຸລະກິດເປັນກຸ່ມຄະນະແມ່ນຊ່ອງທາງອັນສຳຄັນໃນການຍົກລະດັບໃຫ້ສູງຂຶ້ນ, ໂດຍອີງໃສ່ທ່າແຮງຂອງເວທີໃຫຍ່,ກຸ່ມບໍລິສັດໄດ້ຫັນຈາກທຸລະກິດໂຄງການໃນເມື່ອກ່ອນກາຍມາເປັນທຸລະກິດຊັບພະຍາກອນໃນປະຈຸບັນນີ້, ເສີມຂະຫຍາຍ ແລະ ເປີດກວ້າງທ່າແຮງຂອງກຸ່ມບໍລິສັດໃນດ້ານຍີ່ຫໍ້,ເຕັກນິກ,ການບໍລິຫານ,ວິຊາການ ແລະ ທຶນຮອນ,ຍົກສູງຂະໜາດ,ລະດັບ ແລະ ຄຸນນະພາບ,ເປີດກວ້າງຂອບເຂດຂອງກຸ່ມບໍລິສັດ.

ຫຼັງຈາກປ່ຽນແປງທັດສະນະດຳເນີນທຸລະກິດ



ທ່ານລິວຢົງ(ຂວາມືທາງໜ້າ)ຮອງເລຂາຄະນະພັກ,ຜູ້ອຳນວຍການໃຫຍ່ຂອງບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ ແລະ ທ່ານ ຢືລອງ ຜູ້ອຳນວຍການໃຫຍ່ຂອງບໍລິສັດລົງທຶນພັດທະນາກິດຈະກຳນ້ຳຢຸນນານຈຳກັດລົງນາມໃນເຊັນສັນຍາການຮ່ວມມືຍຸດທະສາດທີ່ອາຄານພັດທະນາການກໍ່ສ້າງ
云南建工集团有限公司党委副书记、总经理刘勇（前右）与云南水务产业投资发展有限公司总经理于龙在建工发展大厦签署战略合作协议



ສົ້ນປະຕູອອກແບບກຳແພງອຸມົງທີກູພູທາງດ່ວນເຊີນກົງ-ເຊີນຈຽງ(ພາບສະແດງຜົນ)
呈澄高速公路提古铺隧道出口端墙式洞门（效果图）

ແລ້ວ,ຄວາມສາມາດບຸກເບີກຕະຫຼາດຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ເຂັ້ມແຂງຂຶ້ນຢ່າງວ່ອງໄວ, ໄດ້ມີຄວາມເປັນໄປໄດ້ຫຼາຍຢ່າງທີ່ດຳເນີນການຮ່ວມມືຍຸດທະສາດຢ່າງເລິກເຊິ່ງກັບກຸ່ມບໍລິສັດ,ອົງກອນທະນາຄານ ແລະ ພາກສ່ວນລັດຖະບານຕ່າງໆ,ຫັນປ່ຽນຮູບການພັດທະນາດ້ວຍທັດສະນະດຳເນີນທຸລະກິດຢ່າງເປັນກຸ່ມຄະນະ ແລະ ບຸກເບີກຕະຫຼາດ.ຕົວຢ່າງວ່າ,ໄຕມາດທີ 4 ປີ 2014 ກໍ່ເປັນໄລຍະສຳຄັນໄລຍະໜຶ່ງ,ເຊິ່ງສາມາດສັງເກດເຫັນວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ຮັບຄວາມຄືບໜ້າໃນການດຳເນີນທຸລະກິດຢ່າງເປັນກຸ່ມຄະນະ ແລະ ໄດ້ຮັບຜົນງານຢ່າງຈົບງາມ.

ວັນທີ 22 ກັນຍາ ປີ 2014,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານກັບກຸ່ມບໍລິສັດກະສິກຳຢຸນນານໄດ້ເຊັນສັນຍາຮ່ວມມືຍຸດທະສາດຢູ່ນະຄອນຄຸນໝິງ.ສອງຝ່າຍຈະເສີມຂະຫຍາຍທ່າແຮງທີ່ເປັນຜູ້ນຳໜ້າໃນຂະແໜງການຂອງຕົນ,ປະຕິບັດຕາມຫຼັກການທີ່ນຳໃຊ້ທ່າແຮງຂອງຕົນ,ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ,ພ້ອມກັນພັດທະນາ,ຮ່ວມກັນເປີດກວ້າງຕະຫຼາດ.

ວັນທີ 12 ພະຈິກ ປີ 2014,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານສະໝັກປະມູນໄດ້ໂຄງການເຮືອນຢູ່ສຳລັບປະຊາຊົນຍົກຍ້າຍຄືນໄລຍະທີ 1 ຢູ່ຄຸ້ມຈິ່ນມາເຂດກວນຕູຂອງນະຄອນຄຸນໝິງ,ເຊິ່ງມູນຄ່າປະມູນແມ່ນ 768 ລ້ານຢວນ. ໂຄງການດັ່ງກ່າວແມ່ນບໍລິສັດອະສັງຫາລິມະຊັບຈ່ຽວໂຫວຄຸນໝິງເປັນເຈົ້າຂອງໂຄງການ,ກໍ່ເປັນກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຮ່ວມມືກັບບໍລິສັດດັ່ງກ່າວເປັນຄັ້ງທີ 2 ຫຼັງຈາກຮັບເໝົາການກໍ່ສ້າງໂຄງການເຮືອນຢູ່ສຳລັບປະຊາຊົນຍົກຍ້າຍຄືນຢູ່ຄຸ້ມຝ່າງວ້າງເຂດກວນຕູ.

ໂຄງການຮ່ວມມືຍຸດທະສາດຕ່າງໆທີ່ໄດ້ມາໂດຍຜ່ານທຸລະກິດດ້ານຊັບພະຍາກອນ,ໄດ້ເຮັດໃຫ້ຮູບການຜະລິດຜົນກຳໄລຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ມີການປ່ຽນແປງໃນດ້ານໂຄງປະກອບ.ໃນເມື່ອກ່ອນ,ລາຍຮັບຈາກການຈຳໜ່າຍ ແລະ ຄວາມສາມາດຜະລິດຜົນກຳໄລມາຈາກການຮັບເໝົາໂຄງການ,ແຕ່ໃນ 2 ປີຜ່ານມາ,ຄວາມສາມາດດ້ານການລະດົມທຶນ ແລະ ລົງທຶນໄດ້ເພີ່ມຂຶ້ນຢ່າງພົ້ນເດັ່ນ,ມູນຄ່າສັນຍາ 20% ມາຈາກໂຄງການໃຫຍ່ດ້ານທຸລະກິດຊັບພະຍາກອນ,ເຊິ່ງໄດ້ສ້າງສະພາບການພັດທະນາໃໝ່ທີ່ສາມາດເຮັດໃຫ້ຫຼາຍຝ່າຍໄດ້ຮັບຜົນປະໂຫຍດ.ລາຍຮັບຈາກການລົງທຶນກວມເອົາ 30%,ຄວາມສາມາດຜະລິດຜົນກຳໄລກວມເອົາ 70% ຂຶ້ນໄປ,ເຊິ່ງເປັນຄວາມຄືບໜ້າອັນແທ້ຈິງໃນການປັບປຸງໂຄງປະກອບຜະລິດຕະກຳໃຫ້ດີຂຶ້ນ.

ທຸລະກິດ ແລະ ການລະດົມທຶນເປັນກຳລັງແຮງທີ່ຊຸກຍູ້ໃຫ້ວິສາຫະກິດພັດທະນາແບບກ້າວກະໂດດ

ທຸລະກິດກັບການລະດົມທຶນເຊື່ອມໂຍງເຂົ້າກັນ, ໝາຍເຖິງຂະແໜງການຮູບປະທຳ,ທຸລະກິດຕົ້ນຕໍ,ແລະທຶນຮອນພົວພັນຢ່າງໃກ້ຊິດກັບຂະແໜງການທະນາຄານ ແລະ ທຶນຮອນດ້ານການທະນາຄານໃນການໝູນວຽນ,ໂດຍຜ່ານຮູບການສິດຫຸ້ນສ່ວນ,ແລະ ການຮ່ວມມືດ້ານການບໍລິການເປັນຕົ້ນ,ກາຍເປັນສະຫະພັນຂະໜາດໃຫຍ່ດ້ານທຶນຮອນ ຫຼື ວິສາຫະກິດ,ເຊື່ອມຊຶມເຂົ້າກັນໃນດ້ານທຶນຮອນ,ຕົ້ນທຶນ ແລະ ບຸກຄະລາກອນ,ເຂົ້າສູ່ຂົງເຂດທຸລະກິດເຊິ່ງກັນ ແລະ ກັນ,ເຮັດໃຫ້ຂະແໜງການຮູບປະທຳກັບທຶນຮອນເຊື່ອມເຂົ້າກັນ,ຫັນປ່ຽນເຊິ່ງກັນ ແລະ ກັນ,ຈົນເຖິງເຊື່ອມໂຍງເຂົ້າກັນ,ເພື່ອຊຸກຍູ້ເຊິ່ງກັນ ແລະ ກັນ, ແລະ ພັດທະນາພ້ອມກັນ.

ວັນທີ 28 ພະຈິກ ປີ 2014,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ເຊັນສັນຍາຮ່ວມມືຍຸດທະສາດກັບບໍລິສັດຫຸ້ນສ່ວນທະນາຄານຝູ້ຕ່ຽນຈຳກັດ.ການເຊັນສັນຍາຄັ້ງນີ້ມີຄວາມໝາຍອັນສຳຄັນຕໍ່ການພັດທະນາຂອງທັງສອງຝ່າຍ.ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈະເພີ່ມທະວີການຮ່ວມມືກັບທະນາຄານຝູ້ຕ່ຽນໃນໂຄງການໃຫຍ່ຕ່າງໆ,ເຊັ່ນ,ການປັບປຸງເຂດເຮືອນຕູບເກົ່າ ແລະ ອື່ນໆ.ສອງຝ່າຍຈະສະໜັບສະໜູນເຊິ່ງກັນ ແລະ ກັນ, ແລະ ເປີດກວ້າງຕະຫຼາດພ້ອມກັນ.

ໃນຂະແໜງການກໍ່ສ້າງ,ເອົາຕົ້ນທຶນຕ່ຳເຊື່ອມຕໍ່ກັບໂຄງການຄຸນນະພາບດີ,ບັນລຸຮູບການໝູນວຽນໃໝ່ທີ່ມີກຳລັງທຶນຮອນອັນແຂງແຮງພົວພັນກັບແຜນການລົງທຶນອັນຄ່ອງແຄ້ວ,ກໍ່ແມ່ນຮູບການໝູນວຽນແບບໃໝ່ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານທີ່ກຳລັງປະຕິບັດໃນປະຈຸບັນ.

ປີ 2015 ແມ່ນປີໜຶ່ງທີ່ສຳຄັນສຳລັບການລົງເລິກການປະຕິຮູບຂອງຈີນ,ກໍ່ເປັນການເລີ່ມຕົ້ນທີ່ຊຸກຍູ້ການປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ,ທັງເປັນປີສຸດທ້າຍທີ່ຈະສຳເລັດແຜນການ 5 ປີຄັ້ງທີ 12 ຢ່າງຮອບດ້ານ.ສຳລັບກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ, ຜ່ານການກະກຽມໃນປີ 2012,ແລະ ທຳຄວາມພະຍາຍາມໃນປີ 2013 ແລະ ປີ 2014,ເປົ້າໝາຍຍຸດທະສາດ, ການວາງແຜນຜັງຍຸດທະສາດ, ໂຄງຮ່າງພື້ນຖານ, ຊ່ອງທາງສຳຄັນ,ຈຸດສຳຄັນດ້ານຍຸດທະວິທີ,ແລະ ສະພາບແວດລ້ອມທີ່ດີໄດ້ສ້າງຂຶ້ນໂດຍພື້ນຖານແລ້ວ.ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈະຍຶດໝັ້ນນ້ຳໃຈທີ່ບາກບັ່ນສູ້ຊົນດ້ວຍຄວາມທໍລະຫົດອົດທົນ ແລະ ໃຊ້ຄວາມກ້າຫານ,ປະຕິບັດໂຄງການຕ່າງໆໃຫ້ດີ,ພະຍາຍາມໃຫ້ກ້າວໜ້າຢ່າງວ່ອງໄວບົນທາງດ່ວນແຫ່ງການພັດທະນາ!

ວັນທີ 6 ກຸມພາ ປີ 2015,ໃນກອງປະຊຸມຜູ້ແທນພະນັກງານເທື່ອທີ 4 ສະໄໝທີ 2 ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ໄດ້ກຳນົດເປົ້າໝາຍໜ້າທີ່ວຽກງານຂອງປີ 2015,ຄື:ພະຍາຍາມຊຸກຍູ້ການຫັນປ່ຽນຮູບການໃຫ້ຂຶ້ນສູ່ລະດັບສູງກວ່າເກົ່າ,ພະຍາຍາມສ້າງກຸ່ມບໍລິສັດໃຫ້ເປັນກຸ່ມບໍລິສັດວິສະວະກຳຂະໜາດໃຫຍ່ທີ່ມີຍອດມູນຄ່າຊັບສິນຫຼາຍກວ່າ 100 ຕື້ຢວນ.

ປະຈຸບັນ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານພວມຢູ່ໃນໄລຍະສຳຄັນທີ່ໄດ້ຮັບຄວາມຄືບໜ້າໃໝ່ ແລະ ຂຶ້ນສູ່ລະດັບສູງໃໝ່.ໃນປີໃໝ່ທີ່ມາເຖິງນີ້,ພະນັກງານທັງຫຼາຍມີຄວາມໝັ້ນໃຈທີ່ໜັກແໜ້ນ,ຈະສືບຕໍ່ຍຶດໝັ້ນຖືຕະຫຼາດເປັນທິດຊີ້ນຳ,ເພີ່ມທະວີການເຊື່ອມໂຍງເຂົ້າກັນລະຫວ່າງທຸລະກິດກັບການລະດົມທຶນ,ຍົກລະດັບຄວາມສາມາດບໍລິຫານ,ຫັນປ່ຽນຮູບການພັດທະນາໃຫ້ຂຶ້ນສູ່ລະດັບສູງກວ່າເກົ່າຢ່າງຮອບດ້ານ,ທຳຄວາມພະຍາຍາມເພື່ອສ້າງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໃຫ້ເປັນກຸ່ມບໍລິສັດວິສະວະກຳຂະໜາດໃຫຍ່ທີ່ມີມູນຄ່າຊັບສິນໃນລະດັບ 100 ຕື້ຢວນ!

文、图 / 陈灿霞

# ພູອູອີຂອງແຂວງຟູຈ້ຽນ




## 福建武夷山

武夷山是融世界文化与自然遗产双重遗产地、国家5A级旅游景区、全国文明风景旅游区示范点、国家生态旅游示范区、首批国家级自然保护区、国家水利风景区、中华十大名山之一、世界生物圈保护区、全球生物多样性保护区于一体的风景名胜区，地处中国福建省的西北部武夷山市，位于福建与江西的交界处，是中国著名的风景旅游区和避暑胜地。

ພູອູອີແມ່ນມໍລະດົກວັດທະນະທຳ ແລະ ທຳມະຊາດຂອງໂລກ,ເປັນແຫຼ່ງທ່ອງທ່ຽວ 5A ລະດັບຊາດ,ແຫຼ່ງທ່ອງທ່ຽວແບບຢ່າງທົ່ວປະເທດ,ເຂດແບບຢ່າງຂອງແຫຼ່ງທ່ອງທ່ຽວຊີວະພາບລະດັບຊາດ,ເຂດສະຫງວນທຳມະຊາດລະດັບຊາດງວດທຳອິດ,ແຫຼ່ງທ່ອງທ່ຽວຊົນລະປະທານແຫ່ງຊາດ,ເປັນໜຶ່ງໃນສາຍພູ 10 ແຫ່ງທີ່ມີຊື່ສຽງຂອງຈີນ,ເຂດອະນຸລັກນິເວດຊີວະຊາດໂລກ,ເຂດອະນຸລັກຄວາມຫຼາກຫຼາຍຂອງຊີວະນານາພັນຂອງໂລກ,ຕັ້ງຢູ່ນະຄອນອູອີຊ່ານທີ່ຢູ່ພາກຕາເວັນຕົກສຽງເໜືອຂອງແຂວງຟູຈ້ຽນຈີນ,ແລະ ຢູ່ບ່ອນເຊື່ອມຈອດກັນລະຫວ່າງແຂວງຟູຈ້ຽນກັບແຂວງຈ່ຽງຊີ,ເປັນແຫຼ່ງທ່ອງທ່ຽວທີ່ມີຊື່ສຽງ ແລະ ສະຖານທີ່ຫຼີກຄວາມຮ້ອນຂອງຈີນ.

ຕາມປົກກະຕິແລ້ວ,ພູອູອີແມ່ນໝາຍເຖິງພູອູອີນ້ອຍທີ່ຈາກນະຄອນອູອີຊ່ານຂອງຟູຈ້ຽນໄປທິດຕາເວັນຕົກສຽງໃຕ້ປະມານ 15 ກິໂລແມັດ,ຖືກເອີ້ນວ່າພູທີ່ມີຊື່ສຽງອັນດັບໜຶ່ງຂອງແຂວງຟູຈ້ຽນ,ເປັນພູມສັນຖານກາສເຕີທີ່ມີສີສັນພົ້ນເດັ່ນ,ເປັນແຫຼ່ງທ່ອງທ່ຽວທິວທັດທຳມະຊາດລະດັບຊາດງວດທຳອິດຂອງຈີນ,ໃນນັ້ນ,ຈອມພູທ່ຽນຢິວມີນາມມະຍົດເປັນ“ຈອມພູສູງຊັນອັນດັບໜຶ່ງ”.

ພູອູອີມີພູຜາຫ້ວຍນ້ຳຢ່າງສວຍສົດງົດງາມ,ກໍ່ເປັນພູໜ່ວຍໜຶ່ງທີ່ມີຊື່ສຽງໃນດ້ານວັດທະນະທຳປະຫວັດສາດ.ໃນຍຸກເຄື່ອງຫີນໃໝ່,ຄົນຫວຽດບູຮານກໍ່ເລີ່ມອາໄສຢູ່ນີ້.ໃນປະຈຸບັນຍັງສາມາດເຫັນວ່າ,“ໂລງເຮືອ”“ແປ້ນໄມ້ລອຍຟ້າ”ທີ່ຍັງຮັກສາໄວ້ຢູ່ເທິງຜາຫີນອັນສູງຊັນນັ້ນ,ກໍ່ແມ່ນປະເພນີສົ່ງສະການແບບພິເສດຂອງເຜົ່າຫວຽດບູຮານ.ພ້ອມກັນນັ້ນ,ພູອູອີກໍ່ແມ່ນພູທີ່ມີຊື່ສຽງຂອງສາມສາສະໜາ,ແຕ່ລາຊະວົງຊິນ ແລະ ລາຊະວົງຫານເປັນຕົ້ນມາ,ພູອູອີກໍ່ແມ່ນສະຖານທີ່ພັກພາອາໄສຂອງຜູ້ເຊື່ອຖືສາສະໜາພຸດ ແລະ ສາລະໜາຕາວ,ເຊິ່ງໄດ້ສ້າງວັດວາອາຮາມ,ຫໍສາສະໜາຕາວຢ່າງຫຼວງຫຼາຍຈົນຮັກສາໄວ້ມາຮອດປະຈຸບັນຈຶ່ງໄດ້ກາຍເປັນບູຮານສະຖານ.ພູອູອີຍັງເຄີຍເປັນນັກປາດທີ່ເຊື່ອຖືປັດຊະຍາຂົງຈື້ເຜີຍແຜ່ທິດສະດີໃນສະໄໝບູຮານ.

ພູອູອີຍັງເປັນແດນສະຫວັນຂອງພືດສີຂຽວ ແລະ ສັດນານາຊະນິດ,ໄດ້ນາມມະຍົດຫຼາຍຢ່າງ,ເຊັ່ນ:“ສວນສະໜຸກຂອງສັດ” “ໂລກງູ” “ໂລກແມງໄມ້” “ແດນສະຫວັນຂອງນົກ” “ປ່ອງຮັບຮູ້ຊີວະນານາພັນຂອງໂລກ” ແລະ“ສວນພືດທຳມະຊາດ”ເປັນຕົ້ນ.ເຂດສະຫງວນທຳມະຊາດຢູ່ໃກ້ກັບແຫຼ່ງທ່ອງທ່ຽວ,ກວມເນື້ອທີ່ 567 ກິໂລ





ຕາແມັດ,ແມ່ນລະບົບນິເວວິທະຍາທີ່ຮັກສາເປັນຢ່າງດີທີ່ສຸດ ແລະ ມີຊີວະນານາພັນຢ່າງອຸດົມສົມບູນທີ່ສຸດໃນເຂດທີ່ຢູ່ຕາມເສັ້ນອະໜານດຽວກັນໃນໂລກ,ມີແນວພັນພືດ 2527 ຊະນິດ,ແລະ ສັດປ່າປະມານ 5000 ຊະນິດ.

ພາກຕາເວັນຕົກຂອງພູອູອີແມ່ນເຂດສຳຄັນສຳລັບການອະນຸລັກຄວາມຫຼາກຫຼາຍຂອງຊີວະນານາພັນໃນໂລກ,ເຊິ່ງມີລະບົບນິເວດວິທະຍາປ່າໄມ້ລັກສະນະດັ້ງເດີມຂອງເຂດຮ້ອນອາຊີກາງທີ່ຮັກສາຢ່າງຄົບຖ້ວນທີ່ສຸດ,ມີລັກສະນະຕົວແທນຫຼາຍທີ່ສຸດ ແລະ ເປັນເນື້ອທີ່ກວ້າງຂວາງທີ່ສຸດຢູ່ເຂດທີ່ຢູ່ໃນເສັ້ນອະໜານດຽວກັນຂອງໂລກ. ຢູ່ພາກຕາເວັນອອກຂອງພູອູອີ,ພູຜາ ແລະ ຫ້ວຍນ້ຳສະຫຼັບກັນຢ່າງສວຍງາມ,ວັດທະນະທຳມະນຸດກັບທຳມະຊາດເຊື່ອມໂຍງຢ່າງກົມກຽວກັນ,ເຊິ່ງມີທິວທັດທຳມະຊາດຫຼາຍບ່ອນ,ວັດທະນະທຳປະຫວັດສາດອັນດົນນານ,ວັດຖຸບູຮານ ແລະ ບູຮານສະຖານຫຼາຍຢ່າງ,ສະນັ້ນຈຶ່ງໄດ້ຮັບຊື່ສຽງອັນດັງດັງໃນໂລກ.






文/岚 筱 图/中新社

# ບູຮານສະຖານລາຊະທານີຊ້າງຕູ່ຂອງລາຊະວົງຢວນ

## 元上都遗址

**元上都遗址属中国重点文物保护单位，是中国元代都城遗址，位于内蒙古自治区锡林郭勒盟正蓝旗政府所在地东北约 20 公里处、闪电河北岸。**

ບູຮານສະຖານລາຊະທານີຊ້າງຕູ່ຂອງລາຊະວົງຢວນແມ່ນບູຮານສະຖານທີ່ລັດຖະບານຈີນອະນຸລັກເປັນຈຸດໜັກ,ເປັນບູຮານສະຖານຂອງລາຊະທານີລາຊະວົງຢວນຂອງຈີນ,ຕັ້ງຢູ່ບ່ອນທີ່ຫ່າງຈາກທິດຕາເວັນອອກສຽງເໜືອຂອງອົງການປົກຄອງຕາແສງເຈີ້ງລານຊີ ນະຄອນຊີລິນກົວເລີເຂດປົກຄອງຕົນເອງມົງໂກນໃນປະມານ 20 ກິໂລແມັດ,ຢູ່ຝັ່ງເໜືອຂອງແມ່ນ້ຳຊານຕ້ຽນ. ລາຊະທານີແຫ່ງນີ້ສ້າງຂຶ້ນໂດຍຊົນເຜົ່າທີ່ຂີ່ມ້າຢູ່ພາກເໜືອຂອງຈີນ,ຖືວ່າເປັນສິ່ງກຳເນີດອັນອັດສະຈັນຈາກການເຊື່ອມໂຍງເຂົ້າກັນລະຫວ່າງວັດທະນະທຳປູກຝັງຢູ່ເຂດໃນກັບວັດທະນະທຳລ້ຽງສັດແບບເຄື່ອນທີ່ຢູ່ເຂດທົ່ງຫຍ້າ,ນັກຄົ້ນຄວ້າປະຫວັດສາດກ່າວວ່າ,ມັນສາມາດປຽບທຽບເມືອງບູຮານປອມເປຂອງອີຕາລີ.

ບູຮານສະຖານລາຊະທານີຊ້າງຕູ່ຕັ້ງຢູ່ຕາແສງເຈີ້ງລານຂອງເຂດມົງໂກນໃນ,ຫຼັງຈາກການສຳຫຼວດວັດແທກ ແລະ ການຂຸດຄົ້ນພາກສ່ວນໜຶ່ງແລ້ວພິສູດໃຫ້ເຫັນວ່າ,ບູຮານສະຖານແຫ່ງນີ້ໄດ້ຮັກສາຢ່າງຄົບຖ້ວນສົມຄວນຈົນມາຮອດປະຈຸບັນ,ຢູ່ພາຍໃນ ແລະ ນອກເມືອງໄດ້ຝັງເຄື່ອງບູຮານຢ່າງຫຼວງຫຼາຍ.ຕາມເອກະສານປະຫວັດສາດບັນທຶກໄວ້ວ່າ,ລາຊະທານີຊ້າງຕູ່ແມ່ນເຈົ້າຊີວິດຊື່ຈູຫູບີເລ້ຍຂອງລາຊະວົງຢວນສັ່ງໃຫ້ລົງມືກໍ່ສ້າງໃນປີ 1256,ໃນເວລາສ້າງເມືອງໄດ້ເຕົ້າໂຮມຊ່າງດີເດັ່ນທັງພາຍໃນ ແລະ ຕ່າງປະເທດ,ແລະໄດ້ເສີມສ້າງຕື່ມອີກໃນເວລາຫຼາຍສິບປີຈຶ່ງສຳເລັດ.ໃນໄລຍະ 100 ປີລະຫວ່າງສະຕະວັດທີ 13 ແລະ ສະຕະວັດທີ 14,ແຫ່ງນີ້ເປັນໃຈກາງດ້ານການເມືອງ,ການທະຫານ,ເສດຖະກິດ ແລະ ວັດທະນະທຳອັນດັບສອງ,ໂດຍຮອງຈາກລາຊະທານີຕ້າຕູ່(ປັກກິ່ງໃນປະຈຸບັນ),ກໍ່ແມ່ນບ່ອນພັກຜ່ອນຢ່ອນໃຈຂອງພະບໍລົມວົງສານຸວົງ.

ລາຊະທານີຊ້າງຕູ່ປະກອບດ້ວຍເມືອງຮອບນອກ,ລາຊະວັງ,ກຳແພງລາຊະວັງ ແລະ ສະໜາມຫຼວງ,ລວງຮອບຍາວປະມານ 9 ກິໂລແມັດ,ທິດຕາເວັນອອກຕາເວັນຕົກຍາວ 2050 ແມັດ,ທິດເໜືອໃຕ້ຍາວ 2115 ແມັດ.ຢູ່ເຂດໃນເປັນພະລາຊະວັງ,ເຂດຮອບນອກແມ່ນຕະຫຼາດ.ຢູ່ໃນເມືອງມີຫໍໂຮງປະມານ 60 ແຫ່ງ,ວັດວາອາຮາມປະເພດຕ່າງໆ 160 ກວ່າແຫ່ງ,ມີຫໍຕ້າໜີງ ແລະ ຫໍອື່ນໆ,ຕຶກຕ້າອ່ານ,ຕຶກຈືທານ ແລະ ຕຶກອື່ນໆ, ແລະ ໂຮງລູ້ຈູ່ ແລະ ໂຮງຢີງໂຈ່ວ,ພ້ອມດ້ວຍສິ່ງກໍ່ສ້າງສຳຄັນອື່ນໆ.ຢູ່ໃນເມືອງ,ນອກຈາກຫໍໂຮງຂະໜາດໃຫຍ່ຢູ່ເຂດໃຈກາງ ແລະ ຕອນກາງຂອງກຳແພງເບື້ອງເໜືອແມ່ນຢູ່ຕາມເສັ້ນກາງແລ້ວ,ສິ່ງກໍ່ສ້າງສ່ວນຫຼາຍບໍ່ໄດ້ອອກແບບເກືອງກັນ,ຫໍໂຮງຕຶກ ແລະ ສາລາຕ່າງໆ



ລ້ວນແຕ່ມີຈຸດພິເສດຂອງຕົນ,ຕິດກັບສະນ້ຳ,ຫຼືຂຸດຄອງລະບາຍນ້ຳ,ຫຼືສາລາກັບຕຶກເຊື່ອມຕໍ່ກັນ,ມີຮູບຊົງ ແລະຂະໜາດໃຫຍ່ແຕກຕ່າງກັນ,ຕ່າງກໍ່ມີສີສັນ ແລະ ບັນຍາກາດຂອງຕົນ.

ປີ 1964,ບູຮານສະຖານລາຊະທານີຊ້າງຕູ່ຂອງລາຊະວົງຢວນໄດ້ຮັບຈັດເຂົ້າເປັນຫົວໜ່ວຍອະນຸລັກວັດຖຸບູຮານຈຸດໜັກງວດທຳອິດຂອງເຂດມົງໂກນໃນ,ປີ 1988 ໄດ້ຮັບຈັດເປັນຫົວໜ່ວຍອະນຸລັກວັດຖຸບູຮານຈຸດໜັກລະດັບຊາດງວດທີ 3.ວັນທີ 29 ມິຖຸນາ ປີ 2012, ກອງປະຊຸມຄັ້ງທີ 36 ຂອງຄະນະກຳມະການມໍລະດົກໂລກໄດ້ພິຈາລະນາ ແລະ ຈັດເອົາບູຮານສະຖານລາຊະທານີຊ້າງຕູ່ລາຊະວົງຢວນເຂົ້າໃນ"ບັນຊີລາຍຊື່ມໍລະດົກໂລກ".

ຈັກກະພັດລາຊະວົງຢວນເຄີຍເປັນຈັກກະພັດເຂັ້ມແຂງທີ່ມີດິນແດນຂ້າມທະວີບອາຊີ ແລະ ທະວີບເອີລົບ, ໄດ້ສ້າງຜົນສະທ້ອນຢ່າງກວ້າງຂວາງ ແລະ ເລິກເຊິ່ງໃນປະຫວັດສາດຂອງມະນຸດ.ແນ່ນອນແລ້ວ,ລາຊະທານີຂອງລາຊະວົງຢວນກໍ່ກາຍເປັນໃຈກາງການເມືອງ ແລະ ວັດທະນະທຳໃນເວລານັ້ນ,ມໍລະດົກວັດທະນະທຳນີ້ບໍ່ພຽງແຕ່ຂຶ້ນກັບປະຊາຊາດຈີນເທົ່ານັ້ນ,ກໍຂຶ້ນກັບທົ່ວໂລກ.ລາຊະທານີຊ້າງຕູ່ໄດ້ເປັນສັກຂີພິຍານໃຫ້ແກ່ຄວາມຈະເລີນຮຸ່ງເຮືອງຂອງລາຊະວົງຢວນ,ໄດ້ຜ່ານການທົດສອບຂອງການເວລາ,ຍັງໄດ້ຮັກສາສະພາບດັ້ງເດີມເປັນຢ່າງດີ,ແມ່ນລາຊະທານີເຂດທົ່ງຫຍ້າທີ່ຮັກສາຢ່າງຄົບຖ້ວນທີ່ສຸດໃນປະຈຸບັນ.ມັນໄດ້ບັນຈຸຄວາມຊົງຈຳຂອງລາຊະວົງໜຶ່ງ,ກໍ່ໄດ້ບັນທຶກການປ່ຽນແປງຊົງໜ້າດ້ານປະຫວັດສາດຂອງເຜົ່າມົງໂກນຈາຣ່າເອີຢູ່ເທິງທົ່ງຫຍ້າຈິ່ນລຽນຊ່ວນ.

文 / 陈灿霞　图 / 中新社

# ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງ

## 北京理工大学

北京理工大学是一所以“理工为主，工理文协调发展”的全国重点大学，隶属于中华人民共和国工业和信息化部，是全国第一批16所重点高校之一，是首批“211工程”和“985工程”重点建设高校之一。学校创办于1940年，是中国共产党创办的第一所理工科大学。

ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງແມ່ນມະຫາວິທະຍາໄລຈຸດໜັກລະດັບຊາດທີ່“ຖືວິຊາວິທະຍາສາດເຕັກໂນໂລຊີເປັນຫຼັກ,ການຊ່າງ,ວິທະຍາສາດ ແລະ ວັນນະຄະດີພັດທະນາຢ່າງກົມກຽວກັນ”,ສັງກັດກະຊວງອຸດສາຫະກຳ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານຈີນ,ກໍເປັນໜຶ່ງໃນໂຮງຮຽນຊັ້ນສູງຈຸດໜັກ 16 ແຫ່ງງວດທຳອິດຂອງຈີນ,ທັງເປັນໜຶ່ງໃນໂຮງຮຽນຊັ້ນສູງຈຸດໜັກງວດທຳອິດໃນ“ໂຄງການ 211” ແລະ “ໂຄງການ 985”. ໂຮງຮຽນສ້າງຕັ້ງຂຶ້ນໃນປີ 1940,ເຄົ້າມາຈາກ“ສະຖາບັນວິທະຍາສາດທຳມະຊາດ”ຂອງຢຽນອ່ານ,ເປັນມະຫາວິທະຍາໄລປະເພດວິທະຍາສາດ ແລະ ການຊ່າງແຫ່ງທຳອິດທີ່ສ້າງຂຶ້ນໂດຍພັກຄອມມູນິດຈີນ.

ໂຮງຮຽນກວມເນື້ອທີ່ປະມານ 300 ເຮັກຕາ,ສິ່ງກໍ່ສ້າງມີເນື້ອທີ່ 1 ລ້ານ 1 ແສນກວ່າຕາແມັດ,ຫໍສະໝຸດມີປຶ້ມປະເພດຕ່າງໆຫຼາຍກວ່າ 3 ລ້ານເຫຼັ້ມ,ມີເຂດໂຮງຮຽນຈົ່ງກ່ວນຊຸ່ນ,ເຂດໂຮງຮຽນລຽງຊ່ຽງ,ເຂດທົດລອງຊີ່ສ່ານ,ເຂດໂຮງຮຽນຈູ່ໄຫ ແລະ ສາຂາຊິນຫວງຕາວ;ມີ 19 ຄະນະວິຊາສະເພາະ,ຄະນະການສຶກສາ,ຄະນະການສຶກສາພື້ນຖານ,ຄະນະການສຶກສາສຳລັບຜູ້ໃຫຍ່,ຄະນະວິຊາຊີບຊັ້ນສູງ ແລະ ຄະນະຈູ່ໄຫ.

ໂຮງຮຽນຍຶດໝັ້ນສຸມໃສ່ຄວາມຕ້ອງການດ້ານຍຸດທະສາດອັນສຳຄັນຂອງລັດ,ແລະ ແນວໜ້າພັດທະນາ



ດ້ານການວິທະຍາສາດເຕັກໂນໂລຊີ ແລະ ການສຶກສາຂອງໂລກ,ອອກແຮງປະຕິບັດຍຸດທະສາດພັດທະນາວິຊາສະເພາະທີ່ມີສີສັນພິເສດຄື“ເນັ້ນທ່າແຮງ、ເຊີດຊູຄວາມເຊື່ອໝັ້ນ、ເປີດກວ້າງ”,ປາກົດມີສະຖານະພາບທີ່ສາຂາວິຊາວິທະຍາສາດ ແລະ ສາຂາວິຊາການຊ່າງເປັນຈຸດໜັກ,ການຊ່າງ,ວິທະຍາສາດ,ການບໍລິຫານ ແລະ ວັນນະຄະດີຮ່ວມກັນພັດທະນາຢ່າງກົມກຽວກັນ. ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງມີສາຂາວິຊາລະດັບໜຶ່ງທີ່ເປັນຈຸດໜັກລະດັບຊາດ 4 ວິຊາ,ສາຂາວິຊາລະດັບສອງທີ່ເປັນຈຸດໜັກລະດັບຊາດ 5 ວິຊາ,ວິຊາທີ່ລັດພັດທະນາເປັນຈຸດໜັກ 3 ວິຊາ,19 ໂຄງການລະດັບເໜືອປະລິນຍາເອກ,22 ສາຂາວິຊາລະດັບໜຶ່ງທີ່ມີສິດມອບໃບປະກາສະນິຍະບັດປະລິນຍາເອກ,38 ສາຂາວິຊາລະດັບໜຶ່ງທີ່ມີສິດມອບໃບປະກາສະນິຍະບັດປະລິນຍາໂທ.ພ້ອມກັນນັ້ນ,ໄດ້ເຊັນສັນຍາຮ່ວມມືກັບໂຮງຮຽນຊັ້ນສູງ 180 ກວ່າແຫ່ງຂອງ 49 ປະເທດ ແລະ ເຂດແຄວ້ນຢູ່ 6 ທະວີບ,ທັງໄດ້ເຊັນສັນຍາແລກປ່ຽນນັກສຶກສາກັບໂຮງຮຽນຮ່ວມມື 40 ກວ່າແຫ່ງ,ເຊັ່ນ,ມະຫາວິທະຍາໄລອຸດສາຫະກຳມູນິກຂອງເຢຍລະມັນເປັນຕົ້ນ,ໄດ້ສ້າງເຄືອຂ່າຍລັກສະນະທົ່ວໂລກໃນການແລກປ່ຽນ ແລະ ຮ່ວມມືກັບສາກົນ.

ມະຫາວິທະຍາໄລເຕັກໂນໂລຊີປັກກິ່ງໄດ້ສືບທອດມູນເຊື້ອອັນດີງາມຂອງນ້ຳໃຈຢຽນອ່ານຕະຫຼອດມາ,ໄດ້ສະສົມມູນເຊື້ອດ້ານການດຳເນີນວຽກງານການສຶກສາ,ແນວຄິດການສຶກສາ ແລະ ວັດທະນະທຳໂຮງຮຽນທີ່ດີງາມໃນຂະບວນການພັດທະນາເປັນເວລາດົນນານມາແລ້ວ.ໂດຍຜ່ານການພັດທະນາ ແລະ ສະຫຼຸບບົດຮຽນເປັນເວລາຫຼາຍປີແລ້ວ,ໄດ້ປາກົດມີລະບົບວັດທະນະທຳຈິດໃຈພິເສດ,ໂດຍມີສະຕິປະຈຳໂຮງຮຽນ,ຄື“ສ້າງສົມທຳເພື່ອຮັບຮູ້ສັດຈະທຳ,ຮ່ຳຮຽນເພື່ອພັດທະນາວຽກງານ”,ແບບແຜນປະຈຳໂຮງຮຽນທີ່ວ່າ“ສາມັກຄີ,ດຸໝັ່ນ,ສະແຫວງຫາຄວາມເປັນຈິງ ແລະ ມີແນວຄິດປະດິດສ້າງໃໝ່”,ແບບແຜນການຮ່ຳຮຽນທີ່“ສະແຫວງຫາສັດຈະທຳບົນພື້ນຖານຄວາມເປັນຈິງ,ບໍ່ຍົກຍໍຖືຕົວເອງເປັນຜູ້ກະທຳຖືກຕ້ອງ”ໂດຍບົນພື້ນຖານດັ່ງກ່າວ,ໂຮງຮຽນພະຍາຍາມບຳລຸງກໍ່ສ້າງນັກສຶກສາໃຫ້ມີອຸດົມການອັນສູງສົ່ງ,ມີຄວາມຮູ້ດ້ານວິຊາການ,ສຸຂະພາບເຂັ້ມແຂງ,ມີຄວາມຊື່ສັດ,ມີຄວາມຮັບຜິດຊອບຕໍ່ສັງຄົມ,ມີແນວຄິດປະດິດສ້າງໃໝ່ ແລະ ຄວາມສາມາດໃນພຶດຕິກຳຕົວຈິງ,ເພື່ອສ້າງເປັນຜູ້ສ້າງສາ ແລະ ສືບທອດສັງຄົມນິຍົມ.

ປະຈຸບັນ,ໂຮງຮຽນພວມສະຫຼຸບບົດຮຽນດຳເນີນວຽກງານການສຶກສາໃນ 70 ກວ່າປີຜ່ານມາ,ສ້າງ“ຄວາມກ້າຫານເປັນຜູ້ນຳໜ້າ,ຈິດໃຈຍຶດໝັ້ນບຳລຸງກໍ່ສ້າງຜູ້ມີຄວາມຮູ້ຄວາມສາມາດ,ຄວາມຕັດສິນໃຈທີ່ປະກອບສ່ວນເຂົ້າໃນພາລະກິດຂອງປະເທດຊາດ”,ວຽກງານທຸກຢ່າງແມ່ນເລີ່ມຈາກການຍົກສູງຄຸນນະພາບແຫ່ງການສຶກສາ,ແລະ ບຳລຸງສ້າງນັກສຶກສາໃຫ້ພັດທະນາຢ່າງຮອບດ້ານ,ອຸທິດກຳລັງໃຫ້ປະເທດຊາດ,ຍຶດໝັ້ນທິດທາງດຳເນີນການສຶກສາຢ່າງຖືກຕ້ອງ,ພະຍາຍາມບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດທີ່ມີຄຸນນະພາບສູງ,ເພີ່ມທະວີຄວາມສາມາດດ້ານການຄົ້ນຄວ້າວິທະຍາສາດ,ສ້າງສີສັນພິເສດຂອງການສຶກສາດ້ານເຕັກໂນໂລຊີຂົງເຂດປ້ອງກັນປະເທດ.

文 / 岚 筱　图 / 中新社

# ເພງຕ້າເກີ້ຂອງເຜົ່າຕົງ

## 侗族大歌

侗族大歌是当今世界上十分罕见的多声部、无指挥、无伴奏民间合唱音乐形式。与侗寨鼓楼、侗乡花桥一起被称为侗族文化的“三大宝”，堪称中国民族音乐的瑰宝。

ເພງຕ້າເກີ່ຂອງເຜົ່າຕົງຈີນແມ່ນຮູບການຮ້ອງລວມໝູ່ໂດຍມີຫຼາຍພາກສຽງ,ບໍ່ມີຜູ້ບັນຊາ ແລະ ບໍ່ມີສຽງປະກອບດົນຕີເສບ,ເຊິ່ງແມ່ນຫາຍາກທີ່ສຸດໃນໂລກ.ເພງຕ້າເກີ່ຮ່ວມກັບຫໍກອງ,ແລະ ຂົວລາຍດອກຂອງບ້ານເຜົ່າຕົງນັ້ນ,ຖືກເອີ້ນວ່າ“ມິ່ງຂວັນສາມຢ່າງ”ໃນວັດທະນະທຳເຜົ່າຕົງຈີນ,ເພງຕ້າເກີ່ກໍ່ແມ່ນມິ່ງຂວັນໃນສິລະປະດົນຕີຊົນເຜົ່າຂອງຈີນ.ເພງຕ້າເກີ່ແມ່ນເຜີຍແຜ່ຢູ່ເມືອງລີຜິງ,ເມືອງຊົງຈ່ຽງ ແລະ ເມືອງຢົງຈ່ຽງຂອງກິ່ງແຂວງຕາເວັນອອກສຽງໃຕ້ຂອງແຂວງກຸ້ຍໂຈ່ວ.ຕົວແທນຂອງເພງຕ້າເກີ່ເຜົ່າຕົງມີ “ເພງເປລາວ” “ກາກາວເຊິ່ງ” “ກາອິນເຢ” ແລະ “ກາຊີ”ເປັນຕົ້ນ.

ເພງຕ້າເກີ່ເຜົ່າຕົງມີຮູບການຮ້ອງເພງທີ່ “ລວມໝູ່ສຽງຕ່ຳ,ຜູ້ດຽວສຽງສູງ”,ຫຼາຍພາກສຽງປະສົມປະສານກັນ,ຈຸດພິເສດແມ່ນມີຫຼາຍພາກສຽງ,ບໍ່ມີຜູ້ບັນຊາ ແລະ ບໍ່ມີສຽງປະກອບດົນຕີເສບ.ການແຕ່ງບົດເພງຈະຈຳລອງສຽງທຳມະຊາດຕ່າງໆ,ເຊັ່ນ,ສຽງຮ້ອງຂອງນົກ ແລະ ແມງໄມ້,ສຽງນ້ຳໄຫຼໃນພູສູງເປັນຕົ້ນ,ເຊິ່ງກໍ່ແມ່ນບໍ່ເກີດທຳມະຊາດຂອງເພງຕ້າເກີ່.ເນື້ອເພງຕົ້ນຕໍແມ່ນພັນລະນາທຳມະຊາດ,ການອອກແຮງງານ,ຄວາມຮັກ,ແລະ ມິດຕະພາບລະຫວ່າງຄົນກັບຄົນ,ແມ່ນສຽງປອງດອງກັນລະຫວ່າງຄົນກັບທຳມະຊາດ,ແລະ ລະຫວ່າງຄົນກັບຄົນ.ການຮ້ອງເພງຕ້າເກີ່ເຜົ່າຕົງຕ້ອງການທີມ 3 ຄົນຂຶ້ນໄປ,ຈຳນວນຄົນເຂົ້າຮ່ວມຍິ່ງຫຼາຍຍິ່ງດີ.ເກືອບໝົດທຸກບ້ານເຜົ່າຕົງລ້ວນແຕ່ມີທີມຮ້ອງເພງຂອງຕົນ,ບາງບ້ານຈົນມີ 10 ກວ່າທີມ.ໃນງານບຸນຕ່າງໆ,ເຊັ່ນ:“ປີໃໝ່ເຜົ່າຕົງ”,“ບຸນກິນເຂົ້າໃໝ່” ແລະ “ບຸນກຸດຈີນ”,ຈະຈັດກິດຈະກຳຍິງຊາຍຮ້ອງເພງຕໍ່ກັນ,ແລະ ການແຂ່ງຂັນຮ້ອງເພງລວມໝູ່,ເຊິ່ງກໍ່ແມ່ນສື່ກາງສຳລັບບ່າວສາວສ້າງສາຍສຳພັນເປັນຄູ່ຮັກ.



ໂດຍອີງຕາມແບບແຜນ,ທຳນອງ,ເນື້ອເພງ,ຮູບການຂັບຮ້ອງ ແລະ ຄວາມຊິນເຄີຍພື້ນເມືອງ,ເພງຕ້າເກີ່ເຜົ່າຕົງແບ່ງອອກເປັນ 4 ປະເພດ,ຄື:ກາທົ່ງ,ການະ,ກາຊຽງ,ແລະ ກາຈີ,ໃນນັ້ນ,ກາທົ່ງແມ່ນພາກສ່ວນອັນສຳຄັນທີ່ສຸດ.ນອກນີ້,ໂດຍອີງຕາມເພດ ແລະ ອາຍຸ,ເພງຕ້າເກີ່ເຜົ່າຕົງກໍ່ແບ່ງອອກເປັນ“ເພງຕ້າເກີ່ສຽງຜູ້ຊາຍ” “ເພງຕ້າເກີ່ສຽງຜູ້ຍິງ” ແລະ “ເພງຕ້າເກີ່ສຽງເດັກ”.ຄຽງຄູ່ກັບການປ່ຽນແປງຂອງຍຸກສະໄໝ,ນັກຮ້ອງເຜົ່າຕົງໄດ້ແຕ່ງບົດເພງປະສົມສຽງທີ່ພັນລະນາຊີວິດການເປັນຢູ່ ແລະ ຍຸກສະໄໝໃໝ່ຫຼາຍບົດເພງ,ເຊິ່ງໄດ້ເພີ່ມທະວີເນື້ອໃນ ແລະ ປະເພດຂອງບົດເພງຕ້າເກີ່,ຕອບສະໜອງຄວາມຕ້ອງການຂອງຊີວິດການເປັນຢູ່ດ້ານວັດທະນະທຳຂອງປະຊາຊົນເຜົ່າຕົງ.

ປະຊາຊົນເຜົ່າຕົງຖືບົດເພງເປັນອາຫານດ້ານຈິດໃຈ,ເພື່ອບຳລຸງຈິດໃຈ.ຢູ່ເຂດເຜົ່າຕົງ,ນັກຮ້ອງໄດ້ຮັບການຮັບຮອງໂດຍທົ່ວໄປວ່າເປັນຜູ້ທີ່ມີຄວາມຮູ້ຫຼາຍທີ່ສຸດ ແລະ ຮູ້ເຫດຮູ້ຜົນທີ່ສຸດ,ສະນັ້ນໄດ້ຮັບຄວາມເຄົາລົບນັບຖືຫຼາຍຈາກປະຊາຊົນເຜົ່າຕົງ.ສະນັ້ນເຂົາເຈົ້າມັກເພງ,ຮຽນເພງ ແລະ ຮ້ອງເພງທຸກເຊັ່ນຄົນ,ຖືການຮ້ອງເພງເປັນເລື່ອງມ່ວນຊື່ນ,ຖື“ຮ້ອງເພງເປັນ,ຮ້ອງເພງໄດ້ຫຼາຍ”ເປັນເລື່ອງໜ້າພາກພູມໃຈ,ສະແດງອາລົມຈິດຕ່າງໆດ້ວຍສຽງເພງ,ຈຶ່ງໄດ້ແຕ່ງເປັນບົດເພງທີ່ສືບທອດກັນມາເປັນເວລາດົນນານ.ເພງຕ້າເກີ່ທີ່ເປັນສ່ວນປະກອບທີ່ມີລັກສະນະສຸດຍອດໃນເພງເຜົ່າຕົງ,ເນື້ອເພງ ແລະ ຮູບການຮ້ອງເພງລ້ວນແຕ່ມີສາຍພົວພັນຢ່າງໃກ້ຊິດກັບຮີດຄອງປະເພນີ,ນິດໄສ,ຈິດໃຈ ແລະ ສະພາບແວດລ້ອມໃນການດຳລົງຊີວິດຂອງປະຊາຊົນເຜົ່າຕົງ,ເປັນການບັນທຶກປະຫວັດສາດຂອງເຜົ່າຕົງຢ່າງແທ້ຈິງ,ກໍເປັນການສ່ອງແສງເຖິງວັດທະນະທຳເຜົ່າຕົງໂດຍກົງ.

ເພງຕ້າເກີ່ເຜົ່າຕົງເປັນໜຶ່ງໃນມໍລະດົກສິລະປະບູຮານອັນດີເດັ່ນຂອງຈີນ,ແມ່ນສຽງອອນຊອນແບບທຳມະຊາດທີ່ມີຫຼາຍພາກສຽງ ແລະ ບໍ່ມີດົນຕີເສບ.ປີ 2005 ໄດ້ຮັບຈັດເຂົ້າສູ່ບັນຊີລາຍຊື່ມໍລະດົກວັດທະນະທຳທີ່ບໍ່ແມ່ນດ້ານວັດຖຸລະດັບຊາດງວດທຳອິດຂອງຈີນ,ແລະ ຈັດເປັນ“ໂຄງການທີ່ສະໝັກປະກວດເຂົ້າເປັນຕົວແທນມໍລະດົກວັດທະນະທຳທາງປາກເປົ່າ ແລະ ບໍ່ແມ່ນດ້ານວັດຖຸຂອງມະນຸດ”ຂອງຈີນ.



文/杨晓梅 蓝 天 图/新华社

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：聊聊傣族泼水节

### ບົດສົນທະນາ: ລົມກັນກ່ຽວກັບບຸນຫົດນ້ຳ

xué xiào zuó tiān shōu dào xī shuāng bǎn
A. 学 校 昨 天 收 到 西 双 版

nà dǎi zú zì zhì zhōu zhèng fǔ de gōng
纳 傣 族 自 治 州 政 府 的 公

hán yāo qǐng yán jiū dǎi wén huà de lǎo
函，邀 请 研 究 傣 文 化 的 老

shī zài pō shuǐ jié qī jiān cān jiā dǎi
师 在 泼 水 节 期 间 参 加 傣

wén huà yán tǎo huì xué xiào wěi tuō wǒ
文 化 研 讨 会，学 校 委 托 我

qǐng jǐ gè lǎo shī wǒ men yì qǐ qù ba
请 几 个 老 师，我 们 一 起 去 吧？

ໂຮງຮຽນໄດ້ຮັບໜັງສືລັດຖະການຈາກອຳນາດການປົກຄອງຂອງກິ່ງແຂວງເຜົ່າລື້ປົກຄອງຕົນເອງສິບສອງພັນນາເພື່ອເປັນການເຊື້ອເຊີນຄູອາຈານທີ່ສຶກສາຄົ້ນຄວ້າວັດທະນະທຳເຜົ່າລື້ເຂົ້າຮ່ວມກອງປະຊຸມສຳມະນາວັດທະນະທຳເຜົ່າລື້ໃນໄລຍະບຸນຫົດນ້ຳ,ໂຮງຮຽນມອບໝາຍໃຫ້ຂ້ອຍເຊີນຄູອາຈານຈັກຄົນໄປນຳກັນກັບຂ້ອຍ.

tài hǎo le wǒ zhèng zài xiě guān yú yún
B. 太 好 了！我 正 在 写 关 于 云

nán mín zú jié rì de lùn wén dǎi zú de
南 民 族 节 日 的 论 文，傣 族 的

pō shuǐ jié shì yún nán zuì zhòng yào
泼 水 节 是 云 南 最 重 要

de shǎo shù mín zú jié rì zhī yī xiè
的 少 数 民 族 节 日 之 一，谢

xiè nín gěi wǒ zhè gè jī huì
谢 您 给 我 这 个 机 会。

ຄັກແທ້ໆ,ຂ້ອຍກຳລັງຂຽນບົດນິພົນວ່າດ້ວຍເທດສະການຊົນເຜົ່າຢູນນານແດ່,ບຸນຫົດນ້ຳເຜົ່າໄທລື້ແມ່ນໜຶ່ງໃນເທດສະການທີ່ສຳຄັນສຸດຂອງຊົນເຜົ່າສ່ວນໜ້ອຍຢູນນານ.ຂອບໃຈນຳເຈົ້າອຳນວຍໂອກາດອັນນີ້ໃຫ້ຂ້ອຍ.

bú yòng xiè wǒ men yì qǐ qù kǎo chá yí
A. 不 用 谢，我 们 一 起 去 考 察，一

lù shàng hái kě yǐ yán tǎo yì xiē wèn tí
路 上 还 可 以 研 讨 一 些 问 题。

ບໍ່ຕ້ອງຂອບໃຈດອກ,ພວກເຮົາໄປສຳຫລວດພ້ອມກັນ,ຕະຫລອດທາງຍັງສາມາດປຶກສາຫາລືບັນຫາໜ້ອຍໜຶ່ງ.

hǎo de shuō dào pō shuǐ jié qí shí lǎo
B. 好 的。说 到 泼 水 节，其 实 老

wō tài guó de rén mín yě dōu guò ér qiě
挝、泰 国 的 人 民 也 都 过，而 且

guān yú pō shuǐ jié lái lì de chuán shuō
关 于 泼 水 节 来 历 的 传 说

yě hěn xiāng jìn
也 很 相 近。

ດີຫລາຍ,ເວົ້າເຖິງບຸນຫົດນ້ຳ,ທີ່ແທ້ແລ້ວ,ປະຊາຊົນລາວ ແລະ ປະຊາຊົນໄທລ້ວນແຕ່ເຮັດບຸນຫົດນ້ຳຄືກັນ,ແຕ່ວ່າ,ຂ່າວເລົ່າລືກັນມາທີ່ມາຂອງບຸນຫົດນ້ຳກໍເໝືອນກັນ.



duì de cóng wén huà yuān yuán lái shuō
A. 对 的。从 文 化 渊 源 来 说，

zhōng guó yún nán de dǎi zú rén hé tài guó
中 国 云 南 的 傣 族 人 和 泰 国

de tài rén lǎo wō de liáo rén yuè nán de
的 泰 人、老 挝 的 寮 人、越 南 的

tài rén miǎn diàn de shàn rén yìn dù ā
泰 人、缅 甸 的 掸 人、印 度 阿

sà mǔ bāng de tài rén yǒu zhe gòng tóng
萨 姆 邦 的 泰 人 有 着 共 同

de yuán shǐ wén huà hòu lái dōu jiē shòu
的 原 始 文 化，后 来 都 接 受

le nán chuán shàng zuò bù fó jiào zài
了 南 传 上 座 部 佛 教，在

wén huà zōng jiào xìn yǎng fāng miàn yǒu
文 化、宗 教 信 仰 方 面 有

hěn gāo de xiāng sì dù
很 高 的 相 似 度。

ຖືກແລ້ວ,ເວົ້າສຳລັບແຫຼ່ງທີ່ມາຂອງວັດທະນະທຳ,ໄທລື້ຢູນນານຂອງຈີນ,ຄົນໄທຂອງປະເທດໄທ,ຄົນລາວຂອງປະເທດລາວ,ຄົນໄທຂອງຫວຽດນາມ,ຄົນເຜົ່າສ່ານມຽນມາ,ຄົນໄທຂອງລັດອາຊາມອິນເດຍລ້ວນແຕ່ມີວັດທະນະທຳປະຖົມປະຖານຮ່ວມກັນ,ຕໍ່ມາ,ກໍໄດ້ຮັບພຸດທະສາສະໜາເຜີຍແຜ່ໄປພາກໃຕ້(ຫີນະຍານ),ທາງດ້ານວັດທະນະທຳ ແລະ ເຊື່ອຖືສາດສະໜາມີລະດັບເໝືອນກັນຢ່າງສູງ.

shì ne pō shuǐ jié jiù shì yuán yú yìn
B. 是 呢。泼 水 节 就 是 源 于 印

dù pó luó mén jiào dào hé biān mù yù xǐ
度 婆 罗 门 教 到 河 边 沐 浴，洗

dí zuì è de fēng sú hòu lái gè guó mín
涤 罪 恶 的 风 俗。后 来 各 国 民

jiān dōu yǒu xǔ duō xiāng sì de chuán
间 都 有 许 多 相 似 的 传

shuō liú chuán zuì guǎng de shì guān yú
说，流 传 最 广 的 是 关 于

qī gè měi lì zhèng yì de nǚ zǐ xié lì
七 个 美 丽 正 义 的 女 子 协 力

chú diào hài rén mó tóu de dòng rén gù
除 掉 害 人 魔 头 的 动 人 故

shì yǐ hòu měi nián de zhè yì tiān dōu
事，以 后 每 年 的 这 一 天 都

shì gè xí sú xiāng jìn mín zú zuì lóng
是 各 习 俗 相 近 民 族 最 隆

zhòng de chuán tǒng jié rì
重 的 传 统 节 日。

ແມ່ນແລ້ວ,ບຸນຫົດນ້ຳກໍແມ່ນຮີດຄອງປະເພນີມາຈາກສາສະໜາພາມໄປອາບນ້ຳໃນແຄມແມ່ນ້ຳລຳເຊເພື່ອລ້າງຖິ້ມໂທດກຳ.ຕໍ່ມາ,ໃນເມືອງປະຊາຊົນບັນດາປະເທດລ້ວນແຕ່ມີຂ່າວເລົ່າລືເໝືອນກັນ,ທີ່ເຜີຍແຜ່ກວ້າງອອກທີ່ສຸດແມ່ນນິທານກະຕຸ້ນໃຈທີ່ນາງສາວງາມ 7 ຄົນທີ່ມີຄວາມເປັນທຳປະສານສົມທົບກັນກຳຈັດຜີມານທີ່ທຳຮ້າຍຄົນ,ຕໍ່ມາ,ທຸກປີເຖິງວັນນີ້,ກໍເປັນເທດສະການທີ່ເປັນມູນເຊື້ອຢ່າງຄຶກຄື້ນທີ່ສຸດຂອງຊົນເຜົ່າທີ່ມີຮີດຄອງປະເພນີເໝືອນກັນ.

tài guó jiào sòng gān jié shì quán guó
A. 泰 国 叫 “宋 干 节”，是 全 国

xìng de jié rì yǐ qián yóu gōng tíng
性 的 节 日，以 前 由 宫 廷

xīng xiàng guān tuī suàn tài yáng jìn rù
星 象 官 推 算 太 阳 进 入

bái yáng gōng de shí jiān lái què dìng
白 羊 宫 的 时 间，来 确 定

jié rì de jù tǐ rì qī zhè hé dǎi lì xīn
节 日 的 具 体 日 期，这 和 傣 历 新

nián pō shuǐ jié shì zhǐ tài yáng zài
年（泼 水 节）是 指 太 阳 在

huáng dào shí èr gōng yùn zhuǎn yì zhōu
黄 道 十 二 宫 运 转 一 周

bái yáng gōng shì qǐ diǎn kāi shǐ xīn de
（白 羊 宫 是 起 点）开 始 新 的

xún huán shì yí zhì de dàn shì wèi le
循 环 是 一 致 的。但 是，为 了

biàn yú kāi zhǎn guó jì lǚ yóu tài guó
便 于 开 展 国 际 旅 游，泰 国

zhèng fǔ xuān bù měi nián gōng lì yuè
政 府 宣 布 每 年 公 历 4 月

rì zhì rì wéi sòng gān jié zhè hé
13 日 至 15 日 为 “宋 干 节”，这 和

xiàn zài dǎi zú pō shuǐ jié de rì qī yě
现 在 傣 族 泼 水 节 的 日 期 也

shì yí yàng de
是 一 样 的。

ປະເທດໄທເອີ້ນວ່າບຸນສົງການ,ເປັນວັນບຸນລັກສະນະທົ່ວປະເທດ,ແຕ່ກີ້,ແມ່ນໝໍຫູຮາຫລວງໃນພະລາຊະວັງຄິດໄລ່ເວລາດວງຕາວັນເຂົ້າສູ່ວັນແບ້ຂາວມາກຳນົດເວລາຕົວຈິງຂອງເທດສະການ.ນີ້ຄືກັນກັບບຸນປີໃໝ່ໄທ(ບຸນຫົດນ້ຳ)ແມ່ນແນໃສ່ວັນສີລີມຸງຄຸນວັນທີ່ 12 ໝູນວຽນ 1 ຮອບ(ວັນແບ້ຂາວແມ່ນຈຸດເລີ່ມຕົ້ນ)ເລີ່ມຕົ້ນໝູນວຽນໃໝ່ເປັນເອກະສັນກັນ.ແຕ່ວ່າ,ເພື່ອສະດວກເປີດການທ່ອງທ່ຽວສາກົນ,ລັດຖະບານໄທປະກາດ ຄ.ສ.ວັນທີ 13 ຫາ 15 ທຸກປີແມ່ນ"ບຸນສົງການ",ອັນນີ້ເປັນເອກະພາບກັນກັບບຸນສົງການ.

dǎi zú qún zhòng huān dù pō shuǐ jié de
B. 傣 族 群 众 欢 度 泼 水 节 的

zhè yì tiān xiān yào dào fó sì yù fó rán
这 一 天，先 要 到 佛 寺 浴 佛，然

hòu cái kāi shǐ hù xiāng pō shuǐ hái yǒu
后 才 开 始 互 相 泼 水，还 有

sài lóng chuán fàng gāo shēng fàng kǒng
赛 龙 船、 放 高 升、 放 孔

míng dēng diū bāo děng chuán tǒng yú lè
明 灯、丢 包 等 传 统 娱 乐

huó dòng
活 动。

ມື້ສັນວັນດີທີ່ປວງຊົນໄທລື້ເຮັດບຸນຫົດນ້ຳຢ່າງເບີກບານມ່ວນຊື່ນ,ຈະຕ້ອງໄປວັດສົງພະ,ແລ້ວຈຶ່ງຫົດນ້ຳເຊິ່ງກັນ ແລະ ກັນ,ຍັງມີກິດຈະກຳການຊ່ວງເຮືອ,ຈູດບັ້ງໄຟ,ປ່ອຍໂຄມໄຟຂຶ້ງໜຶ່ງ,ໂຍນໝາກຄອນເປັນຕົ້ນ.

ò diū bāo shì dǎi zú qīng nián nán nǚ
A. 哦，丢 包 是 傣 族 青 年 男 女

zuì xǐ huān de yóu xì gū niáng men jīng
最 喜 欢 的 游 戏，姑 娘 们 精

xīn zhì zuò de huā bāo shì yǔ xīn shàng
心 制 作 的 花 包 是 与 心 上

rén xiāng shí xiāng liàn de méi jiè měi
人 相 识 相 恋 的 媒 介，每

nián de pō shuǐ jié dōu chéng jiù le xǔ
年 的 泼 水 节 都 成 就 了 许

duō làng màn měi hǎo de ài qíng gù shì
多 浪 漫 美 好 的 爱 情 故 事。

ໂອ໋!ໂຍນໝາກຄອນແມ່ນການຫຼິ້ນມ່ວນຂອງຍິງຊາຍຊາວໜຸ່ມຊົນເຜົ່າລື້ມັກຮັກທີ່ສຸດ.ທໍ່ລາຍທີ່ນາງສາວຖັກແສ່ວປານິດນັ້ນເປັນສື່ກາງຮັກກັນຂອງຜູ້ຮູ້ໃຈກັນ.ບຸນຫົດນ້ຳທຸກປີກໍໄດ້ເຮັດໃຫ້ນິທານແຫ່ງຄວາມຮັກໂລແມນຕິກທີ່ດີງາມເປັນຈຳນວນຫຼວງຫຼາຍໃຫ້ສຳເລັດຜົນ.

dǎi zú rén mín néng gē shàn wǔ zài pō
B. 傣 族 人 民 能 歌 善 舞，在 泼

shuǐ jié qī jiān dōu yǒu dà guī mó de jí
水 节 期 间 都 有 大 规 模 的 集

tǐ wǔ zhǔ yào yǒu xiàng jiǎo wǔ hé kǒng
体 舞，主 要 有 象 脚 舞 和 孔

què wǔ xiàng jiǎo wǔ rè qíng wěn jiàn
雀 舞。象 脚 舞 热 情、稳 健、

xiāo sǎ kǒng què wǔ yōu měi yǎ zhì shū
潇 洒；孔 雀 舞 优 美、雅 致、抒

qíng shì dǎi zú wǔ dǎo de líng hún
情，是 傣 族 舞 蹈 的 灵 魂。

ປະຊາຊົນໄທລື້ຊ່າງຟ້ອນລຳທຳເພງ,ໃນໄລຍະບຸນຫົດນ້ຳກໍມີການຟ້ອນລວມໝູ່ຂະໜາດໃຫຍ່,ເປັນຕົ້ນແມ່ນການຟ້ອນຕີກອງຍາວ ແລະ ການຟ້ອນນົກຍູງ.ການຟ້ອນຕີກອງຍາວມີຄວາມອົບອຸ່ນ,ໝັ້ນທ່ຽງ,ທ່າທາງສະຫງ່າງາມ;ການຟ້ອນນົກຍູງມີຄວາມດີງາມ:ສຸຂຸມຮອບຄອບ,ລະບາຍຈິດໃຈອາລົມ,ແມ່ນວິນຍານຂອງການຟ້ອນເຜົ່າລື້.

dǎi zú de mín zú wén huà shì zhōng huá
A. 傣 族 的 民 族 文 化 是 中 华

wén míng de yí bù fen xū yào fā yáng
文 明 的 一 部 分，需 要 发 扬

guāng dà wǒ men zhè cì jiù shì yào jìn
光 大。我 们 这 次 就 是 要 进

yí bù fā jué dǎi zú yōu xiù de mín zú
一 步 发 掘 傣 族 优 秀 的 民 族

wén huà
文 化。

ວັດທະນະທຳຊົນເຜົ່າລື້ເປັນປະກອບສ່ວນໜຶ່ງຂອງຄວາມສີວິໄລປະຊາຊາດຈີນຈະຕ້ອງສົ່ງເສີມໃຫ້ກວ້າງອອກ.ຄັ້ງນີ້ພວກເຮົາກໍຈະຕ້ອງຂຸດຄົ້ນວັດທະນະທຳຊົນເຜົ່າທີ່ດີງາມຂອງເຜົ່າລື້ຕື່ມອີກກ້າວໜຶ່ງ.

wǒ men yí dìng huì bù xū cǐ xíng
B. 我 们 一 定 会 不 虚 此 行！

ພວກເຮົາຈະຕ້ອງເຮັດໃຫ້ສົມກຽດໃນການເດີນທາງຄັ້ງນີ້ຢ່າງແນ່ນອນ.

## 二、词汇积累 ສະສົມຄຳສັບ

jǐng chá
警 察 ຕຳຫລວດ

zhōng guó de jǐng chá bāo kuò wǔ jǐng hé
中 国 的 警 察 包 括 武 警 和

rén mín jǐng chá liǎng dà lèi
人 民 警 察 两 大 类。

ຕຳຫລວດຈີນລວມທັງສອງປະເພດຄື:ຕຳຫລວດປະກອບອາວຸດ ແລະ ຕຳຫລວດປະຊາຊົນ.

jìng rán
竟 然 ເລີຍ

yīn wéi méi yǒu jiè qián gěi tā tā jìng
因 为 没 有 借 钱 给 她，她 竟

rán bú lǐ wǒ le
然 不 理 我 了。

ຍ້ອນວ່າບໍ່ໄດ້ໃຫ້ເງິນລາວຢືມ,ລາວເລີຍບໍ່ສົນຂ້ອຍ.

jìng zhēng
竞 争 ແຂ່ງຂັນ,ແກ້ງແຍ້ງ

xiàn dài shè huì shì yí gè jìng zhēng yǔ
现 代 社 会 是 一 个 竞 争 与

hé zuò de shè huì
合 作 的 社 会。

ສັງຄົມໃນຍຸກປັດຈຸບັນນີ້ແມ່ນສັງຄົມແກ້ງແຍ້ງກັນ ແລະ ການຮ່ວມືກັນສັງຄົມໜຶ່ງ.

jìng zi
镜 子 ແວ່ນ

lǎo lǐ de pí xié chá de xiàng jìng zi yí
老 李 的 皮 鞋 擦 的 像 镜 子 一

yàng zèng liàng
样 锃 亮。

ເກີບໜັງຂອງລາວລີຖູໃຫ້ເຫຼື້ອມຄືແວ່ນ.

注：锃亮（zèng liàng）是形容反光发亮的意思。

ໝາຍເຫດ:ເຫຼື້ອງເຫຼື້ອມອຸປະມາຄ້າຍຄືອອກແສງ.

## 三、文化知识 ຄວາມຮູ້ວັດທະນະທຳ

### 傣族民间关于“泼水节”来历的动人传说

很早以前，傣族聚居的地区出现了一个残暴的魔王，他身有魔法，傲慢自大，对人民欺压掳掠，无恶不作。他已经有了6个美丽的妻子，又抢了一位美丽又聪明的妻子。

有一年傣历新年，魔王喝的醉醺醺的。最小的妻子婻粽布乘机对魔王称颂道：“尊贵的大王，您法力无边，完全可以征服天堂、地狱、人间，您应该做三界的主人。”魔王听了得意洋洋，沉思了一会儿，转过脸来说：“我的魔力确实能征服三界，但是我的弱点是谁也不知道的。”婻粽布接着又问道：“大王有如此魔力，怎么会有弱点？”魔王小声回答：“我就怕别人拔我的头发勒我的脖子，这会使我身首分家。”她假装惊讶的追问：“能够征服三界的大王，怎么会怕头发丝？”魔王又小声的说：“头发丝虽然小，但我的头发丝却会勒断我的脖子，我就活不成了。”

婻粽布听了以后，暗暗打定主意。于是，她继续为魔王斟酒，直到魔王睡熟。这时，她小心地拔下魔王的一根头发，未等魔王惊醒就勒到了魔王的脖子上。魔王的头立刻就掉到地上，变成了一团火，熊熊燃烧，而且迅速蔓延。这时，婻粽布赶忙把魔王的头抱起来，大地上的火焰也就熄灭了，可头一放下，火又烧起来了。于是，六个王妻也都赶来了，她们轮流抱着魔王的头，这样火才不再烧起来。

后来，婻粽布回到了人间，但她仍旧浑身血迹，人们为了洗掉她身上的血迹，纷纷向她泼水。血迹终于洗净了，婻粽布幸福地生活在了人间。婻粽布死后，人们为了纪念她，在每年过年的时候，就相互泼水，用洁净的水洗去身上的污垢，迎来吉祥的新年。

ນິທານເລົ່າລືກັນມາທີ່ກະຕຸ້ນໃຈຂອງແຫຼ່ງທີ່ມາປະຫວັດບຸນຫົດນ້ຳຂອງປະຊາຊົນເຜົ່າລື້.

ແຕ່ດົນໆມາ,ເຂດເຕົ້າໂຮມເຜົ່າລື້ໄດ້ປະກົດເຫັນຫົວຜີມານທີ່ຮ້າຍແຮງໂຕໜຶ່ງ,ມັນມີວິທະຍາກົນ,ຈອງຫອງທີ່ສຸດ,ກົດຂີ່ຂູດຮີດປະຊາຊົນ,ທຳຮ້າຍໝົດທຸກຢ່າງ,ມັນໄດ້ມີເມຍສວຍງາມ 6 ຄົນ,ທັງຍາດເອົາເມຍທີ່ສະຫລາດສວຍງາມອີກຜູ້ໜຶ່ງ.

ມີປີໃໝ່ປະຕິທິນເຜົ່າລື້ປີໜຶ່ງ,ຫົວຜີມານດື່ມເຫຼົ້າເໝົາແຮງຫຼາຍ,ເມຍອາຍຸນ້ອຍສຸດຜູ້ໜຶ່ງຊື່ ນາງຈົງບຸ ສວຍໂອກາດຍ້ອງຍໍຫົວຜີມານວ່າ,ລາຊາທີ່ເຄົາລົບນັບຖື,ເຈົ້າມີວິທະຍາກົນໂດຍບໍ່ມີຂອບເຂດ,ສາມາດພິຊິດແຖນຟ້າ,ນາຣົກໄດ້ໝົດ,ເຈົ້າຄວນເປັນເຈົ້າຄອງ 3 ໂລກ(ຟ້າ,ແຜ່ນດິນ,ທະເລ),ຫົວຜີມານໄດ້ຍິນແລ້ວດີໃຈຫຼາຍ,ຄຶດປຶດດຽວ,ອວ່າຍຕົວມາຖາມວ່າ,“ວິທະຍາກົນຂ້ອຍແມ່ນພິຊິດທັງ 3 ໂລກໄດ້ແທ້ຫວະ”,ແຕ່ວ່າ,ຈຸດອ່ອນຂອງຂ້ອຍແມ່ນໃຜກໍບໍ່ຮູ້ແດ່.ນາງຈົງບຸ ກໍຖາມອີກວ່າ,ລາຊາມີວິທະຍາກົນໃຫຍ່ໂຕມະໂຫລານຄືແນວນີ້,ເປັນຫຍັງຍັງມີຈຸດອ່ອນແດ່?ຫົວຜີມານເວົ້າກະຊິບຕອບວ່າ,ຂ້ອຍຢ້ານຜູ້ອື່ນຫລົກຜົມຂ້ອຍມັດຄໍຂ້ອຍ,ກໍຈະເຮັດໃຫ້ຕົວກັບຫົວແຍກອອກກັນ,ນາງຈົງບຸຕັ້ງ ຕີຖາມວ່າ,ສາມາດພິຊິດ 3 ໂລກເປັນຫຍັງຢ້ານເສັ້ນຜົມນ້ອຍໆເສັ້ນໜຶ່ງ?ຫົວຜີມານເວົ້າກະຊິບວ່າ,ເຖິງວ່າເສັ້ນຜົມໜ້ອຍກໍຕາມ,ມັນສາມາດມັດຄໍຂ້ອຍຂາດໄດ້.ຂ້ອຍກໍບໍ່ມີຊີວິດ ແລະ ຕ້ອງຕາຍ.

ຫລັງຈາກ ນາງຈົງບຸ ຍິນແລ້ວ,ກໍມີຄວາມຄິດອອກມາຢ່າງລັບໆ,ນາງສືບຕໍ່ເຫວັ້ນເຫຼົ້າໃຫ້ຫົວຜີມານຕໍ່ໄປ,ຈົນເຖິງມັນເມົາເຫຼົ້ານອນຫລັບດີ,ຂະນະນີ້ນາງຫລົກເສັ້ນຜົມເສັ້ນໜຶ່ງອອກຈາກຫົວຜີມານຢ່າງລະມັດລະວັງ,ມັດໃສ່ຄໍຂອງຫົວຜີມານ,ຫົວຂອງຫົວຜີມານກໍຕົກລົງສູ່ດິນໂລດ,ກາຍເປັນກຸ່ມໄຟກຸ່ມໜຶ່ງໄໝ້ແຮງຂຶ້ນ ແລະ ໄມ້ລາມອອກຂຶ້ນຢ່າງໄວ.ຂະນະນີ້,ນາງຈົງບຸ ອຸ້ມເອົາຫົວຂອງຜີມານຂຶ້ນມາໂລດ,ແປວໄຟໃນແຜ່ນດິນກໍດັບມົດໂລດ,ແຕວ່າ,ເອົາຫົວປະໄວ້ຢູ່ທີ່ດິນ,ໄຟກໍໄໝ້ຂຶ້ນໂລດ,ຂະນະນີ້,ເມຍ 6 ຄົນກໍມາເຖິງ,ຜັດປ່ຽນກັນອຸ້ມເອົາຫົວ,ໄຟກໍບໍ່ໄໝ້ຂຶ້ນອີກແລ້ວ.

ຕໍ່ມາ,ນາງຈົງບຸ ກັບຄືນສູ່ເມືອງຄົນ,ແຕ່ວ່າ,ນາງຍັງຄົງມີຮອຍເລືອດເຕັມຕົວ,ຜູ້ຄົນທັງຫຼາຍເພື່ອລ້າງຮອຍເລືອດຂອງນາງໃຫ້ສະອາດ,ພາກັນຫົດນ້ຳໃສ່ນາງ,ຈົນເຖິງຮອຍເລືອດລ້າງສະອາດແລ້ວ,ນາງຈົງບຸ ດຳລົງຊີວິດຜ່າສຸກຢູ່ໃນເມືອງຄົນ.ຫລັງຈາກ ນາງຈົງບຸ ເຖິງແກ່ກຳໄປແລ້ວ,ຜູ້ຄົນທັງຫຼາຍເພື່ອລະນຶກ ນາງຈົງບຸ,ໃນເວລາບຸນປີໃໝ່ນັ້ນພາກັນຫົດນ້ຳໃສ່ກັນ,ລ້າງຖິ້ມສິ່ງເປື້ອນເປິເທິງຕົວ,ຕ້ອນຮັບປີໃໝ່ສີລິມຸງຄຸນທີ່ຈະມາເຖິງ.

# SKY SUPERMARKET 入驻爱的市场




ຕະຫຼາດໄອເຕັກ 愛的商場 ITECC MARKET CHỢ ITECC

**ທ່າແຮງ**

1.ທ່າແຮງດ້ານທີ່ຕັ້ງ:ເປັນຊັບພະສິນຄ້າແບບກວມລວມທີ່ໃຫຍ່ທີ່ສຸດໃນປະເທດ,ການຄົມມະນາຄົມສະດວກສະບາຍ,ຫ່າງຈາກໃຈກາງເມືອງປະມານ10ນາທີ. ໄລຍະຫ່າງທາງຊື່ ຈາກທາດຫລວງປະມານ2000ແມັດ,ຫ່າງຈາກຫໍປະຊຸມແຫ່ງຊາດ20ແມັດ,ຈຳນວນຄົນ-ມາແຕ່ລະມື້ບໍ່ຫລຸດ30,000ເທື່ອຄົນ.

2.ທ່າແຮງດ້ານສິ່ງອຳນວຍຄວາມສະດວກຄົບວົງຈອນ:ມີບ່ອນຈອດລົດໃຫຍ່3000ບ່ອນ,ບ່ອນຈອດລົດຈັກ20,000ບ່ອນ.ເນື້ອທີ່ດຳເນີນທຸລະກິດ70,000ຕາແມັດ.ມີເຄື່ອງເຢັນໃຫ້ບໍລິການຕະຫລອດມື້.ມີສູນຊັບພະສິນຄ້າຂະໜາດໃຫຍ່SKY SUPER MARKET ໂດຍການລົງທຶນຈາກຣັງກົງ ເປັນຜູ້ບໍລິຫານ.ມີສິນຄ້າເຄື່ອງນຸ່ງ,ເຄື່ອງສຳອາງ,ເຄື່ອງເພັດປະດັບ ແລະ ເຄື່ອງໄອທີໂທລະສັບຕ່າງໆ ໃຫ້ທ່ານເລືອກຊື້.ເປັນຮ້ານຄ້າປອດພາສີພຽງຮ້ານດຽວໃນປະເທດ,ມີເຂດໃຫ້ບໍລິການອາຫານທີ່ໃຫຍ່ທີ່ສຸດໃນປະເທດ ແລະ ມີສວນນ້ຳທີ່ໃຫຍ່ທີ່ສຸດໃນປະເທດ ຄອຍບໍລິການທ່ານ. ມີຫ້ອງຈັດງານລ້ຽງ - ງານດອງ ແລະ ລົດທ່ຽວຊົມ ຄອຍໃຫ້ບໍລິການທ່ານ. ເປັນສູນຊັບພະສິນຄ້າທີ່ໃຫຍ່ທີ່ສຸດໃນປະເທດ ທີ່ໃຫ້ບໍລິການດ້ານການພັກຜ່ອນ,ການເລືອກຊື້ສິນຄ້າ,ການກິນ,ການນຸ່ງ- ຮົ່ມ, ທີ່ພັກອາໄສ, ການນຳໃຊ້ ແລະ ການເດີນທາງ ຢ່າງຄົບວົງຈອນ.

3.ທ່າແຮງດ້ານວິຊາສະເພາະ:ມີທີມງານບໍລິຫານ-ຄຸ້ມຄອງ ທີ່ມາຈາກຫລາຍຕົວເມືອງແຄມທະເລ ທີ່ພັດທະນາແລ້ວໃນທະວີບອາຊີ,ຊຶ່ງລ້ວນແຕ່ມີບົດຮຽນປະສົບການບໍລິຫານ-ຄຸ້ມຄອງການຄ້າຂະໜາດໃຫຍ່ ເປັນເວລາຫລາຍກວ່າ11ປີ, ມີຄວາມສາມາດໃນການຄຸ້ມຄອງ-ບໍລິຫານທີ່ດີເລີດ,ມີການວິເຄາະຕົວເລກການຕະຫລາດທີ່ແມ່ນຫຍຳ. ມີຄວາມສາມາດວິເຄາະການປ່ຽນແປງຂອງຕະຫລາດຢ່າງມີພິດໄຫວ.ເປັນກຳລັງໜຸ່ນຫລັງທີ່ແຂງແກ່ນ ໃຫ້ແກ່ການລົງທຶນຂອງທ່ານ.

4.ທ່າແຮງດ້ານລາຄາ:ລູກຄ້າທີ່ເຂົ້າມາຈັບຈອງຮ້ານຂອງພວກເຮົາ ຈະໄດ້ຮັບການຍົກເວັ້ນຄ່າບໍລິການ-ຄຸ້ມຄອງ,ຄ່າອານາໄມ,ຄ່າໄຟຟ້າ-ນ້ຳປະປາ,ເຊິ່ງທ່ານຈະບໍ່ໄດ້ຮັບພາລະຄ່າໃຊ້ຈ່າຍໃດໆອີກ.ຄ່າເຊົ່າຮ້ານສູງສຸດພຽງແຕ່88ໂດລາສະຫາລັດ/ແມັດກະເລ. ລູກຄ້າທີ່ເຊັນສັນຍາແລ້ວ ຈະໄດ້ຮັບຄູປ່ອງຊື້ສິນຄ້າໃນຊັບພະສິນຄ້າພວກເຮົາ ເຊິ່ງມີມູນຄ່າສູງສຸດ 1,000,000 ກີບ .ມີຄ່າເຊົ່າຫລາຍປະເພດໃຫ້ທ່ານເລືອກ,ເພື່ອອຳນວຍຄວາມສະດວກໃຫ້ແກ່ການໝູນວຽນເງິນທຶນຂອງທ່ານ

5.ທ່ານແຮງດ້ານເວລາ: ເວລາຄືເງິນ-ເງິນຄືເວລາ,ພວກເຮົາເປີດກິດຈະການ30ວັນ/ເດືອນ, 12ຊົ່ວໂມງ/ມື້ , ມີໄລຍະເຊົ່າຫລາຍປະເພດໃຫ້ທ່ານເລືອກ,ໄລຍະເວລາເຊົ່າສັ້ນທີ່ສຸດແມ່ນ1ປີ, ສາມາດຕອບສະໜອງຄວາມຕ້ອງການການລົງທຶນຂອງທ່ານໄດ້ຕະຫລອດເວລາ. ພວກເຮົາໃຫ້ຄຳໝັ້ນສັນຍາວ່າ ທຸກໆຮ້ານທີ່ໃຫ້ເຊົ່າຈະບໍ່ມີການຊື້-ຂາຍຮ້ານເດັດຂາດ,ມີແຕ່ໃຫ້ເຊົ່າເທົ່ານັ້ນ,ຊຶ່ງສາມາດຫລຸດຜ່ອນການໃຫ້ເຊົ່າຕໍ່ຂອງນັກລົງທຶນ,ເພື່ອເປັນການຫລຸດຜ່ອນຄວາມກົດດັນດ້ານຄ່າເຊົ່າໃຫ້ແກ່ລູກຄ້າ.

招商电话 ：020 － 5657 6161； 020 － 5657 5252. 座机：030 － 990 6666.

地址：爱的购物广场B1楼

# SKY SUPERMARKET ໄດ້ເປີດໃຫ້ບໍລິການແລ້ວໃນ ITECC MARKET

SKY supermarket






I. ເງື່ອນໄຂໃນການຊຳລະເງິນຄ່າເຊົ່າຮ້ານ

1. ເນື້ອທີ່ຂອງຮ້ານໃນ SYK SUPERMARKET ບໍ່ຄືກັນ, ທີ່ຕັ້ງກໍບໍ່ຄືກັນ, ດັ່ງນັ້ນ ລາຄາເຊົ່າກໍຈະບໍ່ຄືກັນ, ເຊິ່ງສາມາດຈັດແບ່ງເປັນປະເພດຕ່າງໆດັ່ງລຸ່ມນີ້: (ເບິ່ງໃນແຜນທີ່ໜ້າພຽງ ທີ່ຄັດຕິດມາພ້ອມ).

ປະເພດ A: 88 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ B: 78 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ C: 68 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ D: 58 ໂດລາສະຫະລັດ ຕໍ່ ແມັດກາແລ

II. ນະໂຍບາຍພິເສດດັ່ງລຸ່ມນີ້:

A: ຊຳລະຄ່າເຊົ່າລ່ວງໜ້າ 3 ເດືອນ, ເງິນມັດຈຳລ່ວງໜ້າ 6 ເດືອນ, ສາມາດໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 300.000 ກີບ).

B: ຊຳລະຄ່າເຊົ່າລ່ວງໜ້າ 1 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 3%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 500.000 ກີບ).

C: ຊຳລະຄ່າເຊົ່າລ່ວງໜ້າ 2 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 7%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 800.000 ກີບ).

D: ຊຳລະຄ່າເຊົ່າລ່ວງໜ້າ 3 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 10%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ປີ (ມູນຄ່າ 1.000.000 ກີບ).

**一：铺位租赁价格付款条件**

1:SKY SUPERMARKET面积不同，位置不同，所以定价也就不 同，具体如下几种类型。(附平面图所示)

A类型每平方米SUD 88$元 B类型每平方米SUD 78$元

C类型每平方米SUD 68$元 D类型每平方米SUD 58$元

**二:优惠细则如下:**

A:按所选类型位置交纳3个月租金,6个月押金.可免费获得 SKY购物卡一张(价值300.000K)

B:按所选类型位置一次性交纳一年租金,可获得该金额的3% 的租金优惠.再送SKY购物卡一张(价值500.000K)

C:按所选类型位置一次性交纳两年租金,可获得该金额的7% 的租金优惠.再送SKY购物卡一张(价值800.000)

D:按所选类型位置一次性交纳三年租金,可获得该金额的 10%的租金优惠.再送SKY购物卡一张(价值1.000.000K):



ເບີໂທສອບຖາມ : 020 － 5657 6161; 020 － 5657 5252 ເບີຕັ້ງໂຕະ : 030 － 990 6666

ສະຖານທີ່ : ຊັ້ນ B1 ຮ້ານຊັບປະສິນຄ້າລາວໄອເຕັກ

# SKY SUPERMARKET 入驻爱的市场

## ແນະນຳຫຍໍ້ກ່ຽວກັບ SKY SUPERMARKET

ບໍລິສັດ SKY supermarket ຮຸ້ນສ່ວນຮັບຜິດຊອບ ຈຳກັດ (ສາຂາປະຈຳປະເທດລາວ) ສ້າງຕັ້ງໃນປີ 2014 ເປັນບໍລິສັດແບບໃໝ່ທີ່ສ້າງຕັ້ງຂື້ນດ້ວຍເງິນລົງທຶນຂອງ ສປ ຈີນ ແລະ ຮົງກົງ. ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານ ແລະ ຂົງເຂດຕ່າງໆໃນສັງຄົມ, ໄດ້ກາຍມາເປັນຮ້ານຊັບພະສິນຄ້າທີ່ໃຫຍ່ທີ່ສຸດ ແລະ ດີທີ່ສຸດຂອງປະເທດ SKY supermarket (ITECC Branch, 6300 ຕາແມັດ 8 ເຖິງເວລານັ້ນ, ສາມາດສະໜອງ 100 ກວ່າຕຳແໜ່ງງານໃຫ້ກັບທ້ອງຖິ່ນ, ຈະກາຍເປັນສູນການຄ້າທີ່ໃໝ່ອ່ຽມໃຫ້ກັບປະຊາຊົນລາວ.

ບໍລິສັດ SKY ຖືເອົາການພັດທະນາເສດຖະກິດ ແລະ ສ້າງຄວາມຈະເລີນຮຸ່ງເຮືອງໃຫ້ກັບຕະຫຼາດເປັນໜ້າທີ່ຂອງຕົນ ບໍລິສັດ SKY ຈະຜ່ານການບໍລິຫານແບບວິຊາຊີບ, ການຄຸ້ມຄອງແບບເປັນລະບົບ, ການບໍລິການດ້ວຍມາດຕະຖານ ເພື່ອສ້າງເປັນວິສາຫະກິດດີເດັ່ນທີ່ທັນສະໄໝ ໂດຍຖືເອົາ ' ຜົນປະໂຫຍດຂອງລູກຄ້າເປັນຈຸດເລີ່ມຕົ້ນ, ຖືເອົາຊື່ສຽງຂອງບໍລິສັດເປັນຈຸດຢືນ " ເປັນຫຼັກການພື້ນຖານຂອງການເຮັດວຽກ, ສະໜອງການບໍລິການທີ່ດີເດັ່ນຢ່າງຮອບດ້ານ ແລະ ຫລາຍສະດັບໃຫ້ກັບລູກຄ້າ.

ປັດຈຸບັນ ບໍລິສັດ SKY ພວມອອກແຮງສ້າງສູນການຄ້າຂະໜາດໃຫຍ່ແຫ່ງທຳອິດຂອງລາວ ຄື SKY supermarket ບໍລິສັດ SKY ຈະນຳເອົາແນວຄວາມຄິດການບໍລິຫານວິສາຫະກິດຂາຍຍ່ອຍແບບສາກົນປະສານສົມທົບກັບຈຸດພິເສດຂອງຕະຫຼາດຂອງລາວ ເພື່ອສ້າງໃຫ້ເປັນສູນການຄ້າທີ່ມີການບໍລິການທີ່ດີເດັ່ນ, ມີລາຄາສິນຄ້າທີ່ຖືກ ແລະ ມີປະເພດສິນຄ້າທີ່ອຸດົມສົມບູນ ເພື່ອປະຊາຊົນລາວສາມາດສຳພັດກັບວິຖີຊີວິດຊອບປິງກາງເມືອງທີ່ທັນສະໄໝດ້ວຍຕົວເອງ. ຮ່ວມມືກັນກັບຮ້ານຄ້າທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຜົນປະໂຫຍດ ແລະ ຊັບສິນຮ່ວມກັນ.

SKY SUPERMART 股份有限责任公司（老挝分公司）成立于 2014 年，以中国内地及香港投资资金成立的新型公司。在当地政府及社会各界朋友的鼎力支持下，建成国内最大最好的超级市场------SKY SUPERMART(ITECC branch，6300 平方米)。届时为当地直接提供就业岗位 100 多个。将为老挝人民呈现一个全新的购物中心。

SKY 以发展经济，繁荣市场为己任。SKY 将通过专业化经营，规范化管理，标准化服务，打造现代优秀企业。本着‘以顾客利益为出发点，以公司信誉为立足点；的工作准则，为顾客提供全方位，多层次的优质服务。

现 SKY 全力精心打造老挝首家标准化大型购物中心----SKYSUPERMART。SKY 将以国际化零售企业的经营理念，结合老挝市场和自身特点，精心打造以优质的服务，低廉的价格，丰富的商品为一体的商业购物中心。让老挝人民亲身体验都市时尚购物生活理念。与国内外商家携手共创双赢局面和财富前程！



招商电话 ：020 － 5657 6161；020 － 5657 5252.　座机：030 － 990 6666.

地址：爱的购物广场B1楼

# ບໍລິສັດລາວເຈແລ່ມເຈີຈຳກັດ

## 老挝成捷企业有限公司







ທ່ານ ຮວງ ຈິນຜູ ປະທານບໍລິສັດ

黄金浦 董事长



ທີ່ຢູ່:ຫຼັກ 8 ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ

ເບີໂທ: 856-21-314880

ມືຖື: 856-20-55763908

ແຟກ: 856-21-314882

昆明门市部：昆明市白龙路世博大道387号豪都家具三楼

电话：13759179402

老挝厂址：老挝万象市塔德路八公里处

电话：856-21-314880

856-20-55763908

传真：856-21-314882









# 云南鼎顺货运代理有限公司

鼎顺货运 DINGSHUN LOGISTICS

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线 大型项目配套物流**

**海运、陆运、空运、国际运输、物资采购 保险代理、单证缮制、代理报关、外汇结算，提供门到门服务**

**Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.**

**Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service**









Http：www.dingshun88.com E-MAIL：168606284@QQ.COM
Customer QQ：1459997464、168606284 TEL：0086-871-68381415
ADD:No.11C Entrance2 Building 7th Xichunyuan
Century Town Kunming Province Yunnan China

网站：www.dingshun88.com E-MAIL：168606284@QQ.COM
商务QQ：1459997464、168606284 电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ

# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ,ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໄລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ,ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。







总经理：张惠平先生

ທ່ານ ຈາງຮຸ້ຍຜິງ

**主营业务**

★国际货代、货物进出口
★中国—老挝—泰国 专线往返海路、陆路运输
★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ

★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ

★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com
传真FAX：0691-8811237 客服QQ：783667765
网站：www.ydjck.com E-mail: 783667765@qq.com
老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）
ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918 电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

# 云南阳光道桥股份有限公司
## YUNNAN SUNNY ROAD & BRIDGE CO.,LTD
## ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດ




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກຳສ້າງທາງ ແລະ ມີສິດດຳເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສຳເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທຳອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

地址：中国 昆明市官南大道1588号
电话：0871-67017107 67017108
网址：WWW.YNROAD.COM

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107 67017108
ເວັບໄຊ: WWW.YNROAD.COM

做人守德 感恩做人 做事守道 负责做事
ເປັນຄົນຕ້ອງມີຄຸນສົມບັດ ຮູ້ຕອບບຸນແທນຄຸນ ເຮັດວຽກປະຕິບັດຕາມຫຼັກການ ກ້າແບກຫາບໜ້າທີ່ຮັບຜິດຊອບ






Wow ! ມາແລ້ວ
ໂປໂມຊັນ ພິເສດ

Grandly Open
On 2nd Dec. 2014

ສຳລັບ ບັດສະມາຊິກ
ຂອງ VIENTIANE CENTER*
( ຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່ພົວພັນກັບທາງພວກເຮົາໄດ້ )

**More Than One Hundred International Brands**
Head the list of Vientiane Center Brands

OMEGA PLATINUM cineplex The PIZZA Company

TONY MOLY benefit SHISEIDO Guy Laroche LONGINES Arrow
absorba bsc RADO ENFANT ESTÉE LAUDER Dior
Wacoal ELLE St.Andrews Wacoal Blouse Little Walcoal POPLINE
GUCCI CLINIQUE Mix-Self How LANCÔME MAC

Hotline/+856 20- 5922 5777 5922 6777

投资商：云南建工集团有限公司暨云南省海外投资有限公司
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.
吉达蓬集团公司
KRITTAPHONG GROUP CO.,LTD.

开发商：北隆赞湖综合发展有限公司
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.
◇Facebook:www.facebook.com/www.vientiane center.com.cn
◇Http:www.vclaos.com

项目地址：老挝万象市库央路
PROJECT ADDRESS:KHOU VIENG ROAD, VIENTIANE, LAOS

ການບິນລາວ
Lao Airlines

# More Miles, More Privileges







## ChamPa MuangLao Member card

**Gold Card**




**Silver Card**




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

ໂຮງແຮມເມືອງທອງ
Muangthong Hotel
Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays
Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com